# ປະຕູ ແຫ່ງ ປັນຍາ



# "ປະຕູແຫ່ງປັນຍາ"

ນີ້ຄື:

ສຸພາສິດ

ຂອງທ່ານ ຊາໂລໂມນ

ກະສັດແຫ່ງປະເທດ ອິດສະລາເອນ

# ຄຳນຳ

ຄະນະຜູ້ແປມີຄວາມພາກພູມໃຈສະເໜີປຶ້ມ "ປະຕູແຫ່ງປັນຍາ" ຫົວນີ້ມາຍັງຜູ້ອ່ານ ໂດຍຫວັງວ່າ ຈະເປັນບໍ່ເກີດແຫ່ງຄວາມຮູ້ ແລະສະຕິປັນຍາໃຫ້ແກ່ຊາວລາວບັນດາເຜົ່າທົ່ວປະເທດ (ສປປ ລາວ) ແລະສຸພາສິດເຫຼົ່ານີ້ຈະເພີ່ມເຂົ້າກັບສຸພາສິດທີ່ເປັນມໍລະດົກອັນອຸດົມສົມບູນຂອງລາວທີ່ມີຢູ່ແລ້ວ.

ທ່ານຜູ້ອ່ານທີ່ນັບຖື ດັ່ງຕໍ່ໄປນີ້ ແມ່ນຕົວຢ່າງບາງຂໍ້ຂອງສຸພາສິດທີ່ສຳຄັນ

ຂໍໃຫ້ທ່ານຈົ່ງອ່ານຊ້າໆ:

- ລູກຊາຍທີ່ມີປັນຍາເຮັດໃຫ້ພໍ່ຍິນດີ ແຕ່ລູກຊາຍທີ່ໂງ່ເປັນຄວາມໜັກໃຈຂອງແມ່. (ບົດ 10:1)
- ຄົນທີ່ມີສະຕິປັນຍາຈະໄດ້ຮັບລາງວັນເພາະສະຕິປັນຍາຂອງຕົນ (ບົດ 9:12)
- ບຳເໜັດຂອງຄວາມຖ່ອມໃຈ ແລະຄວາມຢຳເກງພຣະຜູ້ເປັນເຈົ້າ ຄືຊັບສົມບັດ ກຽດຕິຍົດ ແລະຊີວິດ. (ບົດ 22:4)
- ຜູ້ໃດທີ່ພົບປັນຍາກໍພົບຊີວິດ, ແລະໄດ້ຮັບຄວາມພໍພຣະໄທຈາກພຣະຜູ້ເປັນເຈົ້າ.

ແຕ່ວ່າຜູ້ທີ່ເຮັດບາບຕໍ່ສູ້ປັນຍາກໍເຮັດຜິດຕໍ່ຈິດໃຈຕົນເອງ: ບັນດາຜູ້ທີ່ກຽດຊັງປັນຍາ ກໍຮັກຄວາມຕາຍ ແລະຜູ້ທີ່ພົບສະຕິປັນຍາຈະໄດ້ພົບຊີວິດທີ່ແທ້ຈິງ (ບົດ 8:35-36).

ສຸພາສິດຢູ່ໃນປຶ້ມຫົວນີ້ໄດ້ແປມາຈາກຕົ້ນສະບັບເກົ່າແກ່ ທີ່ເປັນພາສາເຮບເລີ ຊຶ່ງຊຽນໂດຍ **ກະສັດ ຊາໂລໂມນ**. ທາງຄະນະຜູ້ແປເຫັນວ່າ ປຶ້ມເກົ່າແກ່ນີ້ບັນຈຸຄວາມຮູ້ ຄວາມສະຫຼາດອັນມີຄ່າຫຼວງຫຼາຍສຳລັບມະນຸດທົ່ວໂລກ. ແມ່ນວ່າມະນຸດເຮົາອາໄສຢູ່ໃນໂລກປະຈຸບັນທີ່ສັບສົນນີ້ ກໍຍັງຕ້ອງການສະຕິປັນຍາອັນອຸດົມສົມບູນທີ່ມີໃນປຶ້ມຫົວນີ້. ທ່ານຜູ້ທີ່ເປັນຊາວໜຸ່ມກໍຈະປະສົບຄວາມສຳເລັດ ຖ້າທ່ານໄດ້ປະຕິບັດຕາມຄຳສັ່ງສອນເຫຼົ່ານີ້ ຢ່າງເອົາໃຈໃສ່. ທ່ານຜູ້ທີ່ເປັນພໍ່ແມ່ກໍຈະຮຽນຮູ້ວິທີການສັ່ງສອນລູກ. ທ່ານຜູ້ທີ່ຮັບໃຊ້ໃນວົງການລັດຖະບານກໍຈະຮູ້ຫລັກການເປັນຜູ້ນຳບ້ານເມືອງ. ທ່ານຜູ້ທີ່ມີການສຶກສາກໍ ຈະສາມາດສະຫຼາດຂຶ້ນກວ່າເກົ່າເພາະຄຳສັ່ງສອນເຫຼົ່ານີ້. ທ່ານຜູ້ທີ່ທົນທຸກທໍລະມານກໍຈະພົບອິດສະລະພາບ ແລະຄວາມສະຫງົບສຸກອັນຖາວອນ ຖ້າທ່ານປະຕິບັດຕາມຄຳສັ່ງສອນເຫຼົ່ານີ້ຈົນເຖິງທີ່ສຸດ.

ທ່ານຜູ້ອ່ານທີ່ເຄົາລົບ, ຈົ່ງຊອກຫາຫົນທາງແຫ່ງສະຕິປັນຍາ, ຈົ່ງເອົາໃຈໃສ່ຄົ້ນຫາຄວາມເຂົ້າໃຈ, ຈົ່ງສະແຫວງຫາສະຕິປັນຍານີ້ ດັ່ງທີ່ທ່ານສະແຫວງຫາຊຸມສົມບັດ, ແລ້ວທ່ານຈະໄດ້ຮູ້ຈັກຢຳເກງພຣະເຈົ້າ ແລະຈະໄດ້ເຂົ້າໃຈເຖິງຄວາມຈິງ. ຜູ້ທີ່ພົບຄວາມສະຫຼາດ ແລະຄວາມເຂົ້າໃຈກໍຈະບໍ່ລືມຫຼືລີກຫ່າງຈາກສິ່ງເຫຼົ່ານັ້ນເລີຍ.

## ກະສັດຊາໂລໂມນແມ່ນໃຜ?

ກະສັດຊາໂລໂມນໄດ້ປົກຄອງຊົນຊາດອິດສະລາເອນເປັນເວລາ 40 ປີ, ຈາກປີ 971 ເຖິງປີ 931 ກ່ອນ ຄ.ສ. ເພິ່ນໄດ້ເປັນຄົນທີ່ສະຫຼາດກວ່າໝູ່ໝົດໃນສະໄໝນັ້ນ, ໄດ້ຂຽນສຸພາສິດ 3000 ຂໍ້ ແລະບົດເພງຫຼາຍກວ່າ 1000 ເພງ. ເພິ່ນໄດ້ເປັນນັກພຶກສາສາດ ແລະນັກສັດຕະວະສາດທີ່ໄດ້ສາມາດອະທິບາຍເລື່ອງພືດ ແລະສັດຕ່າງໆໄດ້ຢ່າງເລິກເຊິ່ງ. ເພິ່ນໄດ້ເປັນຜູ້ປົກຄອງ ແລະຜູ້ພິພາກສາຊົນຊາດອິດສະລາເອນ. ຄວາມຮູ້ຂອງເພິ່ນບໍ່ມີສິ່ງວັດແທກໄດ້ປຽບຄືກັນກັບເມັດຊາຍຢູ່ຮິມທະເລ, ແລະຍິ່ງໃຫຍ່ກວ່າພວກນັກປາດທາງທິດຕາເວັນອອກທີ່ໄດ້ມີຊື່ສຽງໃນສະໄໝນັ້ນ. ເວລາເພິ່ນຂຶ້ນປົກຄອງໃໝ່, ເພິ່ນໄດ້ເຂົ້າໃຈວ່າ ຍັງເປັນເດັກ ແລະບໍ່ທັນມີຄວາມສາມາດພໍເປັນຜູ້ນຳຊາດໄດ້, ຈຶ່ງໄດ້ກາບທູນພຣະເຈົ້າ, ຜູ້ສ້າງສະຫວັນ ແລະແຜ່ນ ດິນໂລກ, ຂໍໃຫ້ພຣະອົງໂຜດປະທານໃຫ້ເພິ່ນມີຄວາມສະຫຼາດຫຼັກແຫຼມ. (I ກະສັດ 3:9) ພຣະເຈົ້າໄດ້ພໍໃຈຕໍ່ຄຳອ້ອນວອນຂອງເພິ່ນ,ຈຶ່ງໄດ້ໂຜດໃຫ້ເພິ່ນມີຄວາມເຂົ້າໃຈການຕັດສິນແບບຍຸຕິທຳ (I ກະສັດ. 3:11) ແລະສາມາດປົກຄອງປະຊາຊົນຂອງຕົນ. ນອກຈາກຄວາມສະຫຼາດຫຼັກແຫຼມແລ້ວ, ພຣະເຈົ້າຍັງໄດ້ປະທານຄວາມອຸດົມສົມບູນ ແລະກຽດສັກສີໃຫ້ຈົນເກີນກວ່າຊາດໃດໆໃນສະໄໝນັ້ນ. ຄວາມອຸດົມສົມບູນຂອງເພິ່ນມີຢ່າງຫຼວງຫຼາຍຈົນເງິນໃນປະເທດຂອງເພິ່ນນັ້ນຖືເປັນໂລຫະທຳມະດາສາມັນ. ແຕ່ໜ້າເສຍດາຍ, ແມ່ນວ່າເພິ່ນໄດ້ເປັນຄົນສະຫຼາດຫຼັກແຫຼມກໍຕາມ, ເພິ່ນກໍບໍ່ໄດ້ປະຕິບັດຢ່າງລະມັດລະວັງຕາມຄຳສັ່ງສອນຂອງຕົນ, ຈຶ່ງໄດ້ເຮັດໃຫ້ເພິ່ນຕ້ອງໄດ້ຫຼົ້ມຈົມ ແລະໃນທີ່ສຸດອານາຈັກກໍໄດ້ຖືກແບ່ງແຍກ.

# ສາລະບານຫົວເລື່ອງຕ່າງໆ

ຖ້າທ່ານມີຄວາມສົນໃຈໃນເລື່ອງໃດເລື່ອງນຶ່ງເປີດໄດ້ຕາມບົດ ແລະຂໍ້ທີ່ລະບຸໄວ້ຢ່າງເຊັ່ນໝາຍເລກ ທີ່ຂຽນໄວ້ກ່ອນ ":" ໝາຍເຖິງບົດ ແລະໝາຍເລກທີ່ຂຽນຫລັງ ":" ໝາຍເຖິງຂໍ້. "16:7" ໝາຍຄວາມວ່າບົດທີສິບຫົກຂໍ້ເຈັດ ຈຶ່ງຈະມີເນື້ອໃນກ່ຽວກັບການແກ້ໄຂຄວາມຜິດຖຽງກັນ.

1. ການແກ້ໄຂຄວາມຜິດຖຽງກັນ (SETTLING CONFLICT WITH OTHERS)
   13:10; 16:7; 17:9,14; 19:11; 20:3; 25:9-10; 30:32-33.

2. ການຊ່ວຍເຫລືອຄົນທຸກຍາກ (CONCERN FOR THE POOR)
   19:17; 21:13; 22:16, 22; 28:8, 27; 29:7

3. ການນັບຖືແລະເຊື່ອຟັງພໍ່ແມ່ (FAMILY AND RESPECTING PARENTS)
   1:8-9; 4:1-4; 15:20; 19:13; 20:11,20; 23:22,24; 27:11; 28:24; 29:3; 30:11,17.

4. ການນິນທາ (GOSSIP)
   11:13; 16:28;17:4,9; 18:8; 20:19; 25:9,18,23; 26:20-23.

5. ການປາກເວົ້າທີ່ຖືກຕ້ອງ (TONGUE AND SPEECH)
   4:24; 10:11, 13, 19, 20, 21, 31, 32; 12:13, 14, 18, 19, 22, 25; 13:2, 3; 16:10, 13, 21, 23, 24, 27; 17:7, 14, 27-28; 18:4, 6-7, 13, 20-21; 19:1, 9; 21:23; 23:9, 16; 25:9-10, 11, 23; 26:4-5, 21, 26, 28; 27:5; 29:20.

6. ການປົກຄອງປະເທດຊາດ (GOVERNING A NATION)
   11:14; 14:34; 16:12; 17:26; 20:8, 18, 28; 21:1, 30; 24:6; 25:5, 15; 28:12, 15, 16, 28; 29:2, 4, 8, 12, 14, 18, 26; 31:4-5

7. ການລ້ຽງລູກ (RAISING CHILDREN)
   10:13; 13:24; 19:13,18; 20:11,30; 22:6,15; 23:13,14; 29:15,17.

8. ຄວາມຂີ້ຄ້ານ (LAZINESS, HARD WORKING FARMER)
   6:611; 10:4, 5, 26; 12:11, 24, 27; 13:4; 14:23; 15:19; 18:9; 19:15, 24; 20:4, 13; 21:5, 25-26; 22:13; 23:21; 24:30-34; 26:13-16; 28:19.

9. ຄວາມໂງ່ກັບຄວາມສະລາດ (FOOLISHNESS AND WISDOM)
1:7; 3:35; 9:7-8, 13; 10:1, 10, 18; 12:15, 16, 23; 13:19, 20;
14:1, 7, 9, 16, 24, 29; 15:5, 20; 17:10, 12, 16, 21, 25, 28; 18:2;
19:1, 3, 13; 20:3; 23:9; 24:7; 26:3-9, 11, 12; 27:22; 28:26; 29:11, 20.

10. ຄວາມຊື່ສັດ (HONESTY)
4:24-25; 11:1; 12:22; 16:11; 20:10, 17, 23; 21:6; 28:8, 16, 22;
29:27.

11. ຄວາມຊອບທຳ, ຄົນຊອບທຳ, ທາງຂອງຄວາມຊອບທຳ (RIGHTEOUS NESS, RIGHTEOUS PERSON; RIGHTEOUS WAY)
2:20; 3:33; 4:18; 9:9; 10:2, 3, 7, 11, 16, 20, 21, 24, 25, 28, 30- 31, 32;
11:5, 6, 8, 9, 10, 18, 19, 21, 23, 28, 30, 31; 12:3, 5, 7,
10, 12, 13, 21, 26, 28; 13:5, 6, 9, 21, 22, 25; 14:19, 32, 34; 15:6,
28, 29; 16:13; 17:26; 18:5, 10; 20:7; 21:3, 12, 15, 18, 26; 28:1,
12, 28; 29:7, 16, 27.

12. ຄວາມຍຸຕິທຳ (JUSTICE)
17:15, 23, 26; 18:5, 17; 19:9; 20:8; 21:28; 24:23-24; 25:8, 18;
28:5, 21; 29:7, 26.

13. ຄວາມຖ່ອມໃຈລົງ (HUMILITY)
3:34; 10:8; 11:2; 12:15; 15:33 16:18; 19; 18:12; 21:24; 22:4;
25:67, 27; 27:2; 28:13; 29:23; 30:32.

14. ຄວາມຫວັງ (HOPE)
10:28; 13:12; 14:32; 23:18; 24:14.

15. ເງິນຄຳ ແລະຄວາມມັ່ງມີ (MONEY AND WEALTH)
10:2; 11:4; 13:11; 21:5, 6; 22:2; 23:4, 5, 21; 28:6, 20, 22.

# ສຸພາສິດ

## ບົດທີ 1
## ຄຸນຄ່າຂອງສຸພາສິດ

1 ສຸພາສິດຂອງຊາໂລໂມນ ບຸດຊາຍຂອງດາວິດ ກະສັດແຫ່ງອິດສະລາເອນ,
2 ເພື່ອໃຫ້ຮູ້ຈັກປັນຍາ ແລະຄຳສັ່ງສອນ, ເພື່ອສັງເກດຮູ້ຖ້ອຍຄຳຂອງ
ຄວາມເຂົ້າໃຈ,
3 ເພື່ອຮັບເອົາຄຳສັ່ງສອນໃນເລື່ອງສະຕິປັນຍາ, ໃນເລື່ອງຄວາມຊອບທຳ,
ຄວາມຍຸຕິທຳ, ແລະຄວາມທ່ຽງທຳ,
4 ເພື່ອໃຫ້ຄວາມຢັ່ງຮູ້ແກ່ຄົນທີ່ຮູ້ໜ້ອຍ, ໃຫ້ຄວາມຮູ້ຄວາມສະຫຼຽວສະຫຼາດ
ແກ່ຊາຍໜຸ່ມ,
5 ທັງນັກປາດຈະໄດ້ຍິນແລ້ວເພີ່ມຄວາມຮູ້ ແລະຄົນທີ່ມີຄວາມເຂົ້າໃຈຈະ
ໄດ້ ຄຳປຶກສາທີ່ສະຫຼາດ,
6 ເພື່ອໃຫ້ເຂົ້າໃຈສຸພາສິດ ແລະຄຳອຸປະມາຂອງເຂົາ ທັງຖ້ອຍຄຳຂອງ
ນັກປາດ ແລະຖ້ອຍຄຳອັນເລິກລັບຂອງເຂົາ.

7 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນບໍ່ເກີດແຫ່ງຄວາມຮູ້, ແຕ່ຄົນໂງ່
ໝິ່ນປະໝາດປັນຍາ ແລະຄຳສັ່ງສອນ.
8 ລູກຊາຍຂອງເຮົາເອີຍ ຈົ່ງຟັງຄຳສັ່ງສອນຂອງພໍ່ເຈົ້າ ແລະຢ່າປະຖິ້ມບັນຍັດ
ຂອງແມ່ເຈົ້າ,
9 ເພາະທັງສອງນັ້ນຈະເປັນກະໂຈມແຫ່ງພະຄຸນສວມຫົວຂອງເຈົ້າ ເປັນສາຍ
ສ້ອຍປະດັບຄໍຂອງເຈົ້າ.

10 ລູກຊາຍຂອງເຮົາເອີຍ ຖ້າຄົນບາບລໍ້ໃຈເຈົ້າ ຢ່າໄດ້ຍິນຍອມ.
11 ຖ້າເຂົາວ່າ "ມາກັບພວກເຮົາເຖີດ ໃຫ້ເຮົາຄອຍຖ້າເອົາເລືອດຄົນອອກ ໃຫ້
ເຮົາດັກໂຈມຕີຄົນບໍ່ມີຄວາມຜິດໂດຍບໍ່ມີເຫດຜົນ.
12 ໃຫ້ເຮົາກືນເຂົາທັງເປັນ ຄືຊຸມຝັງສົບ, ແລະກືນເຂົາທັງຕົວ ຄືຄົນເຫຼົ່ານັ້ນທີ່
ລົງໄປສູ່ແດນແຫ່ງຄວາມຕາຍ

13 ເຮົາຈະພົບຂອງປະເສີດທຸກຢ່າງ ເຮືອນຂອງເຮົາຈະເຕັມໄປດ້ວຍຂອງທີ່
ປຸ້ນມາໄດ້,
14 ຈົ່ງເຂົ້າສ່ວນກັບພວກເຮົາ, ເຮົາທຸກຄົນຈະມີເງິນຖົງດຽວກັນ".
15 ລູກຊາຍຂອງເຮົາເອີຍ ຢ່າຍ່າງໃນທາງນັ້ນກັບພວກເຂົາ, ຈົ່ງຫ້າມຕີນຂອງ
ເຈົ້າຈາກທາງຂອງເຂົາ,
16 ເພາະວ່າຕີນຂອງເຂົາແລ່ນໄປຫາຄວາມຊົ່ວຮ້າຍ ແລະເຂົາຟ້າວໄປເຮັດ
ໃຫ້ຄົນເລືອດຕົກຢາງອອກ.
17 ເພາະທີ່ຈະກາງຕາຂ່າຍໄວ້ໃຫ້ນົກເຫັນ ກໍບໍ່ມີປະໂຫຍດ.
18 ແລະຄົນເຫຼົ່ານີ້ຄອຍຖ້າເລືອດຂອງຕົນເອງ, ເຂົາດັກໂຈມຕີຊີວິດຂອງເຂົາເອງ.
19 ທາງຂອງບັນດາຜູ້ທີ່ໂລບມາກໂລພາຫາກຳໄລດ້ວຍຄວາມໂຫດຮ້າຍ
ທາລຸນກໍເປັນຢ່າງນີ້ແຫຼະ, ກຳໄລນັ້ນຈະກັດກິນຊີວິດຂອງຜູ້ທີ່ໄດ້ມັນມາ.

## ສຽງຮຽກຮ້ອງຂອງປັນຍາ

20 ປັນຍາຮ້ອງສຽງດັງຢູ່ທີ່ຖະໜົນ ແລະນາງ[1] ເປັ່ງສຽງຮ້ອງຕາມທີ່ສາທາລະນະ,
21 ນາງຮ້ອງອອກມາຈາກທີ່ປະຊຸມ ທີ່ທາງເຂົ້າປະຕູເມືອງ, ນາງກ່າວຖ້ອຍ
ຄຳຂອງນາງຢູ່ໃນເມືອງວ່າ:
22 "ຄົນທີ່ຮູ້ໜ້ອຍເອີຍ ເຈົ້າຈະຮັກຄວາມຊົ່ວຮ້າຍໄປດົນປານໃດ? ຄົນມັກຫຍໍ້
ຫຍັນຈະປິຕິຍິນດີໃນການຫຍໍ້ຫຍັນໄປດົນປານໃດ? ແລະຄົນໂງ່ຈະກຽດຊັງ
ຄວາມຮູ້ໄປດົນປານໃດ?
23 ຈົ່ງຫັນມາຟັງຄຳຕັກເຕືອນຂອງເຮົາ, ເບິ່ງເຖີດ! ເຮົາຈະຖອກວິນຍານຂອງ
ເຮົາໃຫ້ແກ່ເຈົ້າ ເຮົາຈະໃຫ້ຖ້ອຍຄຳຂອງເຮົາກະຈ່າງແຈ້ງແກ່ເຈົ້າ.
24 ເພາະເຮົາໄດ້ເອີ້ນແລ້ວ ແລະເຈົ້າໄດ້ປະຕິເສດເຮົາ, ເຮົາຢຽດມືຂອງເຮົາ
ອອກ ແຕ່ບໍ່ມີໃຜສົນໃຈ.
25 ແລະພວກເຈົ້າໄດ້ປະຖິ້ມບັນດາຄຳແນະນຳຂອງເຮົາ ແລະບໍ່ຍອມຮັບຄຳ
ຕັກເຕືອນຂອງເຮົາເລີຍ.
26 ຝ່າຍເຮົາຈະຫົວຫຍໍ້ຫຍັນຄວາມຈິບຫາຍຂອງເຈົ້າ, ເຮົາຈະຫຍໍ້ຫຍັນເມື່ອ
ສິ່ງທີ່ເຈົ້າຢ້ານມາກະທົບເຈົ້າ,

1 ຄຳວ່າ ນາງ ຕາມຄວາມໝາຍເດີມ ແມ່ນໝາຍເຖິງ ປັນຍາ.
ເບິ່ງ 3:15; 4:6-9,13; 7:4; 8:1-3; 9:1-4.

27 ເມື່ອສິ່ງທີ່ເຈົ້າຢ້ານທີ່ສຸດໄດ້ມາເໝືອນໄພພິບັດ ແລະການທຳລາຍໄດ້ມາ
ເໝືອນລົມຫົວກຸດ, ເມື່ອຄວາມຂັດສົນຈົນໃຈ ແລະຄວາມເຈັບປວດທີ່ຮຸນ
ແຮງມາເຖິງເຈົ້າ.
28 ເມື່ອນັ້ນພວກເຂົາຈະຮ້ອງຫາເຮົາ ແຕ່ເຮົາຈະບໍ່ຕອບ, ເຂົາຈະຊອກຫາເຮົາ
ຕັ້ງແຕ່ເຊົ້າ ແຕ່ເຂົາຈະບໍ່ພົບເຮົາ,
29 ເພາະວ່າພວກເຂົາໄດ້ກຽດຊັງຄວາມຮູ້ ແລະບໍ່ໄດ້ເລືອກເອົາຄວາມຢຳເກງ
ພຣະຜູ້ເປັນເຈົ້າ.
30 ພວກເຂົາບໍ່ຮັບຄຳແນະນຳຂອງເຮົາເລີຍ, ແຕ່ເຂົາໄດ້ໝິ່ນປະໝາດຄຳ
ຕັກເຕືອນຂອງເຮົາທັງໝົດ.
31 ເພາະສະນັ້ນເຂົາຈະກິນຜົນແຫ່ງທາງຂອງເຂົາ ແລະອີ່ມດ້ວຍກົນອຸບາຍ
ຂອງເຂົາເອງ.
32 ຄົນທີ່ຮູ້ໜ້ອຍຕາຍຍ້ອນການປະຕິເສດສະຕິປັນຍາ ແລະຄົນໂງ່ຖືກທຳລາຍ
ເພາະຄວາມອຸດົມສົມບູນຂອງເຂົາ.
33 ແຕ່ຄົນໃດທີ່ຟັງເຮົາຈະຢູ່ຢ່າງປອດໄພ ເຂົາຈະຢູ່ຢ່າງສະຫງົບສຸກບໍ່ຢ້ານ
ເຫດຮ້າຍອັນຕະລາຍໃດໆ".

24 / VII

## ບົດທີ 2

## ປະໂຫຍດຂອງປັນຍາ

ຫ້າມຈຳໜ່າຍ

1 ລູກຊາຍຂອງເຮົາເອີຍ ຖ້າເຈົ້າຮັບຖ້ອຍຄຳທັງຫຼາຍຂອງເຮົາ ແລະເຊື່ອງ
ບັນດາຂໍ້ຄຳສັ່ງຂອງເຮົາໄວ້ກັບເຈົ້າ.
2 ໃຫ້ຕັ້ງຫູຂອງເຈົ້າຟັງປັນຍາ ແລະນ້ອມໃຈຂອງເຈົ້າລົງຫາຄວາມເຂົ້າໃຈ,
3 ແລະຖ້າເຈົ້າຮ້ອງຫາຄວາມຮອບຮູ້ ແລະເປັ່ງສຽງຂອງເຈົ້າຮ້ອງຫາຄວາມ
ເຂົ້າໃຈ,
4 ຖ້າເຈົ້າຊອກຫາປັນຍາເໝືອນດັ່ງຊອກຫາເງິນ ແລະຄົ້ນຫາສິ່ງນັ້ນຄືຊອກ
ຫາຂຸມຊັບສົມບັດທີ່ເຊື່ອງໄວ້,
5 ແລ້ວເຈົ້າຈະເຂົ້າໃຈເຖິງຄວາມຢຳເກງພຣະຜູ້ເປັນເຈົ້າ ແລະພົບຄວາມຮູ້
ຂອງພຣະເຈົ້າ.

6 ເພາະພຣະຜູ້ເປັນເຈົ້າຊົງປະທານປັນຍາ ຄວາມຮູ້ ແລະຄວາມເຂົ້າໃຈມາ
ຈາກພຣະໂອດຂອງພຣະອົງ.
7 ພຣະອົງຊົງສະສົມສະຕິປັນຍາອັນດີໄວ້ໃຫ້ຄົນຊອບທຳ, ພຣະອົງຊົງເປັນ
ໂລ່ໃຫ້ແກ່ຜູ້ທີ່ດຳເນີນໃນຄວາມທ່ຽງທຳ.
8 ພຣະອົງຊົງຮັກສາວິທີທາງຂອງການຕັດສິນທີ່ຍຸຕິທຳ ແລະຊົງຄຸ້ມຄອງທາງ
ຂອງຄົນບໍລິສຸດຂອງພຣະອົງໄວ້
9 ແລ້ວເຈົ້າຈະເຂົ້າໃຈຄວາມຊອບທຳ ຄວາມຍຸຕິທຳ ແລະຄວາມທ່ຽງທຳ,
ຄືການດຳເນີນຊີວິດທີ່ດີທຸກຢ່າງ.
10 ເມື່ອປັນຍາຈະເຂົ້າມາໃນໃຈຂອງເຈົ້າ ແລະຄວາມຮູ້ຈະເປັນທີ່ປິຕິຍິນດີແກ່
ຈິດໃຈຂອງເຈົ້າ,
11 ຄວາມສະຫຼຽວສະຫຼາດຈະຄຸ້ມຄອງເຈົ້າ ແລະຄວາມເຂົ້າໃຈຈະປ້ອງກັນ
ຮັກສາເຈົ້າໄວ້,
12 ເພື່ອຊ່ວຍເຈົ້າໃຫ້ພົ້ນຈາກທາງຂອງຄົນຊົ່ວຮ້າຍ ຈາກຄົນທີ່ເວົ້າອຸບາຍຫຼອກລວງ,
13 ຄືຜູ້ທີ່ອອກຈາກທາງແຫ່ງຄວາມທ່ຽງທຳ ເພື່ອດຳເນີນໃນທາງແຫ່ງຄວາມ
ມືດ,
14 ຜູ້ປິຕິຍິນດີໃນການເຮັດຊົ່ວ ແລະມີໃຈຍິນດີໃນກົນອຸບາຍຂອງຄົນຊົ່ວ,
15 ຊຶ່ງທາງຂອງເຂົານັ້ນຄົດໂກງທັງໝົດ ແລະເຕັມໄປດ້ວຍອຸບາຍ,
16 ເພື່ອຊ່ອຍເຈົ້າໃຫ້ພົ້ນຈາກຍິງຊົ່ວ, ຈາກຍິງທີ່ເວົ້າປະຈົບປະແຈງ,
17 ຄືຍິງຜູ້ທີ່ໄດ້ປະຖິ້ມຄູ່ຄອງຂອງຕົນທີ່ໄດ້ມາເມື່ອຍັງສາວນັ້ນ ແລະລືມຄຳ
ໝັ້ນສັນຍາຂອງຕົນຕໍ່ພຣະເຈົ້າ.
18 ເພາະເຮືອນຂອງນາງຈົມລົງສູ່ຄວາມຕາຍ ແລະທາງຂອງນາງນຳໄປສູ່
ຊາວເມືອງຜີ.
19 ບັນດາຜູ້ທີ່ໄປຫານາງບໍ່ມີໃຜກັບມາຈັກຄົນດຽວ ຫຼືບໍ່ມີຜູ້ໃດກັບມາສູ່ທາງ
ແຫ່ງຊີວິດ.
20 ດັ່ງນັ້ນ ເຈົ້າຄວນຈະດຳເນີນໃນທາງຂອງຄົນດີ ແລະຮັກສາທາງຂອງຄົນ
ຊອບທຳ.
21 ເພາະວ່າຄົນທ່ຽງທຳຈະໄດ້ຢູ່ໃນແຜ່ນດິນ ແລະຄົນດີຮອບຄອບຈະຄົງຢູ່ໃນນັ້ນ.
22 ແຕ່ຄົນຊົ່ວຮ້າຍຈະຖືກຕັດອອກຈາກແຜ່ນດິນ ແລະຄົນລະເມີດຈະຖືກຖອນ
ຮາກອອກໄປ.

ບົດທີ 3

## ຜົນຂອງປັນຍາແລະການເຊື່ອຟັງ

1 ລູກຊາຍຂອງເຮົາເອີຍ ຢ່າລືມບັນຍັດຂອງເຮົາ, ແຕ່ໃຫ້ໃຈຂອງເຈົ້າຮັກສາ
ຄຳສັ່ງສອນຂອງເຮົາ,
2 ເພາະສິ່ງເຫຼົ່ານີ້ຈະເພີ່ມວັນເດືອນປີ ຊີວິດທີ່ຍືນຍາວນານ ແລະຄວາມສຸກ
ສົມບູນແກ່ເຈົ້າ.
3 ຢ່າໃຫ້ຄວາມເມດຕາ ແລະຄວາມຈິງປະຖິ້ມເຈົ້າ, ຈົ່ງຜູກມັນໄວ້ທີ່ຄໍຂອງ
ເຈົ້າ, ຈົ່ງຂຽນມັນໄວ້ທີ່ແຜ່ນຈາລຶກແຫ່ງຫົວໃຈຂອງເຈົ້າ.
4 ດັ່ງນັ້ນ ເຈົ້າຈະພົບຄວາມພໍໃຈ ແລະຄວາມເຂົ້າໃຈຮອບຄອບໃນສາຍຕາ
ຂອງພຣະເຈົ້າ ແລະມະນຸດດ້ວຍ.

5 ຈົ່ງວາງໃຈໃນພຣະຜູ້ເປັນເຈົ້າດ້ວຍສຸດໃຈຂອງເຈົ້າ ແລະຢ່າເຊື່ອໝັ້ນ
ຄວາມເຂົ້າໃຈຂອງຕົນເອງ.
6 ຈົ່ງຍອມຮັບຮູ້ພຣະອົງໃນທຸກທາງຂອງເຈົ້າ ແລະພຣະອົງຈະນຳທາງທັງ
ຫຼາຍຂອງເຈົ້າໃຫ້ຖືກຕ້ອງ.
7 ຢ່າຄິດວ່າຕົນສະຫຼາດ ຈົ່ງຢຳເກງພຣະຜູ້ເປັນເຈົ້າ ແລະຫັນໜີຈາກຄວາມ
ຊົ່ວຮ້າຍ.
8 ການເຮັດເຊັ່ນນີ້ຈະເຮັດໃຫ້ມີສຸຂະພາບທີ່ດີ ຕະຫລອດທັງກະດູກ ແລະ
ໄຂໃນຂໍ້ກະດູກຂອງຕົນ.
9 ຈົ່ງຖວາຍກຽດແກ່ພຣະຜູ້ເປັນເຈົ້າດ້ວຍຊັບສິນຂອງຕົນ ແລະດ້ວຍຜົນທຳ
ອິດຂອງການຜະລິດ ທັງໝົດຂອງເຈົ້າ.
10 ແລ້ວເລົ້າເຂົ້າຂອງເຈົ້າຈະເຕັມບໍລິບູນ ແລະໄຫຂອງເຈົ້າຈະລົ້ນດ້ວຍນ້ຳ
ອະງຸ່ນໃໝ່.

11 ລູກຊາຍຂອງເຮົາເອີຍ ຢ່າດູໝິ່ນການຕີສອນຂອງພຣະຜູ້ເປັນເຈົ້າ, ຫຼືເບື່ອ
ໜ່າຍຕໍ່ການຕັກເຕືອນຂອງພຣະອົງ.
12 ເພາະພຣະຜູ້ເປັນເຈົ້າຊົງຕັກເຕືອນຜູ້ທີ່ພຣະອົງຊົງຮັກ, ດັ່ງພໍ່ຕັກເຕືອນລູກ
ຊາຍຜູ້ທີ່ເຂົາປິຕິຍິນດີ ແລະຊື່ນຊົມ.

13 ຄົນທີ່ພົບປັນຍາ ແລະຜູ້ທີ່ມີຄວາມເຂົ້າໃຈ ກໍເປັນສຸກຈິງແທ້.
14 ເພາະຜົນທີ່ໄດ້ຈາກປັນຍາຍ່ອມດີກວ່າກໍາໄລທີ່ໄດ້ຈາກເງິນ ແລະດອກເບ້ຍ
ແຫ່ງປັນຍານັ້ນກໍດີກວ່າຄໍາບໍລິສຸດ.
15 ນາງ[2] ປະເສີດກວ່າແກ້ວພິລາ, ແລະບັນດາສິ່ງທີ່ເຈົ້າປາດຖະໜາຈະປຽບ
ກັບນາງບໍ່ໄດ້.
16 ຊີວິດຍືນຍາວຢູ່ໃນມືຂວາຂອງນາງ, ແລະໃນມືຊ້າຍຂອງນາງມີຊັບສົມບັດ
ແລະກຽດຕິຍົດ.
17 ຮີດຄອງຂອງນາງເປັນທາງຂອງຄວາມສຸກສໍາລານ ແລະທາງທັງໝົດຂອງ
ນາງຄືສັນຕິພາບ.
18 ນາງເປັນຕົ້ນໄມ້ແຫ່ງຊີວິດ ແລະບັນດາຜູ້ທີ່ຍຶດຄອງນາງໄວ້ແໜ້ນ ກໍເປັນສຸກ.
19 ພຣະຜູ້ເປັນເຈົ້າຊົງວາງຮາກແຜ່ນດິນໂລກໂດຍປັນຍາ, ພຣະອົງຊົງແຕ່ງຕັ້ງ
ຟ້າສະຫວັນໂດຍຄວາມເຂົ້າໃຈ.
20 ໂດຍຄວາມຮູ້ຂອງພຣະອົງນໍ້າບາດານກໍທະລຸອອກມາ ແລະເມກກໍໂຮຍນໍ້າ
ໝອກລົງມາ.
21 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາສະຕິປັນຍາ ແລະຄວາມສະຫຼຽວສະຫຼາດ
ໄວ້ ຢ່າໃຫ້ທັງສອງນີ້ໜີໄປຈາກສາຍຕາຂອງເຈົ້າ.
22 ດັ່ງນັ້ນທັງສອງຈະເປັນຊີວິດແກ່ຈິດໃຈຂອງເຈົ້າ ຈະເປັນຄວາມງົດງາມ
ປະດັບຄໍຂອງເຈົ້າ.
23 ແລ້ວເຈົ້າຈະດໍາເນີນໃນທາງຂອງເຈົ້າຢ່າງປອດໄພ ແລະຕີນຂອງເຈົ້າຈະ
ບໍ່ເຕະສະດຸດຈັກເທື່ອ.
24 ເມື່ອເຈົ້ານອນ ເຈົ້າຈະບໍ່ຢ້ານ, ການນອນຫຼັບຂອງເຈົ້າຈະຜາສຸກສົດຊື່ນ.
25 ຢ່າຢ້ານຄວາມຕົກໃຈທີ່ຈະລາມມາເຖິງທັນທີ ແລະຢ່າຢ້ານເມື່ອຄົນຊົ່ວຮ້າຍ
ກໍາລັງຖືກຈິບຫາຍ.
26 ເພາະພຣະຜູ້ເປັນເຈົ້າຈະຊົງເປັນຄວາມໄວ້ວາງໃຈຂອງເຈົ້າ ແລະຈະຊົງ
ຮັກສາຕີນຂອງເຈົ້າໃຫ້ພົ້ນຈາກການຖືກບ້ວງແຮ້ວ.

27 ຢ່າຍຶດຄອງຄວາມດີໄວ້ຈາກຜູ້ທີ່ສົມຄວນຈະໄດ້ຮັບ ໃນເມື່ອສິ່ງນີ້ຢູ່ໃນ
ອໍານາດຂອງເຈົ້າທີ່ຈະໃຫ້ໄດ້.

---

2 ຄໍາວ່ານາງໃນທີ່ນີ້ຕາມຕົ້ນສະບັບເດີມແມ່ນໝາຍເຖິງປັນຍາ. ເບິ່ງໝາຍເຫດ 1:20

28 ຢ່າເວົ້າກັບເພື່ອນບ້ານຂອງເຈົ້າວ່າ "ໄປເຖີດ ແລ້ວກັບມາອີກ ມື້ອື່ນຂ້ອຍ
ຈະໃຫ້", ໃນເມື່ອເຈົ້າມີຢູ່ແລ້ວ.
29 ຢ່າວາງແຜນການຊົ່ວຮ້າຍຕໍ່ເພື່ອນບ້ານຂອງເຈົ້າ ເພາະຜູ້ນັ້ນໄດ້ອາໄສຢ່າງ
ໄວ້ວາງໃຈຢູ່ຂ້າງ ໆເຈົ້າ.

30 ຢ່າໂຕ້ແຍ້ງກັບຜູ້ໃດຢ່າງຂາດເຫດຜົນ ໃນເມື່ອເຂົາບໍ່ໄດ້ເຮັດອັນຕະລາຍ
ຢ່າງໃດແກ່ເຈົ້າ.

31 ຢ່າອິດສາຄົນທີ່ກົດຂີ່ຂູດຮີດ ແລະຢ່າເລືອກທາງໃດໆ ຂອງເຂົາເລີຍ.
32 ເພາະຄົນປະຈິບປະແຈງເປັນທີ່ກຽດຊັງຕໍ່ພຣະຜູ້ເປັນເຈົ້າ, ແຕ່ຄວາມເລິກລັບ
ຂອງພຣະອົງມີຢູ່ກັບຄົນຊອບທຳ.

33 ຄຳສາບແຊ່ງຂອງພຣະຜູ້ເປັນເຈົ້າຢູ່ເທິງເຮືອນຂອງຄົນຊົ່ວຮ້າຍ,
ແຕ່ພຣະອົງຊົງອຳນວຍພຣະພອນແກ່ບ່ອນອາໄສຂອງຄົນຊອບທຳ.
34 ແນ່ນອນພຣະອົງຊົງຫຍໍ້ຫຍັນຄົນທີ່ມັກຫຍໍ້ຫຍັນ, ແຕ່ພຣະອົງຊົງປະທານ
ພຣະຄຸນແກ່ຄົນທີ່ຖ່ອມໃຈ.
35 ຄົນທີ່ມີປັນຍາຈະໄດ້ກຽດເປັນມໍລະດົກ, ແຕ່ຄົນໂງ່ຈະໄດ້ຄວາມອັບອາຍ
ເປັນຕຳແໜ່ງ.

ບົດທີ 4

## ສະຕິປັນຍາຈາກພໍ່

1 ບຸດທັງຫຼາຍເອີຍ ຈົ່ງຟັງຄຳສັ່ງສອນຂອງພໍ່ເຈົ້າ ໃຫ້ຕັ້ງໃຈຟັງເພື່ອເຈົ້າຈະ
ໄດ້ມີຄວາມເຂົ້າໃຈ.
2 ເພາະເຮົາໃຫ້ຄຳສອນທີ່ດີແກ່ເຈົ້າ ຢ່າປະຖິ້ມຄຳບັນຍັດຂອງເຮົາ.
3 ເພາະເຮົາເຄີຍເປັນລູກຊາຍຂອງພໍ່ເຮົາ ແລະເປັນທີ່ອ່ອນໂຍນ ເປັນທີ່ໜ້າ
ຮັກຍິ່ງໃນສາຍຕາຂອງແມ່ເຮົາ.

4 ພໍ່ໄດ້ສອນເຮົາ ແລະເວົ້າກັບເຮົາວ່າ “ໃຫ້ໃຈຂອງເຈົ້າຍຶດຖ້ອຍຄຳທັງຫຼາຍ
ຂອງເຮົາໄວ້ໃຫ້ໝັ້ນ ຈົ່ງຮັກສາບັນຍັດຂອງເຮົາ ແລະເຈົ້າຈະມີຊີວິດຢູ່.
5 ຈົ່ງເອົາປັນຍາ ຈົ່ງເອົາຄວາມເຂົ້າໃຈ, ຢ່າລືມໄລ ແລະເວັ້ນໜີຈາກບັນດາ
ຖ້ອຍຄຳແຫ່ງປາກຂອງເຮົາ.
6 ຢ່າປະຖິ້ມນາງ[3] ແລະນາງຈະຮັກສາເຈົ້າໄວ້ ຈົ່ງຮັກນາງ ແລະນາງຈະຄຸ້ມ
ຄອງເຈົ້າ.
7 ປັນຍາເປັນສິ່ງສຳຄັນທີ່ສຸດ, ສະນັ້ນຈົ່ງເອົາປັນຍາ, ເຖິງເຈົ້າຈະໄດ້ຫຍັງກໍ
ຕາມ ຈົ່ງເອົາຄວາມເຂົ້າໃຈໄວ້.
8 ຈົ່ງຍົກຍໍນາງໃຫ້ສູງ ແລະນາງຈະຍົກຍໍເຈົ້າ, ຖ້າເຈົ້າກອດນາງໄວ້ ນາງຈະ
ໃຫ້ເຈົ້າໄດ້ຮັບກຽດ.
9 ປັນຍາຈະເອົາກະໂຈມແຫ່ງພະຄຸນສວມຫົວຂອງເຈົ້າ ປັນຍາຈະປະທານ
ມົງກຸດແຫ່ງສະຫງ່າລາສີແກ່ເຈົ້າ”.
10 ລູກຊາຍຂອງເຮົາເອີຍ ຈົ່ງຟັງ ແລະຮັບເອົາບັນດາຖ້ອຍຄຳຂອງເຮົາໄວ້
ເພື່ອວ່າ ວັນເດືອນປີແຫ່ງຊີວິດຂອງເຈົ້າຈະຫຼາຍຂຶ້ນ.
11 ເຮົາໄດ້ສອນເຈົ້າໃນເລື່ອງທາງແຫ່ງປັນຍາແລ້ວ, ເຮົາໄດ້ນຳພາເຈົ້າໃນ
ທາງທີ່ຖືກຕ້ອງ.
12 ເມື່ອເຈົ້າຍ່າງໄປ ບາດກ້າວຂອງເຈົ້າຈະບໍ່ຖືກຂັດຂ້ອງ, ແລະເມື່ອເຈົ້າແລ່ນ
ເຈົ້າຈະບໍ່ສະດຸດລົ້ມ.
13 ຈົ່ງຍຶດຖືຄຳສັ່ງສອນໄວ້, ແລະຢ່າປ່ອຍນາງໄປ, ຈົ່ງຄຸ້ມຄອງນາງໄວ້, ເພາະ
ນາງເປັນຊີວິດຂອງເຈົ້າ.
14 ຢ່າເຂົ້າໄປໃນຫົນທາງຂອງຄົນໂຫດຮ້າຍປ່າເຖື່ອນ ແລະຢ່າຍ່າງໃນທາງ
ຂອງຄົນຊົ່ວຮ້າຍ.
15 ຈົ່ງຫຼີກໜີຈາກທາງນັ້ນ ຢ່າຍ່າງໄປ ຈົ່ງເວັ້ນໜີ ແລະຈົ່ງກາຍໄປ.

16 ເພາະຖ້າຄົນຊົ່ວຮ້າຍບໍ່ໄດ້ເຮັດຄວາມຜິດເຂົານອນບໍ່ຫລັບ, ຖ້າເຂົາບໍ່ໄດ້
ເຮັດໃຫ້ຄົນໃດສະດຸດເຂົາຈະຫລັບບໍ່ລົງ.
17 ເພາະເຂົາກິນອາຫານຂອງຄວາມຊົ່ວຮ້າຍ ແລະດື່ມເຫຼົ້າອະງຸ່ນແຫ່ງຄວາມ
ປ່າເຖື່ອນ.

---

3 ເບິ່ງ 1:20

18 ແຕ່ຫົນທາງຂອງຄົນຍຸຕິທຳກໍເໝືອນແສງອາລຸນ ຊຶ່ງຮຸ່ງແຈ້ງຫຼາຍຂຶ້ນໆ ຈົນ
ເຖິງກາງເວັນ.
19 ຫົນທາງຂອງຄົນຊົ່ວຮ້າຍກໍເໝືອນຄວາມມືດທຶບ, ເຂົາບໍ່ຮູ້ວ່າສິ່ງໃດເຮັດ
ໃຫ້ເຂົາຊຸນສະດຸດ.

20 ລູກຊາຍຂອງເຮົາເອີຍ ຈົ່ງເອົາໃຈໃສ່ຕໍ່ຖ້ອຍຄຳທັງຫຼາຍຂອງເຮົາ, ຈົ່ງຫງ່ງງ
ຫູຂອງເຈົ້າເຂົ້າຫາຄຳເວົ້າຂອງເຮົາ.
21 ຢ່າໃຫ້ພວກມັນໜີໄປຈາກສາຍຕາຂອງເຈົ້າ ຈົ່ງຮັກສາພວກມັນໄວ້ພາຍ
ໃນໃຈຂອງເຈົ້າ.
22 ເພາະພວກມັນເປັນຊີວິດແກ່ຜູ້ທີ່ຄົ້ນພົບ ແລະພວກມັນເປັນສຸຂະພາບແກ່
ເນື້ອກາຍຂອງຜູ້ນັ້ນທັງໝົດ.

23 ຈົ່ງຮັກສາໃຈຂອງເຈົ້າດ້ວຍຄວາມລະມັດລະວັງໄວ້ຮອບດ້ານ, ເພາະແຫຼ່ງ
ແຫ່ງຊີວິດເລີ່ມຕົ້ນອອກມາຈາກໃຈ.
24 ປາກທີ່ເວົ້າບໍ່ຈິງຈົ່ງໃຫ້ໜີຈາກເຈົ້າ ແລະຮີມສົບທີ່ເວົ້າຄົດໂກງໃຫ້ໜີໄກ
ຈາກເຈົ້າເຖີດ.
25 ຈົ່ງໃຫ້ສາຍຕາຂອງເຈົ້າເບິ່ງຊື່ໄປຂ້າງໜ້າ ແລະໃຫ້ການແນມເບິ່ງຕັ້ງຊື່
ຕໍ່ໜ້າເຈົ້າ.
26 ຈົ່ງໄຕ່ຕອງເບິ່ງທາງທີ່ຕີນຂອງເຈົ້າຈະເດີນໄປ ແລ້ວການດຳເນີນຊີວິດທັງ
ໝົດຂອງເຈົ້າຈະໝັ້ນຄົງ.
27 ຢ່າແວ່ໄປຂ້າງຂວາຫຼືຂ້າງຊ້າຍ, ຈົ່ງຖອນຕີນຂອງເຈົ້າອອກຈາກຄວາມ
ຊົ່ວຮ້າຍ.

## ບົດທີ 5
## ຄຳເຕືອນໃນເລື່ອງການຫລິ້ນຊູ້

1 ລູກຊາຍຂອງເຮົາເອີຍ ຈົ່ງເອົາໃຈໃສ່ຕໍ່ປັນຍາຂອງເຮົາ ຈົ່ງຫງ່ງງຫູຂອງເຈົ້າ
ຟັງຄວາມເຂົ້າໃຈຂອງເຮົາ,

2 ເພື່ອເຈົ້າຈະຮັກສາຄວາມສະຫຼຽວສະຫຼາດໄວ້ ແລະຮີມສົບຂອງເຈົ້າຈະ
ຄຸ້ມຄອງຄວາມຮູ້.
3 ເພາະຮີມສົບຂອງຍິງຊົ່ວນັ້ນກໍຢາດນໍ້າເຜິ້ງອອກມາ ແລະປາກຂອງນາງກໍ
ມື່ນຍິ່ງກວ່ານໍ້າມັນ,
4 ແຕ່ໃນທີ່ສຸດ ນາງກໍມີແຕ່ຄວາມຂົມຂື່ນເໝືອນເຄືອເຂົາຮໍ ແລະແຫຼມກວ່າ
ດາບສອງຄົມ.
5 ຕີນຂອງນາງກ້າວລົງໄປສູ່ຄວາມຕາຍ, ບາດກ້າວຂອງນາງໄປສູ່ນາລົກ.
6 ທາງຂອງນາງວົນວຽນໄປ ເພື່ອເຈົ້າຈະເຂົ້າໃຈມັນບໍ່ໄດ້ ແລະເຮັດໃຫ້ ເຈົ້າ
ໄຕ່ ຕອງເບິ່ງທາງແຫ່ງຊີວິດບໍ່ໄດ້.
7 ເຫດສັນນັ້ນ ບຸດທັງຫຼາຍເອີຍ ບັດນີ້ຈົ່ງຟັງເຮົາ ແລະຢ່າເວັ້ນໜີຈາກບັນດາ
ຖ້ອຍຄໍາແຫ່ງປາກຂອງເຮົາ.
8 ຈົ່ງໃຫ້ທາງຂອງເຈົ້າຫ່າງໄກຈາກນາງ ຢ່າຫຍັບເຂົ້າໄປໃກ້ປະຕູເຮືອນຂອງ
ນາງ,
9 ຢ້ານວ່າເຈົ້າຈະໃຫ້ກຽດຂອງເຈົ້າແກ່ຄົນອື່ນ ແລະຈະມອບວັນເດືອນປີຂອງ
ເຈົ້າແກ່ຄົນໂຫດຮ້າຍ,
10 ຢ້ານວ່າແຂກແປກໜ້າຈະກິນຄວາມອຸດົມສົມບູນຂອງເຈົ້າຈົນອີ່ມ, ແລະ
ຜົນປະໂຫຍດຈາກການງານຂອງເຈົ້າຕົກໄປໃນເຮືອນຂອງຄົນອື່ນ,
11 ແລະເຖິງບັ້ນປາຍຊີວິດຂອງເຈົ້າຈະຄວນຄາງ ເມື່ອເນື້ອກາຍຂອງເຈົ້າຖືກ
ລ້າງຜານ,
12 ແລະເຈົ້າຈະເວົ້າວ່າ "ແມ່ນແລ້ວ ເພາະຂ້ອຍບໍ່ມັກໃຫ້ຄົນອື່ນຕັກເຕືອນ
ແລະບໍ່ຍອມໃຫ້ຜູ້ອື່ນດັດແປງກໍ່ສ້າງ,
13 ແລະຂ້ອຍບໍ່ເຄີຍເຊື່ອຟັງສຽງຄູຂອງຂ້ອຍ ຫຼືຫງ່ຽງຫູໃຫ້ແກ່ຜູ້ສັ່ງສອນ
ຂອງຂ້ອຍ!
14 ຂ້ອຍເກືອບໃກ້ຈະຈົມລົງໃນການອັນຕະລາຍທຸກຢ່າງ ໃນທ່າມກາງທີ່ຊຸມ
ຊົນ ແລະທີ່ປະຊຸມນັ້ນ."

15 ຈົ່ງດື່ມນໍ້າຈາກໄຫເກັບນໍ້າຂອງເຈົ້າ ຈົ່ງດື່ມນໍ້າໄຫຼຈາກບໍ່ຂອງເຈົ້າເອງ.
16 ຈົ່ງໃຫ້ນໍ້າພຸຂອງເຈົ້າໄຫຼອອກໄປນອກເຮືອນ ແລະໃຫ້ສາຍນໍ້າຂອງເຈົ້າ
ໄຫລໄປຕາມຖະໜົນ.
17 ຈົ່ງໃຫ້ມັນເປັນຂອງເຈົ້າແຕ່ຜູ້ດຽວ ແລະບໍ່ແມ່ນສໍາລັບຄົນແປກໜ້າດ້ວຍ.

18 ຈົ່ງໃຫ້ນ້ຳພຸຂອງເຈົ້າໄດ້ຮັບພຣະພອນ, ແລະຊື່ນຊົມຍິນດີຢູ່ກັບເມຍຄົນທີ່
ເຈົ້າໄດ້ເມື່ອຍັງໜຸ່ມນັ້ນ.
19 ຈົ່ງໃຫ້ນາງເປັນເໝືອນກວາງແມ່ທີ່ໜ້າຮັກ ແລະເໝືອນກວາງນ້ອຍທີ່ງາມ
ສະຫງ່າ, ຈົ່ງໃຫ້ຫົວນົມຂອງນາງເປັນທີ່ພໍໃຈເຈົ້າຢູ່ທຸກເວລາ, ແລະຈົ່ງ
ຖືກອົກຖືກໃຈດ້ວຍຄວາມຮັກຂອງນາງສະເໝີ.
20 ລູກຊາຍຂອງເຮົາເອີຍ ເປັນຫຍັງເຈົ້າຈະເມົາມົວຢູ່ກັບຍິງຊົ່ວ ແລະກອດ
ເອິກເມຍຂອງຄົນອື່ນຢູ່ເຮັດຫຍັງ?
21 ເພາະວ່າທາງຂອງມະນຸດກໍຢູ່ໃນສາຍຕາຂອງພຣະຜູ້ເປັນເຈົ້າ ແລະພຣະອົງ
ຊົງໄຕ່ຕອງເບິ່ງການດຳເນີນຊີວິດທັງໝົດຂອງເຂົາ.

22 ຄວາມຊົ່ວຊ້າຂອງຄົນຊົ່ວຮ້າຍຈະດັກເຂົາເອງ ແລະເຊືອກບາບຂອງຕົນຈະ
ຜູກຕົນໄວ້.
23 ເຂົາຕາຍເພາະຂາດຄຳສັ່ງສອນໃນຊີວິດ, ແລະເພາະຄວາມໂງ່ຢ່າງຍິ່ງ
ຂອງເຂົາ ເຂົາຈຶ່ງຫຼົງເຮັດບາບໄປ.

## ບົດທີ 6
## ຄຳເຕືອນເລື່ອງການປະກັນ ແລະການຂີ້ຄ້ານ

1 ລູກຊາຍຂອງເຮົາເອີຍ ຖ້າເຈົ້າເປັນຜູ້ປະກັນເພື່ອນບ້ານຂອງເຈົ້າ ຖ້າເຈົ້າ
ໄດ້ເຮັດສັນຍາໃຫ້ແກ່ຄົນແປກໜ້າ
2 ເຈົ້າຈຶ່ງຕິດບ້ວງແຮ້ວເພາະຄຳຈາກປາກຂອງເຈົ້າ ແລະເຈົ້າຕິດກັບເພາະ
ຄຳເວົ້າຂອງເຈົ້າ.
3 ລູກຊາຍຂອງເຮົາເອີຍ ຈົ່ງເຮັດຢ່າງນີ້ແລະ ເພື່ອຈະຊ່ອຍຕົວເຈົ້າໃຫ້ລອດ
ພົ້ນ ຄື ເມື່ອເຈົ້າຕົກຢູ່ໃນກຳມືເພື່ອນບ້ານຂອງເຈົ້າແລ້ວ, ຈົ່ງໄປ ຖ່ອມຕົວ
ລົງ ແລະອ້ອນວອນກັບເພື່ອນບ້ານຂອງເຈົ້າ.
4 ຢ່າໃຫ້ຕາຂອງເຈົ້າຫຼັບລົງ ຢ່າໃຫ້ຕາຂອງເຈົ້າຫຼັບສະໜິດໄປ.
5 ຈົ່ງຫລີກໜີຈາກໄພ ເໝືອນກວາງນ້ອຍທີ່ຫຼົບຕົວຈາກມືຂອງນາຍພານ
ແລະນົກຈາກມືຂອງຄົນຈັບນົກ.

6 ຄົນຂີ້ຄ້ານເອີຍ ໄປຫາໂຕມົດໄປ, ແລ້ວພິຈາລະນາເບິ່ງທາງຂອງມັນ ແລະ
ຈົ່ງສະຫຼາດ,
7 ພວກມັນປາສະຈາກຫົວໜ້າ ຜູ້ເບິ່ງແຍງ ຫຼືຜູ້ປົກຄອງ
8 ແຕ່ພວກມັນຕຽມອາຫານຂອງມັນໄວ້ໃນລະດູແລ້ງ ແລະຮວບຮວມຂອງ
ກິນຂອງມັນໃນລະດູກ່ຽວໄວ້.
9 ຄົນຂີ້ຄ້ານເອີຍ, ເຈົ້າຈະນອນດົນເທົ່າໃດ? ເມື່ອໃດເຈົ້າຈະລຸກຂຶ້ນຈາກການ
ນອນຫຼັບ?
10 "ນອນອີກໜ້ອຍໜຶ່ງ, ນອນຫຼັບບຶດໜຶ່ງ, ເອົາມືໄຂວ່ກັນນອນຈັກໜ້ອຍໜຶ່ງ",
11 ຄວາມທຸກຈົນຈະມາເຖິງເຈົ້າເໝືອນຄົນພະເນຈອນ ແລະຄວາມຂັດສົນ
ເໝືອນຄົນຖືອາວຸດ.

12 ຄົນອະທຳ ຄືຄົນຊົ່ວຮ້າຍ ກໍທ່ຽວໄປດ້ວຍປາກຄົດໂກງ.
13 ມັນຍິກຄິ້ວລິ່ວຕາ ມັນສັນຍານດ້ວຍຕີນ ມືຂອງມັນຊີ້ໄປ,
14 ມັນສ້າງຄວາມຊົ່ວຢູ່ເລື້ອຍ ໆ ດ້ວຍໃຈປະຈົບປະແຈງ, ແລະມັນຫວ່ານ
ຄວາມແຕກແຍກ.
15 ເພາະສະນັ້ນຄວາມຈິບຫາຍຈະມາເຖິງເຂົາໂດຍທັນທີທັນໃດ, ມັນຈະຖືກ
ແຕກຫັກໂດຍໄວ ແລະບໍ່ມີສິ່ງໃດທີ່ເຮັດໃຫ້ດີໄດ້.

16 ມີຫົກສິ່ງເຫຼົ່ານີ້ທີ່ພຣະຜູ້ເປັນເຈົ້າຊົງກຽດຊັງ, ເອີ ! ມີເຈັດສິ່ງ ຊຶ່ງເປັນທີ່ໜ້າ
ກຽດໜ້າຊັງສຳລັບພຣະອົງ,
17 ຕາຈອງຫອງ ລີ້ນເວົ້າຂີ້ຕົວະ ມືທີ່ໃຫ້ເລືອດໂດຍບໍ່ມີຄວາມຜິດໄຫລອອກ
18 ໃຈທີ່ຄິດແຜນການຊົ່ວຮ້າຍ ຕີນທີ່ຟ້າວແລ່ນໄປເຮັດຄວາມບໍ່ຊອບທຳ
19 ພະຍານບໍ່ຈິງຊຶ່ງເວົ້າຂີ້ຕົວະ ແລະຄົນຜູ້ຫວ່ານຄວາມແຕກແຍກທ່າມກາງ
ພວກພີ່ນ້ອງ.

## ຄຳຕັກເຕືອນເລື່ອງການຫລິ້ນຊູ້

20 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາຄຳສັ່ງສອນຂອງພໍ່ເຈົ້າ ແລະຢ່າປະຖິ້ມ
ບັນຍັດຂອງແມ່ເຈົ້າ,
21 ມັດມັນຕິດໄວ້ເທິງໃຈຂອງເຈົ້າສະເໝີ ຜູກມັນໄວ້ທີ່ຄໍຂອງເຈົ້າ.

22 ເມື່ອເຈົ້າຍ່າງ ມັນຈະນຳເຈົ້າໄປ, ເມື່ອເຈົ້ານອນລົງ ມັນຈະເຝົ້າເຈົ້າຢູ່ ແລະ
ເມື່ອເຈົ້າຕື່ນຂຶ້ນ ມັນຈະເວົ້າກັບເຈົ້າ.
23 ເພາະຄຳສັ່ງສອນເປັນຕະກຽງ, ພຣະບັນຍັດເປັນແສງສະຫວ່າງ, ແລະຄຳ
ຕັກເຕືອນແຫ່ງການສັ່ງສອນເປັນທາງແຫ່ງຊີວິດ,
24 ເພື່ອຮັກສາເຈົ້າໄວ້ຈາກຍິງຊົ່ວຮ້າຍ ຈາກລີ້ນປະຈົບປະແຈງຂອງຍິງຫຼິ້ນຊູ້.
25 ຢ່າປາດຖະໜາຄວາມງາມຂອງນາງຢູ່ໃນໃຈຂອງເຈົ້າ, ຢ່າໃຫ້ນາງຈັບເຈົ້າ
ດ້ວຍຂົນຕາຂອງນາງ.
26 ເພາະໂດຍວິທີການຂອງຍິງໂສເພນີ ເຮັດໃຫ້ຊາຍຄົນນັ້ນອາດມີຄ່າເທົ່າກັບ
ເຂົ້າຈີ່ພຽງກ້ອນດຽວໄດ້ ແລະຍິງຫລິ້ນຊູ້ຈະລ່າຊີວິດອັນປະເສີດຂອງຜູ້
ຊາຍ.
27 ຜູ້ຊາຍຈະຫອບໄຟໄວ້ທີ່ອົກຂອງເຂົາ ໂດຍບໍ່ໃຫ້ເສື້ອຜ້າຂອງເຂົາໄໝ້ໄດ້ຫຼື?
28 ຫຼືຜູ້ໃດຈະຍ່າງເທິງຖ່ານໄຟທີ່ລຸກແດງຢູ່ ໂດຍບໍ່ໃຫ້ຕີນຂອງເຂົາຖືກໄຟລວກ
ໄດ້ຫຼື?
29 ບຸກຄົນຜູ້ເຂົ້າຫາເມຍຂອງເພື່ອນບ້ານກໍເປັນຢ່າງນັ້ນແຫຼະ, ຜູ້ທີ່ແຕະຕ້ອງ
ນາງແລ້ວຈະບໍ່ຂາດຄວາມຜິດ.
30 ຖ້າຄົນຂີ້ລັກເຂົ້າລັກເພື່ອບັນເທົາຄວາມຫິວ ຄົນບໍ່ທ່ອນຊັງຄົນຂີ້ລັກໄດ້,
31 ແຕ່ຖ້າເຂົາຖືກຈັບໄດ້ ເຂົາຕ້ອງຊຳລະຄືນເຈັດເທົ່າ, ເຂົາຈະຕ້ອງໃຫ້ສິ່ງ
ຂອງທັງໝົດໃນເຮືອນຂອງເຂົາ.
32 ແຕ່ຜູ້ໃດທີ່ລ່ວງປະເວນີກັບຜູ້ຍິງຄົນໜຶ່ງກໍຂາດຄວາມເຂົ້າໃຈ, ຜູ້ໃດທີ່ເຮັດ
ຢ່າງນັ້ນກໍທຳລາຍຈິດໃຈຂອງຕົນເອງ.
33 ເຂົາໄດ້ຮັບບາດແຜ ແລະຄວາມອັບອາຍ, ແລະຈະລ້າງຄວາມຂາຍໜ້າ
ຂອງຕົນບໍ່ໄດ້.
34 ເພາະຄວາມອິດສາເຮັດໃຫ້ຄົນຮຸນແຮງ, ດັ່ງນັ້ນໃນວັນທີ່ເຂົາແກ້ແຄ້ນ ເຂົາ
ຈະບໍ່ເມດຕາ ຫຼືຍົກໂທດ.
35 ເຂົາຈະບໍ່ຮັບເຄື່ອງໄຖ່ໂທດໃດ ໆ, ເຖິງເຈົ້າປະທານຂອງຂວັນຫຼາຍກໍຕາມ
ເຂົາກໍບໍ່ຍອມສະຫງົບ.

ບົດທີ 7

## ຈົ່ງລະວັງການດຳເນີນຊີວິດໃນທາງຂອງຍິງຊົ່ວ

1 ລູກຊາຍຂອງເຮົາເອີຍ ຈົ່ງຮັກສາຖ້ອຍຄຳຂອງເຮົາ ຈົ່ງສະສົມຄຳສັ່ງສອນຂອງເຮົາໄວ້ກັບເຈົ້າ.

2 ຈົ່ງຮັກສາຄຳສັ່ງສອນຂອງເຮົາ ແລະເຈົ້າຈະມີຊີວິດຢູ່, ຈົ່ງຮັກສາບັນຍັດຂອງເຮົາເໝືອນກັບແກ້ວຕາຂອງເຈົ້າ.

3 ມັດມັນໄວ້ທີ່ນິ້ວມືຂອງເຈົ້າ ຂຽນມັນໄວ້ເທິງແຜ່ນຈາລຶກແຫ່ງໃຈຂອງເຈົ້າ.

4 ຈົ່ງເວົ້າກັບປັນຍາວ່າ "ນາງເປັນເອື້ອຍຂອງຂ້ອຍ", ແລະຈົ່ງເອີ້ນຄວາມເຂົ້າໃຈວ່າ "ຍາດຕິພີ່ນ້ອງ".

5 ເພື່ອທັງສອງນີ້ຈະຮັກສາເຈົ້າໄວ້ໃຫ້ພົ້ນຈາກຍິງໂສເພນີ ຈາກຍິງຫລິ້ນຊູ້ທີ່ເວົ້າປະຈົບປະແຈງ.

6 ເພາະທີ່ປ່ອງຢ້ຽມເຮືອນຂອງເຮົາ ເຮົາໄດ້ເບິ່ງອອກໄປຕາມບານເກັດປ່ອງຢ້ຽມ

7 ເຮົາເຫັນວ່າທ່າມກາງຄົນທີ່ຮູ້ໜ້ອຍ ແລະທ່າມກາງຄົນໜຸ່ມ ໆ ທີ່ເຮົາພິຈາລະນາເບິ່ງນັ້ນ ກໍມີໜຸ່ມຄົນໜຶ່ງຂາດຄວາມເຂົ້າໃຈ.

8 ໜຸ່ມຄົນນີ້ຜ່ານໄປຕາມຖະໜົນໃກ້ທາງແຍກໄປເຮືອນຂອງນາງ, ຍ່າງຕາມທາງຊື່ງໄປເຮືອນນາງ

9 ໃນເວລາໃກ້ຈະຄ່ຳ ແສງຕາເວັນກຳລັງຈະໜົດໄປ ຄວາມມືດຂອງກາງຄືນ ກຳລັງເຂົ້າມາ,

10 ແລະເບິ່ງແມ້! ຍິງຄົນໜຶ່ງມາພົບເຂົາແຕ່ງຕົວຄືຍິງແມ່ຈ້າງ ແລະຫົວໃຈມີເລ່ຫລ່ຽມ.

11 (ນາງເປັນແມ່ເລງທີ່ບໍ່ມີຢາງອາຍ ແລະໃຈແຂງກະດ້າງ, ຕີນຂອງນາງບໍ່ຢູ່ກັບເຮືອນ,

12 ນາງນີ້ອອກໄປນອກເຮືອນ ຢູ່ຕາມຖະໜົນ ແລະນາງຄອຍຖ້າຢູ່ທຸກມຸມ.)

13 ນາງຈັບກອດ ແລະຈູບເຂົາ ນາງໃຊ້ຄຳເວົ້າກັບເຂົາຢ່າງບໍ່ມີຄວາມລະອາຍວ່າ,

14 "ຂ້ອຍມີເຄື່ອງຖວາຍບູຊາ, ແລະວັນນີ້ຂ້ອຍໄດ້ເຮັດຕາມຄຳປະຕິຍານແລ້ວ.

15 ສັນນັ້ນຂ້ອຍຈຶ່ງອອກມາຫາເຈົ້າ ຊອກຫາໜ້າເຈົ້າຢ່າງຂະຫຍັນຂັນແຂງ ແລະຂ້ອຍພົບເຈົ້າແລ້ວ.

16 ຂ້ອຍໄດ້ປະດັບຕຽງນອນດ້ວຍຮູບຄວັດ ແລະປູດ້ວຍຜ້າປ່ານສີຕ່າງ ໆ ຈາກ
ປະເທດເອຢິບ.
17 ຂ້ອຍໄດ້ອົບບ່ອນນອນຂອງຂ້ອຍດ້ວຍຢາງໄມ້ຫອມ ນ້ຳຫອມອາໂລເອ
ແລະກຳຍານຫອມ.
18 ມາເທາະ ໃຫ້ເຮົາມາອີ່ມເຕັມດ້ວຍຄວາມຮັກຈົນຮຸ່ງເຊົ້າ, ໃຫ້ພວກເຮົາ
ມີຄວາມສຸກໃນອ້ອມກອດຂອງກັນແລະກັນ.
19 ເພາະຜົວຂອງຂ້ອຍກໍບໍ່ຢູ່ເຮືອນ ລາວເດີນທາງໄປໄກ,
20 ລາວເອົາເງິນໄປຖົງໜຶ່ງ ແລະລາວຈະກັບມາໃນວັນທີ່ລາວກຳນົດໄວ້."
21 ນາງຫວ່ານອ້ອມດ້ວຍຄຳເວົ້າອັນອ່ອນຫວານ ນາງບັງຄັບເຂົາດ້ວຍຮີມສົບ
ທີ່ມີສະເໜ່.
22 ຊາຍນັ້ນກໍຕິດຕາມນາງໄປທັນທີເໝືອນດັ່ງງົວເຖິກທີ່ຖືກຈູງໄປຂ້າ ຫຼືຢ່າງ
ປອກຄໍເຫຼັກທີ່ໃສ່ຄົນໂງ່ເມື່ອຖືກໂທດ,
23 ຈົນລູກທະນູແທງຕັບຂອງຕົນໃຫ້ຊອດ, ຄືນົກຟ້າວໄປຫາບ້ວງແຮ້ວ ລາວ
ບໍ່ຮູ້ວ່າເປັນທີ່ຈົບທາຍຂອງຊີວິດ.

24 ໂອ ບຸດທັງຫຼາຍເອີຍ! ບັດນີ້ຈົ່ງຟັງເຮົາ ແລະຈົ່ງຕັ້ງໃຈຕໍ່ຖ້ອຍຄຳຈາກປາກ
ຂອງເຮົາ.
25 ຢ່າໃຫ້ໃຈຂອງເຈົ້າຫຼົງໄຫຼໄປຕາມທາງຂອງນາງ ຢ່າຫຼົງໄປຮ່ວມທາງໃນ
ການດຳເນີນຊີວິດຂອງນາງນັ້ນ.
26 ເພາະນາງນັ້ນໄດ້ເຮັດໃຫ້ເຫຍື່ອຢ່າງຫຼວງຫຼາຍບາດເຈັບລົ້ມລົງ ແລະນາງ
ໄດ້ຂ້າຊາຍທີ່ແຂງແຮງຈຳນວນຫຼາຍ.
27 ເຮືອນຂອງນາງເປັນທາງໄປສູ່ນາລົກ ລົງໄປເຖິງຮ້ວງແຫ່ງຄວາມຕາຍ.

## ບົດທີ 8

## ຄຳກ່າວຂອງປັນຍາ

1 ປັນຍາບໍ່ໄດ້ຮ້ອງເອີ້ນຫຼື? ຄວາມເຂົ້າໃຈບໍ່ໄດ້ເປັ່ງສຽງຂອງນາງຫຼື?

2 ນາງຢືນຢູ່ເທິງຍອດບ່ອນສູງທັງຫຼາຍ, ທີ່ທີ່ທາງ ແລະບ່ອນທາງແຍກນາງ
ກໍຢືນຢູ່.
3 ທີ່ແຄມປະຕູເຂົ້າເມືອງ ທີ່ທາງເຂົ້າເມືອງທັງຫຼາຍ ແລະຕາມປະຕູຕ່າງ ໆ
ນາງກໍຮ້ອງສຽງດັ່ງວ່າ
4 "ໂອ ບັນດາຜູ້ຊາຍເອີຍ! ເຮົາຮ້ອງຫາເຈົ້າ, ແລະສຽງຮ້ອງຂອງເຮົາໄປເຖິງ
ລູກຊາຍຂອງມະນຸດ.
5 ໂອ ຄົນທີ່ຮູ້ໜ້ອຍເອີຍ! ຈົ່ງເຂົ້າໃຈສະຕິປັນຍາ! ໂອ ຄົນໂງ່ ຈົ່ງມີຄວາມ
ເຂົ້າໃຈ.
6 ຈົ່ງຟັງ, ເພາະເຮົາຈະເວົ້າເຖິງສິ່ງທີ່ຍອດຢ້ຽມ, ແລະຮີມສົບຂອງເຮົາຈະກ່າວ
ສິ່ງທີ່ຖືກຕ້ອງ.
7 ເພາະປາກຂອງເຮົາຈະເປັ່ງຄວາມຈິງ, ຄວາມຊົ່ວຮ້າຍເປັນສິ່ງໜ້າກຽດໜ້າ
ຊັງຕໍ່ຮີມສົບຂອງເຮົາ.
8 ບັນດາຄຳເວົ້າຂອງເຮົານັ້ນເປັນຖ້ອຍຄຳແຫ່ງຄວາມຊອບທຳ, ໃນນັ້ນບໍ່ມີ
ຄຳບິດເບືອນຫຼືຄຳຄົດລ້ຽວ.
9 ສຳລັບຜູ້ທີ່ເຂົ້າໃຈຄຳເຫຼົ່ານັ້ນເຂົາກໍຮູ້ແຈ້ງໝົດ ສຳລັບຜູ້ພົບຄວາມຮູ້ກໍຖືກ
ຕ້ອງ.
10 ຈົ່ງຮັບຄຳສັ່ງສອນຂອງເຮົາແທນຮັບເງິນ, ແລະຈົ່ງຮັບຄວາມຮູ້ ດີກວ່າຮັບ
ຄຳບໍລິສຸດ.
11 ເພາະປັນຍາດີກວ່າແກ້ວພິລາ, ແລະສິ່ງທີ່ເຈົ້າປາດຖະໜາທັງໝົດຈະປຽບ
ທຽບກັບປັນຍາບໍ່ໄດ້.
12 ເຮົາຄືປັນຍາອາໄສຢູ່ກັບຄວາມຢັ່ງຮູ້ ເຮົາມີຄວາມຮູ້ ແລະຄວາມສະຫຼຽວ
ສະຫຼາດ.
13 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນຄວາມກຽດຊັງຂອງການຊົ່ວຮ້າຍ, ເຮົາ
ກຽດຊັງຄວາມຈອງຫອງກັບການອວດອົ່ງ ແລະທາງຂອງຄວາມຊົ່ວຮ້າຍ
ກັບປາກປະຈົບປະແຈງ.
14 ການປຶກສາ ແລະສະຕິປັນຍາເປັນຂອງເຮົາ, ເຮົາຄືຄວາມເຂົ້າໃຈ, ເຮົາ
ມີກຳລັງ.
15 ໂດຍເຮົານີ້ແຫຼະ ກະສັດຈຶ່ງປົກຄອງ ແລະຜູ້ຄອບຄອງຈຶ່ງລົງຂໍ້ກົດໝາຍທີ່
ຍຸດຕິທຳ.

16 ໂດຍເຮົານີ້ແຫຼະ ເຈົ້ານາຍ ແລະຂ້າລາຊະການໄດ້ຄອບຄອງ ຄືບັນດາຜູ້
ພິພາກສາຂອງແຜ່ນດິນໂລກ.
17 ເຮົາຮັກບັນດາຜູ້ທີ່ຮັກເຮົາ ແລະພວກຜູ້ທີ່ສະແຫວງຫາເຮົາຢ່າງຂະຫຍັນ
ຂັນແຂງກໍພົບເຮົາ.
18 ຄວາມອຸດົມສົມບູນ ແລະກຽດຕິຍົດຢູ່ກັບເຮົາ, ເອີ! ທັງຊັບສົມບັດອັນ
ໝັ້ນຄົງ ແລະຄວາມຊອບທຳດ້ວຍ.
19 ຜົນຂອງເຮົາດີກວ່າຄຳ ເອີ! ດີກວ່າຄຳທີ່ລະອຽດ, ແລະດອກເບ້ຍຂອງເຮົາ
ດີກວ່າເງິນທີ່ເລືອກໄວ້ແລ້ວ.
20 ເຮົານຳໃນທາງແຫ່ງຄວາມຊອບທຳ ໃນການດຳເນີນຊີວິດທັງຫຼາຍຂອງ
ຄວາມຍຸດຕິທຳ,
21 ເພື່ອໃຫ້ຄົນທັງຫຼາຍທີ່ຮັກເຮົາຮັບຊັບສົມບັດເປັນມໍລະດົກ, ແລະເຮົາຈະ
ໃຫ້ຄັງຊັບທັງຫຼາຍຂອງເຂົາເຕັມໄດ້.
22 ພຣະຜູ້ເປັນເຈົ້າໄດ້ສະຖາປະນາເຮົາໄວ້ແລ້ວໃນຕົ້ນເດີມ ກ່ອນກິດຈະການ
ທັງຫຼາຍຂອງພຣະອົງ.
23 ເຮົາຊົງເປັນຢູ່ແລ້ວຕັ້ງແຕ່ກ່ອນດຶກດຳບັນ ກ່ອນບໍ່ທັນມີແຜ່ນດິນໂລກ.
24 ເຮົາຖືກກຳນົດມາ ກ່ອນມີມະຫາສະມຸດ, ເມື່ອຍັງບໍ່ມີນ້ຳພຸໄຫລອອກມາ.
25 ກ່ອນການເນລະມິດສ້າງພູເຂົາ ແລະໂນນພູ ເຮົາກໍຖືກກຳນົດມາແລ້ວ,
26 ກ່ອນທີ່ພຣະອົງຊົງສ້າງແຜ່ນດິນໂລກ ທັງໄຮ່ນາ ແລະກ່ອນຂີ້ຝຸ່ນດິນຂອງໂລກ.
27 ເມື່ອພຣະອົງຊົງຕັ້ງຟ້າສະຫວັນ ເຮົາຢູ່ບ່ອນນັ້ນແລ້ວ, ເມື່ອພຣະອົງຊົງເອົາ
ເຂັມຊີ້ທິດວາງເທິງມະຫາສະມຸດ,
28 ເມື່ອພຣະອົງຊົງຕັ້ງເມກທັງຫຼາຍໄວ້ເບື້ອງເທິງ, ເມື່ອພຣະອົງຊົງຕັ້ງບໍ່ນ້ຳພຸ
ຂອງບາດານໃຫ້ໝັ້ນຄົງໄວ້,
29 ເມື່ອພຣະອົງຊົງກຳນົດເຂດຈຳກັດໃຫ້ແກ່ທະເລ ເພື່ອວ່ານ້ຳຈະບໍ່ລະເມີດ
ພຣະບັນຊາຂອງພຣະອົງ ເມື່ອພຣະອົງຊົງປັກຜັງຮາກຖານຂອງໂລກ,
30 ເມື່ອນັ້ນແຫຼະ ເຮົາຢູ່ກັບພຣະອົງແລ້ວ ເໝືອນຜູ້ທີ່ພຣະອົງຊົງລ້ຽງດູ ເຮົາ
ເປັນຄວາມປິຕິຍິນດີປະຈຳວັນຂອງພຣະອົງ ແລະໄດ້ຊື່ນຊົມຍິນດີຢູ່ຕໍ່
ພຣະພັກພຣະອົງສະເໝີ.
31 ເຮົາໄດ້ຊື່ນຊົມຍິນດີຢູ່ໃນແຜ່ນດິນໂລກຂອງພຣະອົງ, ແລະເຮົາໄດ້ມີຄວາມ
ປິຕິຍິນດີດ້ວຍມະນຸດທັງຫຼາຍ.

32 "ເຫດສັນນັ້ນລູກທັງຫຼາຍເອີຍ ບັດນີ້ຈົ່ງຟັງເຮົາ ບັນດາຜູ້ທີ່ຮັກສາທາງຂອງ
ເຮົາກໍເປັນສຸກ.
33 ຈົ່ງຟັງຄຳສັ່ງສອນ ແລະຈົ່ງເປັນຄົນມີປັນຍາ ແລະຢ່າປະຖິ້ມຄຳສັ່ງສອນນັ້ນ.
34 ຜູ້ໃດທີ່ຟັງເຮົາກໍເປັນສຸກ ຄືເຝົ້າຢູ່ທີ່ປະຕູຮົ້ວຂອງເຮົາທຸກວັນ ແລະຄອຍຖ້າ
ຢູ່ຂ້າງປະຕູເຮືອນຂອງເຮົາ.
35 ເພາະຜູ້ໃດທີ່ພົບເຮົາກໍພົບຊີວິດ ແລະໄດ້ຮັບຄວາມພໍພຣະໄທຈາກພຣະ
ຜູ້ເປັນເຈົ້າ.
36 ແຕ່ວ່າຜູ້ທີ່ເຮັດບາບຕໍ່ສູ້ເຮົາກໍເຮັດຜິດຕໍ່ຈິດໃຈຕົນເອງ ບັນດາຜູ້ທີ່ກຽດຊັງ
ເຮົາກໍຮັກຄວາມຕາຍ."

ບົດທີ 9

## ປັນຍາແລະຄວາມໂງ່ຈ້າ

1 ປັນຍາໄດ້ສ້າງເຮືອນຂອງຕົນແລ້ວ ນາງໄດ້ຕັ້ງເສົາເຈັດຕົ້ນ,
2 ນາງໄດ້ຂ້າສັດຂອງຕົນ, ໄດ້ປະສົມນ້ຳອະງຸ່ນ, ແລະໄດ້ຈັດໂຕະຂອງຕົນແລ້ວ
3 ແລະໄດ້ສົ່ງສາວໃຊ້ຂອງຕົນອອກໄປ, ນາງສົ່ງສຽງເອີ້ນຈາກທີ່ສູງທີ່ສຸດ
ໃນເມືອງວ່າ
4 "ຜູ້ໃດທີ່ເປັນຄົນທີ່ຮູ້ໜ້ອຍ ໃຫ້ເຂົາເຂົ້າມາບ່ອນນີ້", ແລະຝ່າຍຜູ້ທີ່ຂາດ
ຄວາມເຂົ້າໃຈ ນາງເວົ້າກັບເຂົາວ່າ
5 "ມາເຖີດ ມາຮັບປະທານເຂົ້າຈີ່ຂອງເຮົາ ແລະດື່ມນ້ຳອະງຸ່ນທີ່ເຮົາໄດ້
ປະສົມ.
6 ຈົ່ງໜີຈາກພວກຄົນໂງ່ຈ້າເສຍ ແລ້ວເຈົ້າຈະມີຊີວິດຢູ່, ຈົ່ງດຳເນີນໃນທາງ
ຂອງຄວາມເຂົ້າໃຈເຖີດ."
7 ຜູ້ທີ່ສັ່ງສອນຄົນມັກຫຍໍ້ຫຍັນຈະໄດ້ຮັບຄວາມອັບອາຍ, ແລະຜູ້ທີ່ຕັກເຕືອນ
ຄົນຊົ່ວຮ້າຍຈະຖືກກ່າວຄຳຫຍາບຊ້າ.
8 ຢ່າສັ່ງສອນຄົນມັກຫຍໍ້ຫຍັນ ຢ້ານວ່າເຂົາຈະກຽດຊັງເຈົ້າ, ແຕ່ຈົ່ງຕັກເຕືອນ
ຄົນທີ່ມີປັນຍາ ແລະເຂົາຈະຮັກເຈົ້າ.

9 ຈົ່ງໃຫ້ຄຳສັ່ງສອນແກ່ຄົນທີ່ມີປັນຍາ ແລະເຂົາຈະສະຫຼາດຍິ່ງຂຶ້ນ, ຈົ່ງ
ສອນຄົນຍຸດຕິທຳ ແລະເຂົາຈະເພີ່ມການຮຽນຮູ້ຫຼາຍຂຶ້ນ.
10 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນທີ່ເລີ່ມຕົ້ນຂອງປັນຍາ, ແລະການຮູ້ຈັກ
ອົງບໍລິສຸດເປັນຄວາມເຂົ້າໃຈ.
11 ເນື່ອງຈາກເຮົາ ວັນຄືນຂອງເຈົ້າຈະເພີ່ມທະວີຄູນ ແລະວັນເດືອນປີແຫ່ງ
ຊີວິດຂອງເຈົ້າຈະເພີ່ມພູນ.
12 ຖ້າເຈົ້າສະຫຼາດ ເຈົ້າເອງກໍຈະໄດ້ຮັບລາງວັນ, ຖ້າເຈົ້າໝິ່ນປະໝາດ
ເຈົ້າເອງກໍຈະໄດ້ຮັບການທົນທຸກ.

13 ຍິງໂງ່ນັ້ນຈະສົ່ງສຽງອຶກກະທຶກ, ນາງດ້ອຍປັນຍາ ແລະບໍ່ຮູ້ຈັກຫຍັງ.
14 ເພາະນາງນັ່ງທີ່ປະຕູເຮືອນຂອງນາງ ແລະນັ່ງຢູ່ໃນບ່ອນສູງທີ່ຢູ່ໃນເມືອງ
15 ສົ່ງສຽງຮ້ອງເອີ້ນບັນດາຜູ້ທີ່ຜ່ານໄປ ຜູ້ທີ່ຍ່າງຊື່ໄປຕາມທາງຂອງເຂົາວ່າ:
16 "ຜູ້ໃດທີ່ເປັນຄົນທີ່ຮູ້ໜ້ອຍ ໃຫ້ເຂົາເຂົ້າມາບ່ອນນີ້", ແລະຝ່າຍຜູ້ທີ່ຂາດ
ຄວາມເຂົ້າໃຈ ນາງເວົ້າກັບເຂົາວ່າ
17 "ນ້ຳທີ່ລັກມາກໍຫວານດີ ແລະຂະໜົມທີ່ກິນໃນທີ່ລັບລີ້ກໍແຊບຫລາຍ."
18 ແຕ່ເຂົາບໍ່ຮູ້ວ່າຄົນຕາຍຢູ່ບ່ອນນັ້ນ, ແລະແຂກຂອງນາງກໍຢູ່ໃນຮ້ອງເລິກ
ຂອງນາລົກ.

## ບົດທີ 10
## ສຸພາສິດຂອງຊາໂລໂມນ

1 ສຸພາສິດຂອງຊາໂລໂມນ. ລູກຊາຍທີ່ມີປັນຍາເຮັດໃຫ້ພໍ່ຍິນດີ ແຕ່ລູກຊາຍ
ທີ່ໂງ່ເປັນຄວາມໜັກໃຈຂອງແມ່ເຂົາ.
2 ຊັບສົມບັດອະທຳບໍ່ເປັນຜົນດີແກ່ຕົນ, ແຕ່ວ່າຄວາມຊອບທຳຊ່ວຍໃຫ້ພົ້ນ
ຈາກຄວາມຕາຍ.
3 ພຣະຜູ້ເປັນເຈົ້າຈະບໍ່ປ່ອຍໃຫ້ຈິດໃຈຄົນຊອບທຳຫິວ, ແຕ່ພຣະອົງຊົງປະ
ຖິ້ມຊັບສົມບັດຂອງຄົນຊົ່ວຮ້າຍ.

4 ມືທີ່ຂີ້ຄ້ານເປັນເຫດໃຫ້ເກີດຄວາມຍາກຈົນ, ແຕ່ມືຂອງຄົນດຸໝັ່ນກໍເຮັດໃຫ້
ຮັ່ງມີ.
5 ຜູ້ທີ່ເກັບຜົນລະປູກໃນລະດູເກັບກ່ຽວກໍເປັນລູກຊາຍທີ່ມີປັນຍາ, ແຕ່ຜູ້ນອນ
ຫຼັບໃນລະດູເກັບກ່ຽວກໍເປັນລູກຊາຍທີ່ນໍາຄວາມອັບອາຍມາ.
6 ພຣະພອນຢູ່ເທິງຫົວຂອງຄົນຊອບທໍາ, ແຕ່ຄວາມທາລຸນປົກຄຸມປາກຄົນ
ຊົ່ວຮ້າຍ.
7 ການລະນຶກເຖິງຄົນຍຸຕິທໍາເປັນພຣະພອນ, ແຕ່ຊື່ສຽງຂອງຄົນຊົ່ວຮ້າຍຈະ
ເປື່ອຍເນົ່າເສຍ.
8 ຜູ້ທີ່ມີໃຈປະກອບດ້ວຍປັນຍາຈະຍອມຮັບຄໍາສັ່ງທັງຫຼາຍ, ແຕ່ຄົນທີ່ເວົ້າ
ໂງ່ ໆຈະລົ້ມລົງ.
9 ຜູ້ໃດທີ່ດໍາເນີນໃນຄວາມທ່ຽງທໍາກໍດໍາເນີນແບບໝັ້ນຄົງດີ, ແຕ່ຜູ້ທີ່ເຮັດທາງ
ຂອງຕົນໃຫ້ຊົ່ວກໍຈະປາກົດແຈ້ງແກ່ຄົນອື່ນ.
10 ຜູ້ທີ່ຫຍິກຄິ້ວຫລິ່ວຕາກໍໃຫ້ເກີດຄວາມໂສກເສົ້າ, ແລະຄົນທີ່ເວົ້າໂງ່ ໆ
ຈະລົ້ມລົງ.
11 ປາກຂອງຄົນຊອບທໍາເປັນບໍ່ນໍ້າແຫ່ງຊີວິດ, ແຕ່ຄວາມທາລຸນປົກຄຸມປາກ
ຄົນຊົ່ວຮ້າຍ.
12 ຄວາມກຽດຊັງກໍ່ໃຫ້ເກີດຄວາມຜິດກັນ, ແຕ່ຄວາມຮັກກໍລົບລ້າງຄວາມຜິດ
ເສຍ.
13 ໃນຮີມສົບຂອງຜູ້ທີ່ມີຄວາມເຂົ້າໃຈຈະພົບປັນຍາ, ແຕ່ໄມ້ແສ້ກໍເໝາະ
ສໍາລັບຫຼັງຂອງຜູ້ທີ່ຂາດຄວາມເຂົ້າໃຈ.
14 ຄົນມີປັນຍາກໍຮວບຮວມຄວາມຮູ້ໄວ້, ແຕ່ປາກຂອງຄົນໂງ່ນໍາຄວາມ
ຈິບຫາຍມາ.
15 ຊັບສົມບັດຂອງຄົນຮັ່ງມີ ຄືເມືອງເຂັ້ມແຂງຂອງເຂົາ, ແຕ່ຄວາມຍາກຈົນ
ຂອງຄົນຈົນ ຄືຄວາມຈິບຫາຍຂອງເຂົາ.
16 ຜົນງານຂອງຄົນຊອບທໍານໍາໄປເຖິງຊີວິດ, ແຕ່ຜົນຂອງຄົນຊົ່ວຮ້າຍນໍາ
ໄປເຖິງບາບ.
17 ຜູ້ທີ່ຮັກສາຄໍາສັ່ງສອນກໍຢູ່ໃນທາງແຫ່ງຊີວິດ, ແຕ່ວ່າຜູ້ປະຕິເສດຄໍາ
ເຕືອນສະຕິກໍຫຼົງເຮັດບາບໄປ.
18 ຜູ້ທີ່ປິດບັງຄວາມກຽດຊັງມີຮີມສົບຂີ້ຕົວະ, ແລະຜູ້ອອກປາກໃສ່ຮ້າຍທັງ
ສອງເປັນຄົນໂງ່.

19 ການເວົ້າຫຼາຍກໍຈະບໍ່ຂາດຄວາມຜິດບາບ, ແຕ່ຜູ້ທີ່ຈຳກັດການປາກເວົ້າ
ຂອງຕົນເປັນຜູ້ທີ່ສະຫຼາດ.
20 ລີ້ນຂອງຄົນຊອບທຳກໍເໝືອນເງິນທີ່ບໍລິສຸດ, ແຕ່ໃຈຂອງຄົນຊົ່ວຮ້າຍ
ມີຄ່າພຽງເລັກນ້ອຍ.
21 ຮີມສົບຂອງຄົນຊອບທຳລ້ຽງຄົນເປັນຈຳນວນຫຼາຍ, ແຕ່ຄົນໂງ່ຕາຍເພາະ
ຂາດສະຕິປັນຍາ.
22 ພຣະພອນຂອງພຣະຜູ້ເປັນເຈົ້າເຮັດໃຫ້ຮັ່ງມີ ແລະພຣະອົງບໍ່ໄດ້ແຖມ
ຄວາມໂສກເສົ້າໄວ້ດ້ວຍ.
23 ຄົນໂງ່ກະທຳຄວາມຜິດເໝືອນການຫຼິ້ນມ່ວນ, ແຕ່ຄົນທີ່ມີຄວາມເຂົ້າໃຈກໍ
ມີປັນຍາ.
24 ສິ່ງໃດທີ່ຄົນຊົ່ວຮ້າຍຢ້ານ ສິ່ງນັ້ນຈະມາເຖິງເຂົາ, ແຕ່ສິ່ງໃດທີ່ຄົນຊອບທຳ
ປາດຖະໜາຈະຊົງປະທານໃຫ້.
25 ລົມພາຍຸຜ່ານໄປສັນໃດ ຄົນຊົ່ວກໍບໍ່ມີອີກສັນນັ້ນ, ແຕ່ຄົນຊອບທຳຕັ້ງຢູ່ເປັນນິດ.
26 ນ້ຳສົ້ມເຮັດໃຫ້ເຂັດແຂ້ວ ແລະຄວັນໄຟເຮັດໃຫ້ແສບຕາຢ່າງໃດ ຄົນຂີ້ຄ້ານ
ກັບຜູ້ທີ່ໃຊ້ເຂົາກໍເປັນຢ່າງນັ້ນ.
27 ຄວາມຢຳເກງພຣະຜູ້ເປັນເຈົ້ານັ້ນຍືດຊີວິດໃຫ້ຍາວໄປ, ແຕ່ວັນເດືອນປີ
ຂອງຄົນຊົ່ວຮ້າຍນັ້ນຈະສັ້ນເຂົ້າ.
28 ຄວາມຫວັງຂອງຄົນຊອບທຳຈະຈົບລົງດ້ວຍຄວາມຍິນດີ, ແຕ່ຄວາມມຸ່ງ
ຫວັງຂອງຄົນຊົ່ວຮ້າຍກໍຈະສູນເສຍ.
29 ເສັ້ນທາງຂອງພຣະຜູ້ເປັນເຈົ້າຊົງເປັນກຳລັງແກ່ຜູ້ທ່ຽງທຳ, ແຕ່ຜູ້ເຮັດ
ຄວາມຊົ່ວຊ້າຈະຖືກທຳລາຍ.
30 ຄົນຊອບທຳຈະບໍ່ຖືກກຳຈັດຈັກເທື່ອ, ແຕ່ຄົນຊົ່ວຮ້າຍຈະບໍ່ໄດ້ຢູ່ໃນແຜ່ນດິນ.
31 ປາກຂອງຄົນຊອບທຳນຳປັນຍາອອກມາ, ແຕ່ລີ້ນຂອງຄົນປະຈົບປະແຈງ
ຈະຖືກຕັດອອກ.
32 ຮີມສົບຂອງຄົນຊອບທຳຮູ້ວ່າແມ່ນຫຍັງເໝາະສົມ, ແຕ່ປາກຂອງຄົນ
ຊົ່ວຮ້າຍເວົ້າປະຈົບປະແຈງ.

## ບົດທີ 11
# ຄວາມຈິງປຽບກັບຄວາມບໍ່ຈິງ

1 ຕາຊິງສໍ້ໂກງນັ້ນເປັນທີ່ກຽດຊັງຕໍ່ພຣະຜູ້ເປັນເຈົ້າ, ແຕ່ໝາກໂຕ້ນທີ່ຍຸຕິທຳເປັນທີ່ປິຕິຍິນດີແກ່ພຣະອົງ.

2 ເມື່ອຄວາມຈອງຫອງມາເຖິງ ຄວາມອັບອາຍກໍມາດ້ວຍ, ແຕ່ປັນຍາຢູ່ກັບຄົນຖ່ອມໃຈ.

3 ຄວາມຊື່ສັດຂອງຄົນທີ່ທ່ຽງທຳກໍນຳເຂົາ, ແຕ່ຄົນທີ່ລະເມີດຈະຖືກທຳລາຍດ້ວຍຄວາມຄິດໂກງຂອງເຂົາ.

4 ຊັບສົມບັດບໍ່ເປັນປະໂຫຍດໃນວັນຊົງພຣະພິໂລດ, ແຕ່ຄວາມຊອບທຳຊ່ວຍໃຫ້ພົ້ນຈາກຄວາມຕາຍ.

5 ຄວາມຊອບທຳຂອງຄົນໄຮ້ຕຳນິກໍຮັກສາທາງຂອງເຂົາໃຫ້ຊື່ໄປ, ແຕ່ຄົນຊົ່ວຮ້າຍຈະລົ້ມລົງດ້ວຍຄວາມຊົ່ວຮ້າຍຂອງເຂົາເອງ.

6 ຄວາມຊອບທຳຂອງຄົນທ່ຽງທຳຍ່ອມຊ່ວຍເຂົາໃຫ້ພົ້ນ, ແຕ່ຄົນລະເມີດຈະຖືກຈັບເປັນຊະເລີຍດ້ວຍກິເລດຂອງເຂົາ.

7 ເມື່ອຄົນຊົ່ວຮ້າຍຕາຍ ຄວາມຫວັງຂອງເຂົາຈະຈິບຫາຍ, ແລະຄວາມມຸ້ງຫວັງຂອງຄົນອະທຳກໍສູນເສຍ.

8 ຄົນຊອບທຳຮັບການຊ່ວຍເຫຼືອໃຫ້ພົ້ນຄວາມລຳບາກ ແລະຄົນຊົ່ວຮ້າຍເຂົ້າໄປແທນທີ່.

9 ຄົນໜ້າຊື່ໃຈຄົດທຳລາຍເພື່ອນບ້ານຂອງເຂົາດ້ວຍປາກ, ແຕ່ຄົນຊອບທຳຈະໄດ້ຮັບການຊ່ອຍໃຫ້ພົ້ນດ້ວຍອາໄສຄວາມຮູ້.

10 ເມື່ອຄົນຊອບທຳຢູ່ເຢັນເປັນສຸກ ບ້ານເມືອງກໍຊື່ນຊົມຍິນດີ, ແລະເມື່ອຄົນຊົ່ວຮ້າຍຈິບຫາຍ ກໍມີສຽງໂຮຮ້ອງ.

11 ໂດຍພຣະພອນຂອງຄົນທ່ຽງທຳ ບ້ານເມືອງກໍເປັນທີ່ຍົກຍ້ອງ, ແຕ່ວ່າມັນຖືກໂຄ່ນລົ້ມດ້ວຍປາກຂອງຄົນຊົ່ວຮ້າຍ.

12 ບຸກຄົນທີ່ຂາດສະຕິປັນຍາຍ່ອມຄຽດໃຫ້ເພື່ອນບ້ານຂອງຕົນ, ແຕ່ຄົນທີ່ມີຄວາມເຂົ້າໃຈກໍປິດປາກຢູ່.

13 ບຸກຄົນທີ່ທ່ຽວຊຸບຊິບກໍເຜີຍຄວາມລັບ, ແຕ່ບຸກຄົນທີ່ມີໃຈສັດຊື່ຍ່ອມປິດບັງສິ່ງໜຶ່ງສິ່ງໃດໄວ້ໄດ້.

14 ຢູ່ບ່ອນໃດທີ່ບໍ່ມີການນຳ ປະຊາຊົນກໍລົ້ມລົງ ແຕ່ບ່ອນໃດມີທີ່ປຶກສາຫຼາຍ ຍ່ອມມີຄວາມປອດໄພ.

15 ຜູ້ທີ່ຄ້ຳປະກັນຄົນທີ່ແປກໜ້າຈະໄດ້ຮັບຄວາມລຳບາກ, ແຕ່ຄົນທີ່ກຽດຊັງການຄ້ຳປະກັນຍ່ອມປອດໄພ.

16 ສະຕີ ທີ່ມີມາລະຍາດດີຍ່ອມສະຫງວນກຽດໄວ້, ແຕ່ຊາຍທີ່ມີອຳນາດໃຫຍ່ໂຕ ຍ່ອມສະຫງວນຊັບສົມບັດໄວ້.

17 ຜູ້ມີຄວາມເມດຕາຍ່ອມໃຫ້ປະໂຫຍດແກ່ຈິດໃຈຂອງຕົນ ແຕ່ຜູ້ໂຫດຮ້າຍຍ່ອມເຮັດໃຫ້ເນື້ອກາຍຂອງຕົນເຈັບ.

18 ບຸກຄົນຊົ່ວຮ້າຍໄດ້ເຮັດການທີ່ຫຼອກລວງ, ແຕ່ບຸກຄົນທີ່ຫວ່ານຄວາມຊອບທຳຈະໄດ້ບຳເໜັດທີ່ແນ່ນອນ.

19 ຄວາມຊອບທຳນຳໄປສູ່ຊີວິດສັນໃດ, ບຸກຄົນຜູ້ຕິດຕາມຄວາມຊົ່ວຮ້າຍຈະນຳໄປສູ່ຄວາມຕາຍສັນນັ້ນ.

20 ຄົນທີ່ມີໃຈຄິດລ້ຽວເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ, ແຕ່ຄົນທີ່ຢູ່ໃນທາງທ່ຽງທຳຍ່ອມເປັນທີ່ປິຕິຍິນດີຂອງພຣະອົງ.

21 ຈົ່ງແນ່ໃຈເຖີດ ຊຶ່ງຄົນຊົ່ວຮ້າຍຈະບໍ່ມີໂທດນັ້ນກໍບໍ່ໄດ້, ແຕ່ເຊື້ອສາຍຂອງຄົນຊອບທຳຈະໄດ້ຮັບການຊ່ອຍໃຫ້ພົ້ນ.

22 ແຫວນຄຳທີ່ເກາະດັງໝູເປັນຢ່າງໃດ ຜູ້ຍິງງາມທີ່ປາສະຈາກຄວາມສະຫຼຽວສະຫຼາດ ກໍເປັນຢ່າງນັ້ນ.

23 ຄວາມປາດຖະໜາຂອງຄົນຊອບທຳຈົບລົງໃນຄວາມດີເທົ່ານັ້ນ ແຕ່ຄວາມມຸ່ງຫວັງຂອງຄົນຊົ່ວຮ້າຍຈົບລົງໃນຄວາມພິໂລດ.

24 ຍິ່ງແຈກຈ່າຍຍິ່ງຮັ່ງມີ, ຍິ່ງຂີ້ຖີ່ຍິ່ງຍາກທຸກຈົນ.

25 ຈິດໃຈກວ້າງຂວາງຍ່ອມໄດ້ຮັບຄວາມອຸດົມສົມບູນ, ແລະບຸກຄົນທີ່ຫົດນ້ຳເຂົາເອງຈະໄດ້ຮັບການຫົດນ້ຳຄືນ.

26 ປະຊາຊົນຈະສາບແຊ່ງບຸກຄົນທີ່ກັກເຂົ້າໄວ້, ແຕ່ພຣະພອນຈະຢູ່ເທິງຫົວຂອງຜູ້ທີ່ຂາຍເຂົ້ານັ້ນ.

27 ບຸກຄົນຜູ້ສະແຫວງຫາຄວາມດີ ກໍພົບຄວາມພໍໃຈ ແຕ່ຄວາມຊົ່ວຮ້າຍຕົກຖືກຜູ້ທີ່ຊອກຫາການຊົ່ວ.

28 ບຸກຄົນຜູ້ວາງໃຈໃນຄວາມຮັ່ງມີຂອງຕົນຈະລົ້ມລະລາຍ, ແຕ່ຄົນຊອບທຳຈະຮຸ່ງເຮືອງເໝືອນໃບໄມ້ຂຽວ.

29 ບຸກຄົນຜູ້ເຮັດໃຫ້ຄົວເຮືອນຂອງເຂົາລຳບາກຈະຮັບລົມເປັນມໍລະດົກ ແລະ
ຄົນໂງ່ຈະເປັນຄົນໃຊ້ຂອງຄົນມີປັນຍາ.
30 ຜົນຂອງຄົນຊອບທຳເປັນຕົ້ນໄມ້ແຫ່ງຊີວິດ, ແລະຜູ້ທີ່ໄດ້ໃຈຄົນອື່ນເພື່ອ
ເປັນ ລາງວັນ ຄືຄົນມີປັນຍາ.
31 ເບິ່ງເຖີດ ແມ່ນແຕ່ຄົນຊອບທຳອາດຈະຖືກທຳໂທດໃນແຜ່ນດິນໂລກ, ຄົນ
ຊົ່ວຮ້າຍ ແລະຄົນບາບຈະຍິ່ງກວ່ານັ້ນຈັກເທົ່າໃດໜໍ?

## ບົດທີ12
## ຄວາມຊອບທຳກັບຄວາມຊົ່ວຮ້າຍ

1 ຜູ້ໃດທີ່ຮັກຄຳສັ່ງສອນກໍຮັກຄວາມຮູ້, ແຕ່ບຸກຄົນທີ່ກຽດຊັງການຕັກເຕືອນ
ກໍເປັນຄົນໂຫດຮ້າຍ.
2 ຄົນດີເປັນທີ່ພໍພຣະໄທຂອງພຣະຜູ້ເປັນເຈົ້າ, ແຕ່ຄົນທີ່ຄິດການຊົ່ວຮ້າຍ
ພຣະອົງຈະຊົງຕຳໜິ.
3 ຄົນຈະຕັ້ງຢູ່ດ້ວຍຄວາມຊົ່ວຮ້າຍບໍ່ໄດ້, ແຕ່ຮາກຂອງຄົນຊອບທຳຈະບໍ່ຮູ້ຈັກ
ເຄື່ອນຍ້າຍ.
4 ເມຍດີເປັນມົງກຸດຂອງຜົວແຫ່ງຕົນ, ແຕ່ນາງຜູ້ທີ່ນຳຄວາມອັບອາຍມາກໍ
ເໝືອນນ້ຳເນົ່າໃນກະດູກຜົວ.
5 ຄວາມຄິດຂອງຄົນຊອບທຳນັ້ນຍຸຕິທຳ, ແຕ່ຄຳຫາລືຂອງຄົນຊົ່ວຮ້າຍນັ້ນ
ຫຼອກລວງ.
6 ຖ້ອຍຄຳຂອງຄົນຊົ່ວຮ້າຍຄອຍຖ້າຂ້າຄົນ, ແຕ່ປາກຂອງຄົນທ່ຽງທຳຈະຊ່ອຍ
ຄົນໃຫ້ລອດພົ້ນ.
7 ຄົນຊົ່ວຮ້າຍໂຄ່ນລົ້ມ, ແລະບໍ່ມີອີກ ແຕ່ຄົວເຮືອນຂອງຄົນຊອບທຳຍັງດຳລົງ
ຢູ່.
8 ຄົນຈະໄດ້ຄຳຊົມເຊີຍຕາມສະຕິປັນຍາຂອງເຂົາ, ແຕ່ຄົນທີ່ມີຈິດໃຈຄົດລ້ຽວ
ຈະເປັນທີ່ຖືກດູໝິ່ນ.
9 ຜູ້ທີ່ຖືກສົບປະມາດແຕ່ມີຄົນຮັບໃຊ້ ກໍດີກວ່າຄົນທີ່ຍົກຍ້ອງຕົນເອງແຕ່ຂາດ
ອາຫານ.

10 ຄົນຊອບທຳຍ່ອມເຫັນແກ່ຊີວິດສັດຂອງເຂົາ, ແຕ່ຄວາມເມດຕາກະລຸນາ
ຂອງຄົນຊົ່ວຄືຄວາມໂຫດຮ້າຍ.
11 ບຸກຄົນທີ່ໄຖນາຂອງຕົນຈະມີອາຫານອຸດົມ, ແຕ່ບຸກຄົນທີ່ຕິດຕາມຄົນບໍ່ມີ
ປະໂຫຍດກໍຂາດຄວາມເຂົ້າໃຈ.
12 ຄົນຊົ່ວຮ້າຍປາດຖະໜາຜົນຂອງຄົນຊົ່ວ, ແຕ່ຮາກຂອງຄົນຊອບທຳຍ່ອມ
ອອກຜົນ.
13 ຄົນຊົ່ວຮ້າຍຍ່ອມຕິດບ້ວງແຮ້ວໂດຍການລະເມີດແຫ່ງຮີມສົບຂອງຕົນ,
ແຕ່ຄົນຊອບທຳຈະໜີພົ້ນຈາກຄວາມລຳບາກ.
14 ຈາກຜົນແຫ່ງປາກຂອງຕົນຄົນກໍອີ່ມໃຈໃນຄວາມດີ, ແລະຜົນງານແຫ່ງມື
ຂອງເຂົາກໍຈະກັບມາຫາເຂົາ.
15 ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງເຂົາເອງ, ແຕ່ຄົນທີ່ຍອມຟັງຄຳ
ແນະນຳກໍສະຫຼາດ.
16 ຄວາມໂຫດຮ້າຍຂອງຄົນໂງ່ຈະຮູ້ຈັກໄດ້ທັນທີ, ແຕ່ຄົນທີ່ຮອບຮູ້ຍ່ອມປິດ
ບັງຄວາມອັບອາຍ.
17 ບຸກຄົນຜູ້ເວົ້າຄວາມຈິງກໍສຳແດງຄວາມຊອບທຳ ແຕ່ພະຍານບໍ່ຈິງກ່າວຄຳ
ຫຼອກລວງ.
18 ມີບາງຄົນທີ່ມັກເວົ້າຖ້ອຍຄຳທີ່ແທງຄືດາບ, ແຕ່ລີ້ນຂອງຄົນມີປັນຍາກໍນຳ
ຄວາມສຸກສະບາຍມາໃຫ້.
19 ຮີມສົບແຫ່ງຄວາມຈິງຈະທົນຢູ່ໄດ້ເປັນນິດ, ແຕ່ລີ້ນທີ່ເວົ້າຂີ້ຕົວະຢູ່ໄດ້ພຽງ
ຊົ່ວຄາວ.
20 ຄວາມຫຼອກລວງຢູ່ໃນໃຈຂອງບັນດາຜູ້ຄິດແຜນການຊົ່ວຮ້າຍ ແຕ່ວ່າ ສຳລັບ
ຄົນທັງຫຼາຍທີ່ປຶກສາໃຫ້ມີສັນຕິພາບກໍມີຄວາມຍິນດີ.
21 ບໍ່ມີອັນຕະລາຍຈັກຢ່າງຈະບັງເກີດແກ່ຄົນຊອບທຳ, ແຕ່ຄົນຊົ່ວຈະເຕັມໄປ
ດ້ວຍຄວາມທຸກລຳບາກ.
22 ຮີມສົບທີ່ເວົ້າຂີ້ຕົວະເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ, ແຕ່ບັນດາ
ຜູ້ທີ່ປະພຶດຢ່າງຈິງໃຈເປັນທີ່ປິຕິຍິນດີແກ່ພຣະອົງ.
23 ຄົນທີ່ສະຫຼາດຍ່ອມເຊື່ອງຊ້ອນຄວາມຮູ້ໄວ້, ແຕ່ໃຈຂອງຄົນໂງ່ກໍເວົ້າເຖິງ
ແຕ່ຄວາມໂງ່ຈ້າ.
24 ມືຂອງຄົນທີ່ດຸໝັ່ນຈະຄອບຄອງ ຝ່າຍຄົນຂີ້ຄ້ານຈະເສຍສ່ວຍເງິນບັນນາການ.

25 ຄວາມກະວົນກະວາຍໃນໃຈຂອງມະນຸດຖ່ວງດຶງເຂົາລົງ, ແຕ່ຖ້ອຍຄຳທີ່ດີເຮັດໃຫ້ເຂົາຊື່ນຊົມ.

26 ຄົນຊອບທຳປະເສີດກວ່າເພື່ອນບ້ານຂອງຕົນ, ແຕ່ທາງຂອງຄົນຊົ່ວຮ້າຍນຳພວກເຂົາໃຫ້ຫຼົງ.

27 ຄົນຂີ້ຄ້ານຈະບໍ່ປີ້ງເຫຍື່ອທີ່ເຂົາລ່າມາ ແຕ່ຊັບສົມບັດຂອງຄົນດຸໝັ່ນກໍມີຄ່າສູງ.

28 ໃນຫົນທາງຂອງຄວາມຊອບທຳມີຊີວິດ, ແລະໃນທາງນັ້ນກໍບໍ່ມີຄວາມຕາຍ.

## ບົດທີ 13

1 ລູກຊາຍທີ່ມີປັນຍາກໍຮັບຄຳສັ່ງສອນແຫ່ງພໍ່ຂອງຕົນ, ແຕ່ຄົນມັກຫຍໍ້ຫຍັນບໍ່ຟັງຄຳຕັກເຕືອນ.

2 ຄົນດີຈະຮັບບຳເຫນັດຍ້ອນຄຳເວົ້າ, ແຕ່ຈິດໃຈຂອງຄົນລະເມີດຈະກິນຄວາມທາລຸນ.

3 ບຸກຄົນທີ່ເຝົ້າລະວັງປາກຂອງຕົນຈະຮັກສາຊີວິດຂອງຕົນໄວ້, ແຕ່ບຸກຄົນທີ່ອ້າປາກກວ້າງກໍຈະຖືກຈິບຫາຍ.

4 ຈິດໃຈຂອງຄົນຂີ້ຄ້ານກໍຢາກໄດ້ ແຕ່ບໍ່ໄດ້ຫຍັງເລີຍ ຝ່າຍຄົນດຸໝັ່ນຈະອີ່ມບໍລິບູນ.

5 ຄົນຊອບທຳກຽດຊັງຄວາມບໍ່ຈິງ, ແຕ່ຄົນຊົ່ວຮ້າຍເປັນໜ້າລັງກຽດ ແລະຖືກອັບອາຍຂາຍໜ້າ.

6 ຄວາມຊອບທຳຮັກສາຄົນທີ່ທ່ຽວທາງດ້ວຍຄວາມທ່ຽງທຳ, ແຕ່ຄວາມຊົ່ວຮ້າຍໃຫ້ຄົນບາບລົ້ມລົງ.

7 ມີຄົນທີ່ເຮັດຄືວ່າຕົນຮັ່ງມີ ແຕ່ບໍ່ມີຫຍັງເລີຍ, ແລະມີຄົນທີ່ເຮັດຄືວ່າທຸກຈົນແຕ່ມີຊັບສົມບັດຫຼາຍ.

8 ຄ່າໄຖ່ຊີວິດຂອງຄົນຄືຊັບສົມບັດຂອງເຂົາ, ແຕ່ຄົນຍາກຈົນບໍ່ຍອມຟັງຄຳຕັກເຕືອນ.

9 ຄວາມສະຫວ່າງຂອງຄົນຊອບທຳກໍປິຕິຍິນດີ, ແຕ່ຕະກຽງຂອງຄົນຊົ່ວຮ້າຍຈະຖືກດັບມອດ.

10 ເພາະຄວາມທະນົງຕົວເທົ່ານັ້ນການຜິດກັນຈຶ່ງເກີດຂຶ້ນ, ແຕ່ປັນຍາຢູ່ກັບບັນດາຜູ້ທີ່ຮັບຄຳແນະນຳ.
11 ຊັບສິນບັດທີ່ໄດ້ມາໂດຍວິທີງ່າຍ ໆຈະສູນເສຍໄປ, ແຕ່ບຸກຄົນທີ່ຮວບຮວມໂດຍການງານຈະໄດ້ເພີ່ມພູນຂຶ້ນ.
12 ຄວາມຫວັງທີ່ຖືກໜ່ວງໜ່ຽວໄວ້ກໍເຮັດໃຫ້ໃຈເຈັບຊໍ້າ, ແຕ່ເມື່ອຄວາມປາດຖະໜານັ້ນສຳເລັດແລ້ວກໍເປັນຕົ້ນໄມ້ແຫ່ງຊີວິດ.
13 ຜູ້ທີ່ດູໝິ່ນພຣະທຳຈະຖືກທຳລາຍ, ແຕ່ຜູ້ທີ່ຢຳເກງພຣະບັນຍັດຈະໄດ້ຮັບບຳເໜັດ.
14 ຄຳສັ່ງສອນຂອງຄົນມີປັນຍາເປັນນໍ້າພຸແຫ່ງຊີວິດ ເພື່ອໃຫ້ຫຼີກຈາກບ້ວງແຮ້ວຂອງຄວາມຕາຍ.
15 ຄວາມເຂົ້າໃຈທີ່ດີກໍໄດ້ຮັບຄວາມຍິນດີ, ແຕ່ຫົນທາງຂອງຄົນລະເມີດກໍຍາກໜັກໜາ.
16 ຄົນທີ່ຮອບຮູ້ທຸກຄົນເຮັດການດ້ວຍຄວາມຮູ້, ແຕ່ຄົນໂງ່ກໍເປີດເຜີຍຄວາມໂງ່ຂອງຕົນ.
17 ຜູ້ສົ່ງຂ່າວທີ່ເປັນຄົນຮ້າຍກໍຕົກໃນການຊົ່ວ, ແຕ່ລາຊະທູດທີ່ສັດຊື່ກໍນຳຄວາມສະຫງົບສຸກມາ.
18 ຄວາມຍາກຈົນ ແລະຄວາມອັບອາຍຈະມາເຖິງຄົນທີ່ປະຖິ້ມຄຳສັ່ງສອນ, ແຕ່ບຸກຄົນທີ່ສົນໃຈຄຳຕັກເຕືອນກໍໄດ້ຮັບກຽດ.
19 ຄວາມປາດຖະໜາທີ່ສຳເລັດເປັນຂອງຫວານສຳລັບຈິດໃຈ, ແຕ່ທີ່ຈະຫຼີກໜີຈາກຄວາມຊົ່ວຮ້າຍເປັນສິ່ງໜ້າກຽດໜ້າຊັງແກ່ຄົນໂງ່.
20 ບຸກຄົນທີ່ຍ່າງກັບຄົນມີປັນຍາກໍຈະກາຍເປັນຄົນສະຫຼາດ, ແຕ່ເພື່ອນຝູງຂອງຄົນໂງ່ຈະຖືກທຳລາຍ.
21 ຄວາມເສຍຫາຍຕິດຕາມຄົນບາບ, ແຕ່ຄົນຊອບທຳຈະໄດ້ຮັບຄວາມຈະເລີນຮຸ່ງເຮືອງເປັນບຳເໜັດ.
22 ຄົນດີກໍປະມໍລະດົກໄວ້ໃຫ້ແກ່ຫຼານ ໆ, ແຕ່ຊັບສິນບັດຂອງຄົນບາບນັ້ນຮວບຮວມໄວ້ໃຫ້ຄົນຊອບທຳ.
23 ດິນທີ່ຄົນຍາກຈົນໄຖໄວ້ກໍເກີດຜົນຫຼາຍ, ແຕ່ບາງສິ່ງຖືກທຳລາຍເສຍເພາະຂາດຄວາມຍຸຕິທຳ.
24 ບຸກຄົນທີ່ສະຫງວນໄມ້ແສ້ກໍກຽດຊັງລູກຊາຍຂອງຕົນ, ແຕ່ຜູ້ທີ່ຮັກເຂົາຕີສອນເຂົາໃຫ້ທັນເວລາ.

25 ຄົນຊອບທຳກິນອາຫານໄດ້ຈົນພໍໃຈ ແຕ່ວ່າທ້ອງຂອງຄົນຊົ່ວຮ້າຍຈະອຶດຢາກ.

## ບົດທີ 14

1 ຜູ້ຍິງທີ່ມີປັນຍາທຸກຄົນສ້າງເຮືອນຂອງຕົນຂຶ້ນ, ແຕ່ຜູ້ຍິງໂງ່ມ້າງມັນລົງດ້ວຍມືຂອງຕົນເອງ.
2 ບຸກຄົນຜູ້ດຳເນີນໃນຄວາມທ່ຽງທຳກໍຢຳເກງພຣະຜູ້ເປັນເຈົ້າ, ແຕ່ບຸກຄົນທີ່ດຳເນີນໃນຄວາມຄົດໂກງກໍດູໝິ່ນພຣະອົງ.
3 ໃນປາກຂອງຄົນໂງ່ມີໄມ້ແສ້ແຫ່ງຄວາມຈອງຫອງ, ແຕ່ຮີມສົບຂອງຄົນມີປັນຍາຈະຮັກສາເຂົາໄວ້.
4 ບ່ອນໃດທີ່ບໍ່ມີຄວາຍເຖິກ ບ່ອນນັ້ນເລົ້າເຂົ້າກໍຫວ່າງເປົ່າ, ເພາະພືດຜົນອຸດົມນັ້ນໄດ້ມາດ້ວຍແຮງຄວາຍ.
5 ພະຍານທີ່ສັດຊື່ຈະບໍ່ເວົ້າຂີ້ຕົວະ, ແຕ່ພະຍານບໍ່ຈິງຈະກ່າວຄຳຂີ້ຕົວະ.
6 ຄົນມັກຫຍໍ້ຫຍັນສະແຫວງຫາປັນຍາຈະບໍ່ພົບ, ແຕ່ຄວາມຮູ້ນັ້ນກໍງ່າຍແກ່ຄົນທີ່ມີຄວາມເຂົ້າໃຈ.
7 ຈົ່ງໄປໃຫ້ພົ້ນຈາກໜ້າຂອງຄົນໂງ່ ເມື່ອເຈົ້າໄດ້ເຫັນວ່າບໍ່ມີຖ້ອຍຄຳແຫ່ງຄວາມຮູ້ໃນເຂົາ.
8 ປັນຍາຂອງຄົນຮອບຮູ້ຄືການເຂົ້າໃຈທາງຂອງເຂົາ, ແຕ່ຄວາມໂງ່ຂອງຄົນໂງ່ເປັນທີ່ຫຼອກລວງ.
9 ຄົນໂງ່ຈ້າເຍາະເຍີ້ຍຄວາມຜິດບາບ, ແຕ່ໃນທ່າມກາງຄົນຊອບທຳກໍມີຄວາມຍິນດີ.
10 ໃຈຄົນຮູ້ເຖິງຄວາມຍິນດີ ແລະຄວາມຂົມຂື່ນ ບໍ່ທ່ອນມີຜູ້ໃດແບ່ງປັນກັນໄດ້.
11 ເຮືອນຂອງຄົນຊົ່ວຮ້າຍຈະຖືກທຳລາຍລົງ, ແຕ່ຕູບຂອງຄົນທ່ຽງທຳຈະຮຸ່ງເຮືອງຂຶ້ນ.
12 ມີທາງໜຶ່ງຊຶ່ງມະນຸດຄິດວ່າທາງນັ້ນຖືກຕ້ອງ, ແຕ່ວ່າໃນທີ່ສຸດຂອງທາງນັ້ນຄືຄວາມຕາຍ.
13 ເຖິງແມ່ນວ່າຄົນຫົວຫຼົ້ນ ໃນໃຈຍັງເສົ້າຢູ່, ແລະທີ່ສຸດແຫ່ງຄວາມມ່ວນຊື່ນນັ້ນຄືຄວາມໜັກໃຈ.

14 ຄົນທີ່ຫັນຫຼັງໃຫ້ພຣະເຈົ້າຈະຮັບຜົນຈາກທາງຂອງເຂົາຈົນອີ່ມ, ແລະຄົນດີກໍຈະໄດ້ຜົນດີແຫ່ງການກະທຳຂອງຕົນ.

15 ຄົນທີ່ຮູ້ໜ້ອຍເຊື່ອຖືຄຳເວົ້າທຸກຂໍ້ ແຕ່ຄົນຮອບຮູ້ກໍເບິ່ງວ່າເຂົາກຳລັງໄປທາງໃດ.

16 ຄົນມີປັນຍາລະວັງຕົວ ແລະຫຼີກໜີຈາກຄວາມຊົ່ວຮ້າຍ, ແຕ່ຄົນໂງ່ໂຫດຮ້າຍດ້ວຍຄວາມໝັ້ນໃຈ.

17 ຄົນໃຈໂຫດງ່າຍປະພຶດສິ່ງໂງ່ຈ້າ, ແລະຄົນວາງແຜນຊົ່ວຮ້າຍເປັນທີ່ກຽດຊັງ.

18 ຄົນທີ່ຮູ້ໜ້ອຍໄດ້ຄວາມໂງ່ເປັນມໍລະດົກ, ແຕ່ຄົນຮອບຮູ້ກໍໄດ້ຄວາມຮູ້ເປັນມົງກຸດ.

19 ຄົນຊົ່ວນ້ອມຕົວລົງຕໍ່ຄົນດີ, ແລະພວກຄົນຮ້າຍຄຸເຂົ່າລົງຢູ່ທີ່ປະຕູເມືອງຂອງຄົນຊອບທຳ.

20 ຄົນຍາກຈົນນັ້ນ ຖືກກຽດຊັງຈາກເພື່ອນບ້ານຂອງຕົນ, ແຕ່ຄົນຮັ່ງມີນັ້ນມີເພື່ອນຢ່າງຫຼວງຫຼາຍ.

21 ບຸກຄົນທີ່ດູໝິ່ນເພື່ອນບ້ານຂອງຕົນກໍເຮັດບາບ, ແຕ່ບຸກຄົນທີ່ເມດຕາຄົນຍາກຈົນກໍເປັນສຸກ.

22 ຄົນທີ່ຄິດການຊົ່ວນັ້ນບໍ່ຜິດຫຼື? ບັນດາຜູ້ທີ່ຄິດການດີກໍຈະພົບຄວາມເມດຕາແລະຄວາມຈິງ.

23 ການງານໜັກທຸກຢ່າງນຳກຳໄລມາ, ແຕ່ການເວົ້າລ້າໆ ພາຕົນອຶດຢາກ.

24 ມົງກຸດຂອງຄົນມີປັນຍາຄືຄວາມຮັ່ງມີຂອງຕົນ, ແຕ່ຄວາມໂງ່ເປັນມົງກຸດຂອງຄົນໂງ່ຈ້າ.

25 ພະຍານສັດຊື່ຈະຊ່ອຍຊີວິດໃຫ້ລອດ, ແຕ່ພະຍານບໍ່ຈິງຈະກ່າວຄຳຂີ້ຕົວະ.

26 ຜູ້ຢຳເກງພຣະຜູ້ເປັນເຈົ້າມີຄວາມອົບອຸ່ນໃຈ, ແລະລູກຫຼານທັງຫລາຍຈະມີທີ່ເພິ່ງພາ.

27 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນນໍ້າພຸແຫ່ງຊີວິດ ທັງຈະຊ່ອຍໃຫ້ຄົນລອດພົ້ນຈາກບ້ວງແຮ້ວຂອງຄວາມຕາຍ.

28 ກະສັດຈະມີກຽດຍ້ອນມີປະຊາຊົນຢ່າງຫຼວງຫຼາຍ, ແຕ່ຂາດປະຊາຊົນເຈົ້ານາຍກໍຖືກທຳລາຍ.

29 ບຸກຄົນທີ່ຮ້າຍຊ້າກໍມີຄວາມເຂົ້າໃຈຫຼາຍ, ແຕ່ບຸກຄົນທີ່ໃຈໂຫດງ່າຍກໍຍົກຍ້ອງຄວາມໂງ່.

30 ໃຈທີ່ສະບາຍໃຫ້ຊີວິດແກ່ເນື້ອໜັງ, ແຕ່ຄວາມອິດສາເຮັດໃຫ້ກະດູກຜຸ.

31 ບຸກຄົນຜູ້ບີບບັງຄັບຄົນຍາກຈົນ ກໍປະໝາດພຣະຜູ້ສ້າງຂອງເຂົາ, ແຕ່ບຸກຄົນທີ່ໃຫ້ກຽດແກ່ພຣະເຈົ້າກໍເມດຕາຕໍ່ຄົນຍາກຈົນ.
32 ຄົນຊົ່ວຮ້າຍຖືກໂຄ່ນລົງດ້ວຍຄວາມຊົ່ວຮ້າຍຂອງຕົນ, ແຕ່ຄົນຊອບທຳມີຄວາມຫວັງເຖິງແມ່ນວ່າໃນຄວາມຕາຍຂອງເຂົາ.
33 ປັນຍາອາໄສຢູ່ໃນໃຈຂອງຄົນທີ່ມີຄວາມເຂົ້າໃຈ, ແຕ່ທ່າມກາງຄົນໂງ່ນັ້ນບໍ່ພົບປັນຍາ.
34 ຄວາມຊອບທຳພາໃຫ້ຊາດຈະເລີນ, ແຕ່ຄວາມບາບເປັນສິ່ງລະອາຍຕໍ່ທຸກຊົນຊາດ.
35 ຂ້າລາຊະການທີ່ມີປັນຍາກໍໄດ້ຮັບຄວາມຊົມເຊີຍຈາກກະສັດ, ແຕ່ພະພິໂລດຂອງກະສັດກໍຕົກລົງເທິງຜູ້ທີ່ປະພຶດໜ້າລະອາຍ.

## ບົດທີ 15

1 ຄຳຕອບອ່ອນຫວານຊ່ວຍລະລາຍຄວາມຮ້າຍໃຫ້ຫາຍໄປ, ແຕ່ຄຳຍຸຍົງເຮັດໃຫ້ເກີດໂມໂຫ.
2 ລີ້ນຂອງຄົນມີປັນຍາໃຊ້ຄວາມຮູ້ຢ່າງຖືກຕ້ອງ, ແຕ່ປາກຂອງຄົນໂງ່ຖອກຄວາມໂງ່ອອກມາ.
3 ພຣະເນດພຣະຜູ້ເປັນເຈົ້າຢູ່ໃນທຸກແຫ່ງຫົນ ຊົງຄອຍເບິ່ງຄົນຊົ່ວແລະຄົນດີ.
4 ລີ້ນທີ່ສຸພາບເປັນຕົ້ນໄມ້ແຫ່ງຊີວິດ, ແຕ່ລີ້ນທີ່ປະຈົບປະແຈງເຮັດໃຫ້ຈິດໃຈແຕກສະຫລາຍ.
5 ຄົນໂງ່ດູໝິ່ນຄຳສັ່ງສອນຂອງຜູ້ເປັນພໍ່, ແຕ່ຜູ້ທີ່ສົນໃຈຄຳຕັກເຕືອນເປັນຜູ້ຮອບຮູ້.
6 ໃນເຮືອນຂອງຄົນຊອບທຳມີຊັບສົມບັດຫຼາຍ, ແຕ່ລາຍໄດ້ຂອງຄົນຊົ່ວຮ້າຍມີຄວາມລຳບາກ.
7 ຮີມສົບຂອງຄົນມີປັນຍາແຈກຈ່າຍຄວາມຮູ້, ແຕ່ໃຈຂອງຄົນໂງ່ບໍ່ເປັນເຊັ່ນນັ້ນ.
8 ເຄື່ອງຖວາຍບູຊາຂອງຄົນຊົ່ວຮ້າຍເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ, ແຕ່ຄຳອະທິຖານຂອງຄົນທ່ຽງທຳເປັນທີ່ປິຕິຍິນດີແກ່ພຣະອົງ.

9 ທາງຂອງຄົນຊົ່ວຮ້າຍເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ, ແຕ່ພຣະອົງ ຊົງຮັກຜູ້ທີ່ຕິດຕາມຄວາມຊອບທຳ.

10 ຄົນທີ່ປະຖິ້ມທາງດີຍ່ອມມີໂທດໜັກ, ແລະຜູ້ທີ່ກຽດຊັງຄຳເຕືອນສະຕິກໍຈະຕາຍເສຍ.

11 ນາລົກ ແລະແດນຄົນຕາຍ ກໍປະກົດແຈ້ງຢູ່ຕໍ່ໜ້າພຣະຜູ້ເປັນເຈົ້າ, ແຕ່ໃຈຂອງມະນຸດຍິ່ງແຈ່ມແຈ້ງຕໍ່ໜ້າພຣະອົງກວ່ານັ້ນຈັກເທົ່າໃດ?

12 ຄົນມັກຫຍໍ້ຫຍັນບໍ່ຮັກຄົນທີ່ຕັກເຕືອນເຂົາ, ທັງເຂົາຈະບໍ່ໄປຫາຄົນມີປັນຍາດ້ວຍ.

13 ໃຈທີ່ຍິນດີເຮັດໃຫ້ໃບໜ້າຊື່ນບານ, ແຕ່ໂດຍຄວາມເສຍໃຈຈິດວິນຍານກໍສະລາຍລົງ.

14 ບຸກຄົນຜູ້ມີຄວາມເຂົ້າໃຈກໍສະແຫວງຫາຄວາມຮູ້, ແຕ່ປາກຂອງຄົນໂງ່ກິນຄວາມໂງ່ເປັນອາຫານ.

15 ທຸກ ໆວັນຂອງຄົນທີ່ທຸກໃຈກໍຄືວັນຊົ່ວຮ້າຍ, ແຕ່ໃຈຊື່ນບານມີງານລ້ຽງຢ່າງຕໍ່ເນື່ອງ.

16 ມີເຂົ້າຂອງນ້ອຍກັບຄວາມຢຳເກງພຣະຜູ້ເປັນເຈົ້າ ກໍປະເສີດກວ່າມີຊັບສົມບັດຫຼາຍ ແຕ່ມີຄວາມວຸ້ນວາຍ.

17 ກິນຜັກເປັນອາຫານໃນບ່ອນທີ່ມີຄວາມຮັກ ກໍດີກວ່າກິນຊີ້ນງົວອ້ວນພີຢູ່ບ່ອນທີ່ມີຄວາມກຽດຊັງ.

18 ຄົນໃຈຮ້ອນຍົວະໃຫ້ຜິດກັນ, ແຕ່ຜູ້ທີ່ຊ້າໃນການຮ້າຍກໍລະງັບການຜິດຖຽງ.

19 ທາງຂອງຄົນຂີ້ຄ້ານເໝືອນຮົ້ວໜາມ, ແຕ່ທາງຂອງຄົນຊອບທຳທັງຫຼາຍກໍກ້ຽງດີ.

20 ລູກຊາຍທີ່ມີປັນຍາເຮັດໃຫ້ພໍ່ຍິນດີ, ແຕ່ຄົນໂງ່ໝິ່ນປະໝາດແມ່ຂອງຕົນ.

21 ຄວາມໂງ່ເປັນຄວາມຊື່ນບານແກ່ບຸກຄົນຜູ້ບໍ່ມີປັນຍາ ແຕ່ຄົນທີ່ມີຄວາມເຂົ້າໃຈຈະດຳເນີນໃນທາງທ່ຽງທຳ.

22 ຖ້າປາສະຈາກການປຶກສາຫາລື ແຜນງານກໍລົ້ມເຫຼວ, ແຕ່ມີຜູ້ແນະນຳຫຼາຍ ໆ ແຜນງານນັ້ນກໍສຳເລັດ.

23 ຄຳຕອບທີ່ເໝາະສົມກໍເປັນຄວາມຊື່ນບານ, ແລະຮູ້ຈັກໃຊ້ຖ້ອຍຄຳທີ່ຖືກກາລະເທສະ ກໍປະເສີດແທ້ໆ!

24 ທາງແຫ່ງຊີວິດນຳຄົນມີປັນຍາຂຶ້ນໄປສູ່ເບື້ອງເທິງ ເພື່ອເຂົາຈະໄດ້ຫຼີກໜີຈາກນາລົກເບື້ອງລຸ່ມ.

25 ພຣະຜູ້ເປັນເຈົ້າຈະຊົງທຳລາຍເຮືອນຂອງຄົນຈອງຫອງ, ແຕ່ໃຫ້ຂອບເຂດ
ຂອງແມ່ໝ້າຍຄົງຢູ່.
26 ຄວາມຄິດຂອງຄົນຊົ່ວຮ້າຍເປັນສິ່ງທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ,
ແຕ່ຖ້ອຍຄຳຂອງຄົນບໍລິສຸດເປັນທີ່ມ່ວນແກ່ຫູ.
27 ຜູ້ທີ່ຊອກຫາກຳໄລດ້ວຍການໂລບມາກໂລພາກໍເຮັດໃຫ້ຄົວເຮືອນຂອງຕົນ
ລຳບາກ, ແຕ່ບຸກຄົນຜູ້ກຽດຊັງສິນບົນຈະມີຊີວິດຢູ່.
28 ໃຈຂອງຄົນຊອບທຳພິຈາລະນາວ່າຈະຕອບຢ່າງໃດ, ແຕ່ປາກຂອງຄົນຊົ່ວ
ຮ້າຍຖອກສິ່ງຊົ່ວຮ້າຍອອກມາ.
29 ພຣະຜູ້ເປັນເຈົ້າຊົງຢູ່ຫ່າງໄກຈາກຄົນຊົ່ວຮ້າຍ, ແຕ່ພຣະອົງຊົງຮັບຟັງຄຳ
ອະທິຖານຂອງຄົນຊອບທຳ.
30 ສະຫວ່າງຂອງຕາເຮັດໃຫ້ໃຈຍິນດີ, ແລະຂ່າວດີ ເຮັດໃຫ້ກະດູກສົດຊື່ນ.
31 ຫູທີ່ຟັງຄຳຕັກເຕືອນແຫ່ງຊີວິດຈະຢູ່ທ່າມກາງຄົນມີປັນຍາ.
32 ຜູ້ທີ່ເມີນເສີຍຕໍ່ຄຳສັ່ງສອນກໍໝິ່ນປະໝາດຈິດໃຈຕົນເອງ, ແຕ່ຜູ້ທີ່ຟັງຄຳ
ຕັກເຕືອນກໍໄດ້ຄວາມເຂົ້າໃຈ.
33 ຄວາມຢຳເກງພຣະຜູ້ເປັນເຈົ້າເປັນການສອນໃຫ້ເກີດມີປັນຍາ, ແລະ
ຄວາມຖ່ອມໃຈຕ້ອງມາກ່ອນກຽດຕິຍົດ.

## ບົດທີ 16

1 ການຈັດແຈງໃຈມະນຸດ ແລະຄຳຕອບຂອງລີ້ນ ມາຈາກພຣະເຈົ້າ.
2 ທາງທັງໝົດຂອງມະນຸດກໍບໍລິສຸດໃນສາຍຕາຂອງເຂົາເອງ, ແຕ່ພຣະຜູ້
ເປັນເຈົ້າ ຊົງຊັ່ງຊາຈິດໃຈ.
3 ຈົ່ງມອບງານຂອງເຈົ້າໄວ້ກັບພຣະຜູ້ເປັນເຈົ້າ ແລະຄວາມຄິດຂອງເຈົ້າຈະ
ໄດ້ຮັບການແຕ່ງຕັ້ງໄວ້.
4 ພຣະຜູ້ເປັນເຈົ້າຊົງສ້າງທຸກສິ່ງໄວ້ຢ່າງມີເປົ້າຫມາຍ, ເຖິງແມ່ນ ຄົນ
ຊົ່ວຮ້າຍກໍເພື່ອວັນລຳບາກ.
5 ທຸກຄົນທີ່ມີໃຈຈອງຫອງເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ,
ຈົ່ງແນ່ໃຈເຖີດ ເຂົາຈະພົ້ນໂທດບໍ່ໄດ້.

6 ຄວາມເມດຕາ ແລະຄວາມຈິງໄດ້ລົບມົນທິນບາບຊົ່ວ, ແລະດ້ວຍການ
ຢຳເກງພຣະຜູ້ເປັນເຈົ້າຄົນຈຶ່ງຫຼີກໜີຈາກຄວາມຊົ່ວຮ້າຍ.
7 ເມື່ອທາງຂອງຄົນໃດເປັນທີ່ພໍພຣະໄທແກ່ພຣະຜູ້ເປັນເຈົ້າ ແມ່ນແຕ່ສັດຕູ
ຂອງເຂົານັ້ນພຣະອົງກໍ່ຊົງກະທຳ ໃຫ້ຄືນດີກັນໄດ້ຈົນກ່ວາມີຄວາມ
ສະຫງົບສຸກ.
8 ມີລາຍໄດ້ນ້ອຍທີ່ໄດ້ມາດ້ວຍຄວາມຊອບທຳ ກໍດີກວ່າມີລາຍໄດ້ຫຼາຍທີ່
ໄດ້ມາດ້ວຍຄວາມບໍ່ຍຸຕິທຳ.
9 ໃຈຂອງມະນຸດວາງແຜນການຕາມທາງຂອງເຂົາ, ແຕ່ພຣະຜູ້ເປັນເຈົ້າຊົງ
ນຳບາດກ້າວຂອງເຂົາ.
10 ຄຳຕັດສິນຊົງມາຈາກພຣະເຈົ້າຢູ່ໃນຮີມສົບຂອງກະສັດ, ພຣະໂອດຂອງ
ພຣະອົງບໍ່ລະເມີດໃນການພິພາກສາ.
11 ຕາຊັ່ງ ແລະຕາຊັ່ງທ່ຽງທຳເປັນຂອງພຣະຜູ້ເປັນເຈົ້າ, ໝາກໂຕ້ນທັງໝົດ
ໃນຖົງເປັນພຣະລາຊະກິດຂອງພຣະອົງ.
12 ການເຮັດຄວາມຊົ່ວຮ້າຍເປັນສິ່ງໜ້າກຽດໜ້າຊັງຕໍ່ກະສັດ, ເພາະວ່າ
ພຣະບັນລັງນັ້ນຖືກແຕ່ງຕັ້ງໄວ້ດ້ວຍຄວາມຊອບທຳ.
13 ຮີມສົບທີ່ຊອບທຳເປັນທີ່ປິຕິຍິນດີແກ່ກະສັດ, ແລະພຣະອົງຊົງຮັກບຸກຄົນ
ຜູ້ເວົ້າສິ່ງທີ່ຖືກຕ້ອງ.
14 ພຣະພິໂລດຂອງກະສັດເປັນເໝືອນຜູ້ສົ່ງຂ່າວຂອງຄວາມຕາຍ, ແຕ່ວ່າຄົນ
ມີປັນຍາຈະລະງັບຄວາມຮ້າຍນັ້ນໄດ້.
15 ຄວາມສະຫວ່າງແຫ່ງພຣະພັກຂອງກະສັດເຮັດໃຫ້ຄົນມີຊີວິດ, ແລະໃນ
ຄວາມພໍພຣະໄທຂອງພຣະອົງກໍເໝືອນເມກທີ່ນຳຝົນປາຍລະດູມາ.
16 ຄົນໄດ້ປັນຍາກໍດີກວ່າໄດ້ຄຳ ຈັກເທົ່າໃດ ໜໍ! ທີ່ຈະໄດ້ຄວາມເຂົ້າໃຈກໍດີ
ກວ່າເລືອກເອົາເງິນ!
17 ທາງຫຼວງຂອງຄົນທ່ຽງທຳຫັນອອກຈາກຄວາມຊົ່ວຮ້າຍ, ບຸກຄົນຜູ້
ຄຸ້ມຄອງທາງຂອງຕົນກໍຮັກສາຊີວິດຂອງເຂົາໄວ້.
18 ຄວາມຈອງຫອງນຳໜ້າການຖືກທຳລາຍ, ແລະຈິດໃຈໂອ້ອວດມາກ່ອນ
ການລົ້ມ.
19 ທີ່ຈະເປັນຄົນມີໃຈຖ່ອມລົງຢູ່ກັບຄົນຍາກຈົນ ກໍດີກວ່າມີສ່ວນແບ່ງເຂົ້າຂອງ
ທີ່ປຸ້ນມາໄດ້ກັບຄົນຈອງຫອງ.

20 ບຸກຄົນຜູ້ແກ້ບັນຫາດ້ວຍສະຕິປັນຍາຈະພົບຂອງດີ, ແລະຄົນທີ່ວາງໃຈໃນ
ພຣະຜູ້ເປັນເຈົ້າຈະເປັນສຸກ.
21 ຄົນທີ່ມີປັນຍາເອີ້ນວ່າເປັນຄົນຮອບຮູ້, ແລະຄວາມອ່ອນຫວານແຫ່ງຮີມສົບ
ເພີ່ມຄວາມຮຽນຮູ້ຂຶ້ນ.
22 ຄວາມເຂົ້າໃຈເປັນນ້ຳພຸແຫ່ງຊີວິດແກ່ຜູ້ທີ່ມີຄວາມເຂົ້າໃຈນັ້ນ, ແຕ່ຄວາມໂງ່
ເປັນການລົງໂທດແກ່ຄົນໂງ່.
23 ໃຈຂອງຄົນມີປັນຍາເຮັດໃຫ້ປາກຂອງເຂົາມີສະຕິອັນດີ ແລະເພີ່ມການຮຽນ
ຮູ້ແກ່ຮີມສົບຂອງເຂົາ.
24 ຖ້ອຍຄຳທີ່ມ່ວນຫູເໝືອນຮັງເຜິ້ງ ຊຶ່ງເປັນຄວາມຫວານແກ່ຈິດໃຈ ແລະໃຫ້
ກະດູກສະບາຍຢູ່.
25 ມີທາງໜຶ່ງຊຶ່ງມະນຸດຄິດວ່າທາງນັ້ນຖືກຕ້ອງ ແຕ່ວ່າທີ່ສຸດຂອງທາງນັ້ນຄື
ຄວາມຕາຍ.
26 ຄົນທີ່ເຮັດວຽກກໍເຮັດວຽກເພື່ອຕົນເອງ, ເພາະປາກຂອງເຂົາປາດຖະໜາ
ສິ່ງນັ້ນ.
27 ຄົນອະທຳປອງເຮັດຄວາມຊົ່ວ, ແລະໃນຮີມສົບຂອງເຂົາມີໄຟທີ່ໄໝ້ຢູ່.
28 ຄົນສອງລີ້ນຫວ່ານຄວາມແຕກແຍກ, ແລະຜູ້ທີ່ເວົ້າຊຸບຊິບກໍແຍກເພື່ອນ
ສະນິດອອກຈາກກັນ.
29 ຄົນທາລຸນລໍ້ລວງເພື່ອນບ້ານຂອງເຂົາ ແລະນຳເຂົາໄປໃນທາງທີ່ບໍ່ດີ,
30 ເຂົາຍິກຄິ້ວລິ່ວຕາເພື່ອວາງແຜນງານຫລອກລວງ, ເຂົາກັດສົບຂອງເຂົາ
ນຳຄວາມຊົ່ວຮ້າຍໃຫ້ເກີດຂຶ້ນ.
31 ຫົວທີ່ມີຜົມຫງອກເປັນມົງກຸດແຫ່ງສະຫງ່າລາສີ ຂອງຜູ້ທີ່ດຳເນີນຊີວິດໃນ
ຄວາມຊອບທຳ.
32 ບຸກຄົນຜູ້ຮ້າຍຊ້າກໍດີກວ່າຄົນມີກຳລັງຫຼາຍ, ແລະບຸກຄົນຜູ້ປົກຄອງຈິດໃຈ
ຂອງຕົນເອງກໍດີກວ່າຜູ້ທີ່ຕີເມືອງໄດ້.
33 ມະນຸດຈັບສະຫຼາກນັ້ນເຂົາຖິ້ມທີ່ຕັກ, ແຕ່ການຕັດສິນມາຈາກພຣະຜູ້ເປັນ
ເຈົ້າທັງໝົດ.

## ບົດທີ 17

1 ອາຫານແຫ້ງພຽງເລັກນ້ອຍພ້ອມກັບຄວາມສະຫງົບ ດີກວ່າເຮືອນທີ່ມີ
ງານລ້ຽງ[3] ພ້ອມກັບການຜິດກັນ.

2 ຄົນໃຊ້ທີ່ສະຫລາດຈະປົກຄອງລູກຊາຍທີ່ປະພຶດຄວາມອັບອາຍ ແລະຈະ
ໄດ້ສ່ວນແບ່ງມໍລະດົກເທົ່າກັບພວກພີ່ນ້ອງ.

3 ເບົ້າມີໄວ້ສຳລັບຫຼໍ່ເງິນ ແລະເຕົາຫຼອມໂລຫະມີໄວ້ສຳລັບຫຼໍ່ຄຳ ແຕ່ພຣະຜູ້
ເປັນເຈົ້າຊົງທົດລອງໃຈຄົນທັງປວງ.

4 ຜູ້ເຮັດຄວາມຊົ່ວມັກຟັງຮິມສົບທີ່ບໍ່ຈິງ, ແລະຄົນຂີ້ຕົວະມັກຟັງລີ້ນທີ່
ຕົວະຕົ້ມ.

5 ບຸກຄົນທີ່ຫຍໍ້ຫຍັນຄົນຍາກຈົນກໍປະໝາດພຣະຜູ້ສ້າງຂອງເຂົາ, ແລະທຸກ
ຄົນ ທີ່ຍິນດີເມື່ອມີໄພພິບັດຈະພົ້ນໂທດບໍ່ໄດ້.

6 ຫຼານ ໆເປັນມົງກຸດຂອງຄົນເຖົ້າ, ແລະສະຫງ່າລາສີຂອງລູກໆ ຄືພໍ່ຂອງ
ເຂົາ.

7 ຄຳເວົ້າທີ່ດີເລີດບໍ່ເໝາະແກ່ຄົນໂງ່ສັນໃດ, ຮິມສົບທີ່ຂີ້ຕົວະຍິ່ງບໍ່ເໝາະແກ່
ເຈົ້ານາຍສັນນັ້ນ.

8 ສິນບົນເໝືອນແກ້ວວິເສດໃນສາຍຕາຂອງຜູ້ໃຫ້, ມັນຈະຫັນໄປທາງໃດ
ກໍສຳເລັດຜົນທາງນັ້ນ.

9 ການປິດບັງຄວາມຜິດ ສ້າງມິດຕະພາບ, ແຕ່ຄົນປາກໂປ້ງທຳລາຍ
ມິດຕະພາບ.

10 ຄຳຕິຕຽນຄັ້ງດຽວຈະເກີດປະໂຫຍດແກ່ຄົນມີປັນຍາຫຼາຍກວ່າ ຊ້ຽນຕີຄົນ
ໂງ່ຈ້າຮ້ອຍບາດ.

11 ຄົນຊົ່ວຮ້າຍກໍສະແຫວງຫາແຕ່ການກະບົດ, ສະນັ້ນຈະມີຜູ້ສົ່ງຂ່າວ
ໂຫດຮ້າຍໄປສູ່ເຂົາ.

12 ໃຫ້ຄົນໄປພົບແມ່ໝີທີ່ລູກຖືກລັກໄປ ຍັງດີກວ່າໄປພົບຄົນໂງ່ໃນຄວາມໂງ່
ຂອງເຂົາ.

13 ຖ້າຄົນໜຶ່ງຄົນໃດເຮັດຊົ່ວຕອບແທນຄວາມດີ ຄວາມຊົ່ວຈະບໍ່ພາກຈາກຄົວ
ເຮືອນຂອງຄົນນັ້ນ.

---

3 ງານລ້ຽງ ໃນພາສາເຮັບເລີຫມາຍເຖິງ ຊີ້ນສັດເພື່ອຖວາຍບູຊາແກ່ພຣະເຈົ້າ

14 ເມື່ອເລີ່ມຕົ້ນຜິດກັນກໍເໝືອນປ່ອຍນໍ້າໃຫ້ໄຫຼ, ສະນັ້ນຈົ່ງຫຼີກເສຍກ່ອນເກີດ
ການຜິດກັນ.
15 ບຸກຄົນທີ່ວ່າຄົນຊົ່ວຮ້າຍນັ້ນຖືກ ແລະບຸກຄົນທີ່ລົງໂທດຄົນຊອບທຳ ທັງສອງ
ຄົນນັ້ນກໍເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ.
16 ເປັນຫຍັງຄົນໂງ່ຈຶ່ງມີເງິນໃນມືເພື່ອຊື້ປັນຍາ ໃນເມື່ອເຂົາບໍ່ມີໃຈຢາກໄດ້?
17 ມິດສະຫາຍກໍມີຄວາມຮັກຢູ່ທຸກເວລາ ແລະອ້າຍນ້ອງກໍເກີດມາກໍເພື່ອ
ຊ່ອຍກັນໃນຍາມທຸກຍາກ.
18 ຄົນທີ່ໄຮ້ຄວາມເຂົ້າໃຈກໍໃຫ້ຄຳປະຕິຍານ ແລະເປັນຜູ້ຮັບປະກັນຕໍ່ໜ້າ
ເພື່ອນບ້ານຂອງຕົນ.
19 ບຸກຄົນຜູ້ຮັກການຜິດກັນກໍຮັກການລະເມີດ, ແລະຜູ້ທີ່ເຮັດປະຕູເຮືອນຂອງ
ເຂົາໃຫ້ສູງກໍກ້າວສູ່ຄວາມຈິບຫາຍ.
20 ຜູ້ໜຶ່ງຜູ້ໃດມີໃຈປະຈົບປະແຈງກໍບໍ່ພົບສິ່ງທີ່ດີອັນໃດ, ແລະຜູ້ທີ່ລີ້ນບໍ່ສັດ
ຊື່ກໍຕົກຢູ່ໃນຄວາມຍາກລຳບາກ.
21 ຜູ້ທີ່ມີລູກຊາຍເປັນຄົນໂງ່ກໍມີຄວາມໂສກເສົ້າ, ແລະພໍ່ຂອງຄົນໂງ່ບໍ່ມີ
ຄວາມຊື່ນບານ.
22 ໃຈຊື່ນບານເຮັດໃຫ້ສະບາຍຂຶ້ນເໝືອນຢາດີ, ແຕ່ຈິດໃຈແຕກສະຫຼາຍເຮັດ
ໃຫ້ກະດູກຫ່ຽວແຫ້ງ.
23 ຄົນຊົ່ວຮ້າຍຮັບສິນບົນໃນທີ່ລັບລີ້ ເພື່ອບິດເບືອນທາງແຫ່ງຄວາມຍຸຕິທຳ.
24 ຄົນທີ່ມີຄວາມເຂົ້າໃຈມຸ້ງໜ້າໄປສູ່ປັນຍາ, ແຕ່ຕາຂອງຄົນໂງ່ກໍບໍ່ມີຈຸດໝາຍ.
25 ລູກຊາຍໂງ່ເປັນທີ່ທຸກໂສກແກ່ພໍ່ ແລະເປັນຄວາມຂົມຂື່ນແກ່ແມ່ຜູ້ໃຫ້ກຳເນີດ.
26 ທີ່ຈະລົງໂທດຄົນຊອບທຳກໍບໍ່ດີ ທີ່ຈະຕີເຈົ້ານາຍເພາະເຫດຄວາມທ່ຽງທຳ
ກໍຜິດ.
27 ບຸກຄົນທີ່ມີຄວາມຮູ້ ກໍຫ້າມຖ້ອຍຄຳຂອງເຂົາ, ແລະຄົນທີ່ມີຄວາມເຂົ້າໃຈ
ແທ້ ໆ ກໍມີຈິດວິນຍານດີເລີດ.
28 ເຖິງຄົນໂງ່ອັດປາກໄວ້ກໍນັບວ່າເປັນຄົນມີປັນຍາ, ແລະຄົນທີ່ຫຸບຮີມສົບ
ຂອງເຂົາກໍໄດ້ຮັບການຍ້ອງວ່າ ເປັນຄົນມີຄວາມເຂົ້າໃຈ.

## ບົດທີ 18

1 ຕົນທາຂອງມະນຸດຫລັງຈາກທີ່ແຍກຕົວອອກໄປ ກໍ່ໄດ້ຂັດຄ້ານແລະທຳລາຍ ສະຕິປັນຍາທັງຫລາຍ.[1]

2 ຄົນໂງ່ບໍ່ເພີດເພີນໃນຄວາມເຂົ້າໃຈ ເວັ້ນແຕ່ຈະພົບຄວາມປາດຖະໜາແຫ່ງໃຈຂອງຕົນ.

3 ເມື່ອຄົນຊົ່ວຮ້າຍມາເຖິງ ຄວາມໝິ່ນປະມາດກໍມາດ້ວຍ ແລະການເສຍກຽດກໍມາກັບຄວາມອັບອາຍຂາຍໜ້າ.

4 ຖ້ອຍຄຳຂອງປາກມະນຸດເປັນດັ່ງນ້ຳເລິກ ແລະນ້ຳພຸແຫ່ງປັນຍາເໝືອນນ້ຳທີ່ເປັນແກ້ງໄຫຼໄປ.

5 ໃນການຕັດສິນທີ່ເຂົ້າຂ້າງຄົນຊົ່ວຮ້າຍເພື່ອຈະລົບລ້າງຄົນຊອບທຳກໍບໍ່ດີ.

6 ຮີມສົບຂອງຄົນໂງ່ນຳການຜິດຖຽງມາ ແລະປາກຂອງເຂົາກໍເຊື້ອເຊີນການຂ້ຽນຕີ.

7 ປາກຂອງຄົນໂງ່ແມ່ນຄວາມຈິບຫາຍຂອງເຂົາເອງ ແລະຮີມສົບຂອງເຂົາກໍເປັນບ້ວງແຮ້ວດັກຈັບຕົນເອງ.

8 ຖ້ອຍຄຳຂອງຜູ້ທີ່ນິນທາກໍເໝືອນແຊບຊ້ອຍ ມັນຊຶມເຂົ້າໄປຍັງທຸກສ່ວນຂອງຮ່າງກາຍ.

9 ທຸກຄົນທີ່ຂີ້ຄ້ານໃນງານຂອງຕົນກໍເປັນພີ່ນ້ອງກັບຄົນທີ່ມັກທຳລາຍ.

10 ພຣະນາມຂອງພຣະຜູ້ເປັນເຈົ້າເປັນປ້ອມທີ່ເຂັ້ມແຂງ, ຄົນຊອບທຳແລ່ນເຂົ້າໄປໃນນັ້ນ ແລະໄດ້ຮັບຄວາມປອດໄພ.

11 ຊັບສິນບັດຂອງເສດຖີເປັນເມືອງເຂັ້ມແຂງຂອງເຂົາ ແລະເປັນເໝືອນກຳແພງສູງຕາມຄວາມຄິດເຫັນຂອງເຂົາ.

12 ໃຈຂອງຄົນກໍຈອງຫອງຂຶ້ນ ກ່ອນການຖືກທຳລາຍຈະມາ ແລະກ່ອນໄດ້ຮັບກຽດຕິຍົດຄວາມຖ່ອມໃຈຈະຕ້ອງມາກ່ອນ.

13 ຜູ້ທີ່ຕອບກ່ອນທີ່ເຂົາໄດ້ຟັງເລື່ອງ, ກໍເປັນຄວາມໂງ່ ແລະຄວາມອັບອາຍຂອງເຂົາ.

---

1 ຫຼື "ດ້ວຍຄວາມປາດຖະໜາຄົນໜຶ່ງຄົນໃດ ເມື່ອແຍກອອກຈາກຄົນອື່ນແລ້ວ ກໍສະແຫວງຫາແລະກ່ຽວຄອງກັບສະຕິປັນຍາຢ່າງດຽວ" (ຄືກັບນັກບວດ)

14 ຈິດໃຈຂອງຄົນຈະທົນຕໍ່ຄວາມເຈັບປວດຂອງເຂົາໄດ້, ແຕ່ຈິດໃຈທີ່ແຕກ
ສະຫຼາຍໃຜຈະສາມາດທົນໄດ້?
15 ໃຈຂອງຄົນສະຫຼາດຍ່ອມໄດ້ຄວາມຮູ້, ແລະຫູຂອງຄົນມີປັນຍາສະແຫວງ
ຫາຄວາມຮູ້.
16 ຂອງຂວັນຂອງຜູ້ໃຫ້ຍ່ອມເປີດທາງໃຫ້ຜູ້ນັ້ນ ແລະນຳເຂົາໄປເຖິງຄົນໃຫຍ່
ຄົນໂຕ.
17 ຜູ້ທີ່ເວົ້າເຖິງຄະດີຂອງຕົນກ່ອນກໍເບິ່ງຄືເປັນຝ່າຍຖືກ ຈົນກວ່າຝ່າຍກົງກັນຂ້າມ
ຈະມາສອບສວນເຂົາ.
18 ການຈັບສະຫຼາກເຮັດໃຫ້ການຖຽງກັນສິ້ນສຸດ ແລະລະງັບການໂຕ້ແຍ້ງ
ທີ່ຮຸນແຮງ.
19 ການທີ່ຈະຄືນດີກັນກັບພີ່ນ້ອງທີ່ສະດຸດກັນແລ້ວ, ກໍຍາກກວ່າການທີ່ຈະ
ເອົາຊະນະເມືອງທີ່ເຂັ້ມແຂງ.
20 ທ້ອງຈະອີ່ມກໍຈາກຜົນແຫ່ງປາກຂອງເຂົາ, ເຂົາຈະໝຳໃຈເພາະຜົນອັນ
ເກີດຈາກຮີມສົບຂອງຕົນ.
21 ຄວາມຕາຍ ແລະຊີວິດຢູ່ທີ່ອຳນາດຂອງລີ້ນ, ແລະບັນດາຜູ້ທີ່ຮັກມັນກໍຈະ
ກິນຜົນຂອງມັນ.
22 ບຸກຄົນທີ່ພົບເມຍກໍພົບຂອງດີ ແລະໄດ້ຄວາມຍິນດີຈາກພຣະຜູ້ເປັນເຈົ້າ.
23 ຄົນຍາກຈົນໃຊ້ຄຳອ້ອນວອນ, ແຕ່ຄົນຮັ່ງມີຕອບຄຳເວົ້າທີ່ຫຍາບຊ້າ.
24 ຄົນທີ່ມີເພື່ອນຫຼາຍຕ້ອງທຳທ່າເຮັດເປັນເພື່ອນຕອບ, ແຕ່ມີມິດບາງຄົນທີ່
ໃກ້ຊິດຍິ່ງກວ່າພີ່ນ້ອງອີກ.

## ບົດທີ 19
## ຄົນສະຫຼາດປຽບກັບຄົນໂງ່ຈ້າ

1 ຄົນຍາກຈົນຜູ້ດຳເນີນໃນຄວາມຊື່ສັດຂອງເຂົາ ດີກວ່າຄົນທີ່ມີຮີມສົບປະຈົບ
ປະແຈງ ແລະເປັນຄົນໂງ່.
2 ທີ່ບໍ່ມີຄວາມຮູ້ກໍບໍ່ດີ ແລະບຸກຄົນທີ່ຮີບແລ່ນໄປກໍມັກຜິດພາດ.

3 ຄວາມໂງ່ຂອງຄົນ ກໍເຮັດໃຫ້ທາງຂອງເຂົາຄົດລ້ຽວ, ແລະໃຈຂອງເຂົາກໍຕໍ່ຕ້ານ
ພຣະຜູ້ເປັນເຈົ້າ.
4 ຊັບສົມບັດເປັນເຫດໃຫ້ມີເພື່ອນຫຼາຍ, ແຕ່ຄົນຍາກຈົນກໍຖືກແຍກອອກ
ຈາກເພື່ອນບ້ານຂອງຕົນ.
5 ພະຍານບໍ່ຈິງຈະບໍ່ໄດ້ຮັບໂທດບໍ່ໄດ້ ແລະບຸກຄົນຜູ້ເວົ້າຄຳຂີ້ຕົວະຈະໜີ
ບໍ່ພົ້ນ.
6 ຄົນເປັນຈຳນວນຫຼາຍເອົາອົກເອົາໃຈເຈົ້ານາຍ, ແລະທຸກຄົນກໍເປັນເພື່ອນ
ກັບຄົນທີ່ໃຫ້ຂອງຂວັນ.
7 ບັນດາພີ່ນ້ອງຂອງຄົນຍາກຈົນກໍຍັງກຽດຊັງເຂົາ, ເພື່ອນຂອງເຂົາກໍຍິ່ງໜີ
ໄກຈາກເຂົາຈັກເທົ່າໃດ? ເຂົາພະຍາຍາມເວົ້າ ແຕ່ບໍ່ມີໃຜຍອມຟັງ.
8 ບຸກຄົນທີ່ໄດ້ປັນຍາກໍຮັກຈິດໃຈຂອງຕົນເອງ, ບຸກຄົນຜູ້ຮັກສາຄວາມເຂົ້າໃຈ
ໄວ້ຈະພົບສິ່ງທີ່ດີ.
9 ພະຍານບໍ່ຈິງຈະບໍ່ໄດ້ຮັບໂທດບໍ່ໄດ້ ແລະບຸກຄົນທີ່ເວົ້າຄຳຂີ້ຕົວະຈະຈິບຫາຍ.
10 ທີ່ຄົນໂງ່ຈະຢູ່ຢ່າງສຳລານກໍບໍ່ເໝາະສົມຢູ່ແລ້ວ ທີ່ຄົນໃຊ້ຈະປົກຄອງເຈົ້າ
ນາຍກໍຍິ່ງບໍ່ເໝາະຫຼາຍກວ່ານັ້ນອີກ.
11 ສາມັນສຳນຶກທີ່ດີເຮັດໃຫ້ຄົນຮ້າຍຊ້າ, ແລະທີ່ເບິ່ງຂ້າມການລະເມີດໄປ
ເສຍກໍເປັນສະຫງ່າລາສີແກ່ເຂົາ.
12 ພະພິໂລດຂອງກະສັດເໝືອນສຽງຮ້ອງຂອງສິງໂຕໃຫຍ່, ແຕ່ຄວາມພໍ
ພຣະໄທຂອງພຣະອົງເໝືອນນ້ຳໝອກເທິງຫຍ້າ.
13 ລູກຊາຍໂງ່ຈ້າເປັນໄພພິບັດຂອງຜູ້ເປັນພໍ່, ແລະການຜິດກັນຂອງເມຍກໍ
ເໝືອນນ້ຳຝົນຍ້ອຍຫຍົດລົງບໍ່ຢຸດ.
14 ເຮືອນ ແລະຊັບສົມບັດເປັນມໍລະດົກມາຈາກພໍ່, ແລະເມຍທີ່ຮອບຮູ້ກໍມາ
ຈາກພຣະຜູ້ເປັນເຈົ້າ.
15 ຄວາມກຽດຄ້ານເຮັດໃຫ້ຫຼັບສະນິດ, ແລະຄົນຂີ້ຄ້ານຈະຕ້ອງອຶດຢາກ.
16 ບຸກຄົນທີ່ຮັກສາພຣະບັນຍັດກໍຮັກສາຊີວິດຂອງຕົນ, ບຸກຄົນທີ່ດູໝິ່ນເສັ້ນ
ທາງທັງຫຼາຍຂອງພຣະອົງກໍຈະເຖິງຕາຍ.
17 ບຸກຄົນທີ່ເມດຕາຄົນຍາກຈົນກໍໃຫ້ພຣະຜູ້ເປັນເຈົ້າຊົງຢືມ, ແລະພຣະອົງ
ຈະຊົງຕອບແທນແກ່ການກະທຳ ຂອງເຂົາ.
18 ຈົ່ງຕີສອນລູກຊາຍຂອງຕົນເມື່ອຍັງມີຄວາມຫວັງ, ຢ່າໃຈອ່ອນເພາະການ
ຮ້ອງໄຫ້ຂອງເຂົາ.

19 ຄົນທີ່ໃນໂທໂຫດຮ້າຍຈະຕ້ອງໄດ້ຮັບໂທດ, ເພາະຖ້າເຈົ້າຊ່ວຍເຂົາໃຫ້
ພົ້ນແລ້ວ ກໍຕ້ອງຊ່ວຍເຂົາໃຫ້ພົ້ນອີກເລື້ອຍໆ.
20 ຈົ່ງຟັງຄຳແນະນຳ ແລະຮັບຄຳສັ່ງສອນ ເພື່ອເຈົ້າຈະໄດ້ປັນຍາສຳລັບ
ອານາຄົດຂອງເຈົ້າ.
21 ໃນໃຈຂອງມະນຸດມີແຜນງານເປັນຈຳນວນຫຼາຍ, ແຕ່ພຣະປະສົງຂອງ
ພຣະຜູ້ເປັນເຈົ້ານັ້ນແຫຼະ ຈະດຳລົງຢູ່ໄດ້.
22 ສິ່ງທີ່ໜ້າປາດຖະໜາໃນຕົວມະນຸດຄືຄວາມເມດຕາ, ແລະຄົນຍາກຈົນ
ຍັງດີກວ່າຄົນຂີ້ຕົວະ.
23 ຄວາມຢຳເກງພຣະຜູ້ເປັນເຈົ້ານຳໄປສູ່ຊີວິດ, ແລະຜູ້ທີ່ໄດ້ຮັບແລ້ວກໍມີ
ຄວາມພໍໃຈ, ແລະເຂົາຈະບໍ່ມີອັນຕະລາຍໃດໆມາເຖິງເຂົາ.
24 ຄົນຂີ້ຄ້ານກອດມືຂອງຕົນໄວ້ໃນເອິກ, ແລະບໍ່ຍອມແມ່ນແຕ່ຈະນຳອາຫານ
ມາສູ່ປາກຂອງຕົນ.
25 ຈົ່ງຕີຄົນທີ່ມັກຫຍໍ້ຫຍັນ ແລະຄົນທີ່ຮູ້ໜ້ອຍຈະໄດ້ລະວັງຕົນເອງ, ຈົ່ງ
ຕັກເຕືອນຄົນທີ່ມີຄວາມເຂົ້າໃຈ ແລະເຂົາຈະໄດ້ຄວາມຮູ້.
26 ບຸກຄົນຜູ້ເຮັດທາລຸນແກ່ພໍ່ຂອງເຂົາ ແລະຂັບໄລ່ແມ່ຂອງເຂົາໄປ ເປັນລູກ
ຊາຍຜູ້ກໍໃຫ້ເກີດຄວາມອັບອາຍ ແລະຮັບການຖືກຕຳໜິ.
27 ລູກຊາຍຂອງເຮົາເອີຍ ຈົ່ງຢຸດຟັງຄຳສັ່ງສອນທີ່ເຮັດໃຫ້ເຈົ້າຫຼົງໄປຈາກຄຳ
ແຫ່ງຄວາມຮູ້.
28 ພະຍານທີ່ອະທຳກໍດູໝິ່ນຄວາມຍຸຕິທຳ, ແລະປາກຂອງຄົນຊົ່ວຮ້າຍກໍກືນ
ກິນແຕ່ຄວາມຊົ່ວຊ້າ.
29 ການຮັບໂທດມີພ້ອມຢູ່ສຳລັບຄົນມັກໝິ່ນປະໝາດ ແລະການຂ້ຽນຕີກໍ
ສຳລັບຫຼັງຂອງຄົນໂງ່.

## ບົດທີ 20

## ຄຳເຕືອນສະຕິ ແລະຄຳສັ່ງສອນ

1 ເຫຼົ້າອະງຸ່ນໃຫ້ເກີດການຫຍໍ້ຫຍັນ ແລະສຸລາກໍພາໃຫ້ເກີດເປັນຄົນ
ໂຫດຮ້າຍ, ຜູ້ໃດຖືກມັນຫຼອກລວງກໍບໍ່ເປັນຄົນມີປັນຍາ.

2 ຄວາມໂຫດຮ້າຍແຫ່ງກະສັດກໍເໝືອນສິງໂຕໃຫຍ່ຮ້ອງ, ຜູ້ໃດຍົວະເຍົ້າພຣະອົງໃຫ້ພິໂລດກໍທຳຮ້າຍຕົນເອງ.

3 ຜູ້ທີ່ຢຸດການຜິດຖຽງກັນກໍຮັບກຽດຕິຍົດ, ແຕ່ຄົນໂງ່ທຸກຄົນຈະເຂົ້າຫຍຸ້ງກ່ຽວເລື່ອງຂອງຄົນອື່ນ.

4 ຄົນຂີ້ຄ້ານບໍ່ໄຖນາໃນຍາມເຮັດນາ, ເຂົາຈະໄປຂໍເມື່ອເຖິງລະດູເກັບກ່ຽວແຕ່ບໍ່ໄດ້ຫຍັງເລີຍ.

5 ຄວາມປະສົງໃນໃຈຂອງຄົນເໝືອນນ້ຳເລິກ, ແຕ່ຄົນທີ່ມີຄວາມເຂົ້າໃຈຈະສາມາດຕັກມັນອອກມາໄດ້.

6 ຄົນສ່ວນຫຼາຍຈະເວົ້າເຖິງຄວາມດີຂອງຕົນເອງ, ແຕ່ໃຜຈະພົບຄົນສັດຊື່ໄດ້?

7 ຄົນຍຸຕິທຳດຳເນີນໃນຄວາມສັດຊື່ຂອງຕົນ, ລູກທັງຫຼາຍຂອງເຂົາທີ່ເກີດຕາມເຂົາມາຍ່ອມໄດ້ຮັບພຣະພອນ.

8 ກະສັດຜູ້ປະທັບເທິງບັນລັງພິພາກສາຍ່ອມຊົງກຳຈັດຄວາມຊົ່ວອອກດ້ວຍພຣະເນດຂອງພຣະອົງ.

9 ຜູ້ໃດຈະກ້າເວົ້າໄດ້ວ່າ "ຂ້າພະເຈົ້າໄດ້ເຮັດໃຫ້ໃຈຂອງຂ້າພະເຈົ້າສະອາດແລ້ວ ຂ້າພະເຈົ້າບໍລິສຸດຈາກບາບຂອງຂ້າພະເຈົ້າ"?

10 ເຄື່ອງຊັ່ງແລະຕາຊົງຂີ້ສໍ້ ທັງສອງນີ້ເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າເໝືອນກັນ.

11 ແມ່ນແຕ່ເດັກນ້ອຍ ໆກໍສະແດງອອກໂດຍການປະພຶດຂອງເຂົາວ່າ ສິ່ງທີ່ເຂົາເຮັດຈະບໍລິສຸດ ແລະຖືກຕ້ອງຫຼືບໍ່.

12 ຫູທີ່ຟັງໄດ້ ແລະຕາທີ່ເບິ່ງເຫັນ ພຣະຜູ້ເປັນເຈົ້າຊົງສ້າງມັນທັງສອງ.

13 ຢ່າຮັກການຫຼັບສະນິດ ຢ້ານວ່າຄວາມຍາກຈົນຈະມາເຖິງເຈົ້າ, ຈົ່ງມືນຕາຂອງເຈົ້າ ແລະເຈົ້າຈະໄດ້ກິນອາຫານອີ່ມ.

14 ຄົນທີ່ຊື້ເຄື່ອງກໍເວົ້າວ່າ "ນີ້ບໍ່ດີ, ແພງໂພດ," ແຕ່ເມື່ອເຂົາໄປແລ້ວ, ເຂົາຈຶ່ງຄຸຍໂມ້.

15 ມີຄຳ ແລະແກ້ວພິລາເປັນຈຳນວນຫຼາຍ ແຕ່ຮີມສົບແຫ່ງຄວາມຮູ້ກໍເປັນເພັດນິນຈິນດາປະເສີດແທ້ໆ.

16 ຈົ່ງຢຶດເສື້ອຜ້າຂອງເຂົາໄວ້ ເມື່ອເຂົາປະກັນໃຫ້ຄົນອື່ນ, ແລະຢຶດຕົວເຂົາໄວ້ ເມື່ອເຂົາຮັບປະກັນແກ່ຍິງຕ່າງດ້າວ.

17 ອາຫານທີ່ໄດ້ມາດ້ວຍການຫຼອກລວງມີລົດຫວານແກ່ຜູ້ທີ່ໄດ້ມັນ, ແຕ່ພາຍ
ຫຼັງປາກຂອງເຂົາຈະເຕັມໄປດ້ວຍຫີນແຮ່.
18 ແຜນງານຢູ່ໄດ້ດ້ວຍການປຶກສາຫາລື, ຈົ່ງເຮັດສົງຄາມດ້ວຍການນຳ
ທີ່ສະຫລາດ.
19 ບຸກຄົນທີ່ທ່ຽວໄປຊຸບຊິບນິນທາກໍເປີດເຜີຍຄວາມລັບໃຫ້ກະຈາຍ, ສະນັ້ນ
ຢ່າເຂົ້າສັງຄົມກັບຄົນທີ່ຍົກຍໍດ້ວຍຮິມສົບຂອງຕົນ.
20 ຖ້າຄົນໜຶ່ງຄົນໃດດ່າພໍ່ຫຼືແມ່ຂອງຕົນ ຕະກຽງຂອງເຂົາຈະດັບມືດມິດ.
21 ມໍລະດົກທີ່ໄດ້ມາກ່ອນກຳນົດເວລາ, ບັ້ນທ້າຍມາຈະບໍ່ເປັນພຣະພອນ.
22 ຢ່າເວົ້າວ່າ "ຂ້ອຍຈະແກ້ແຄ້ນຄວາມຊົ່ວ," ແຕ່ຈົ່ງລໍຄອຍຖ້າພຣະຜູ້ເປັນ
ເຈົ້າ ເພາະພຣະອົງຈະຊົງຊ່ອຍເຈົ້າໃຫ້ລອດພົ້ນ.
23 ເຄື່ອງຊັ່ງຂີ້ສໍ້ເປັນທີ່ໜ້າກຽດໜ້າຊັງແກ່ພຣະຜູ້ເປັນເຈົ້າ, ແລະຕາຊິງທີ່ບໍ່
ສັດຊື່ກໍບໍ່ດີ.
24 ທາງເດີນຂອງມະນຸດນັ້ນພຣະຜູ້ເປັນເຈົ້າຊົງເປັນຜູ້ນຳ, ແລ້ວມະນຸດຈະ
ເຂົ້າໃຈທາງຂອງເຂົາເອງໄດ້ຢ່າງໃດ?
25 ຄົນທີ່ຮີບປະຕິຍານຕົນໄວ້ ແລ້ວພາຍຫລັງຈຶ່ງມາພິຈາລະນາ ກໍ່ເປັນບ້ວງ
ແຮ້ວແກ່ຕົນເອງ
26 ກະສັດທີ່ມີປັນຍາກໍກຳຈັດຄົນຊົ່ວຮ້າຍອອກ ແລ້ວຊົງບັນດານໃຫ້ກົງຈັກ
ທັບພວກເຂົາ.
27 ວິນຍານຂອງມະນຸດເປັນຕະກຽງຂອງພຣະຜູ້ເປັນເຈົ້າ ທີ່ສ່ອງເບິ່ງໃຈສ່ວນ
ເລິກຂອງເຂົາທັງໝົດ.
28 ຄວາມເມດຕາ ແລະຄວາມຈິງປົກປັກຮັກສາກະສັດໄວ້, ແລະຄວາມ
ເມດຕາກໍເຊີດຊູພຣະລາຊະບັນລັງຂອງພຣະອົງໄວ້.
29 ສະຫງ່າລາສີຂອງຊາຍໜຸ່ມຄືກຳລັງຂອງເຂົາ, ແຕ່ຄວາມງາມຂອງຄົນເຖົ້າ
ຄືຜົມຫງອກຂອງເພິ່ນ.
30 ຄວາມບວມຊ້ຳດຳຂຽວຂອງບາດແຜ ກໍຊຳລະຄວາມຊົ່ວເສຍ, ການຂ້ຽນ
ຕີເຮັດໃຫ້ໃຈສ່ວນເລິກທີ່ສຸດສະອາດສະອ້ານ.

## ບົດທີ 21

1 ນ້ຳພຣະໄທຂອງກະສັດເປັນເໝືອນແມ່ນ້ຳໃນພຣະຫັດຂອງພຣະຜູ້ເປັນ
ເຈົ້າ ພຣະຜູ້ເປັນເຈົ້າຈະຫັນໄປທາງໃດກໍຕາມແຕ່ພຣະອົງຊົງໂຜດ.
2 ທາງຂອງຄົນທຸກທາງກໍຖືກຕ້ອງໃນສາຍຕາຂອງຕົນ, ແຕ່ພຣະຜູ້ເປັນເຈົ້າຊົງ
ໄຕ່ຕອງເບິ່ງໃຈ.
3 ທີ່ຈະເຮັດຄວາມທ່ຽງທຳແລະຄວາມຍຸດຕິທຳກໍເປັນທີ່ພໍພຣະໄທແກ່ພຣະ
ຜູ້ເປັນເຈົ້າຫຼາຍກວ່າເຄື່ອງຖວາຍບູຊາ.
4 ຕາຈອງຫອງ ໃຈທະນົງ ແລະການກະທຳຂອງຄົນຊົ່ວຮ້າຍເປັນບາບ.
5 ແຜນງານຂອງຄົນດຸໝັ່ນນຳໄປສູ່ຄວາມອຸດົມສົມບູນແນ່ນອນ, ແຕ່ທຸກຄົນ
ທີ່ຮີບດ່ວນກໍມາສູ່ຄວາມຂັດສົນເທົ່ານັ້ນ.
6 ການໄດ້ຊັບສົມບັດມາດ້ວຍລີ້ນຂີ້ຕົວະ ກໍຄືການໄລ່ຈັບສິ່ງອະນິຈັງຈົນຕິດ
ບ້ວງແຮ້ວທີ່ນຳໄປສູ່ຄວາມຕາຍ.
7 ຄວາມທາລຸນຂອງຄົນຊົ່ວຮ້າຍຈະທຳລາຍເຂົາ, ເພາະເຂົາປະຕິເສດບໍ່
ຍອມເຮັດສິ່ງທີ່ຍຸຕິທຳ.
8 ທາງຂອງມະນຸດກໍຊົ່ວຮ້າຍ ແລະຄົດລ້ຽວ, ແຕ່ການກະທຳຂອງຜູ້ບໍລິສຸດນັ້ນ
ຖືກຕ້ອງ.
9 ຢູ່ແຈຫຼັງເຮືອນດີກວ່າຢູ່ໃນເຮືອນກວ້າງຂວາງຮ່ວມກັບຍິງທີ່ມັກຜິດຖຽງກັນ.
10 ຄົນຊົ່ວຮ້າຍວາງແຜນຊົ່ວ, ແມ່ນແຕ່ເພື່ອນບ້ານຂອງເຂົາກໍບໍ່ພົບຄວາມ
ເມດຕາໃນຕົວເຂົາ.
11 ເມື່ອຄົນມັກຫຍໍ້ຫຍັນຖືກລົງໂທດ ຄົນທີ່ຮູ້ໜ້ອຍກໍກາຍເປັນຄົນມີປັນຍາ,
ແລະເມື່ອຄົນມີປັນຍາໄດ້ຮັບການສັ່ງສອນ, ເຂົາກໍໄດ້ຄວາມຮູ້.
12 ຄົນຊອບທຳສັງເກດເບິ່ງເຮືອນຂອງຄົນຊົ່ວຮ້າຍ, ແຕ່ພຣະເຈົ້າຊົງທຳລາຍ
ຄົນອະທຳເພາະຄວາມຊົ່ວຮ້າຍຂອງເຂົາ.
13 ບຸກຄົນຜູ້ອັດຫູບໍ່ຟັງສຽງຮ້ອງຂອງຄົນຍາກຈົນ ຕົວເຂົາເອງຈະຮ້ອງ ແຕ່ບໍ່
ມີໃຜໄດ້ຍິນ.
14 ໃຫ້ຂອງຂວັນໃນທີ່ລັບລີ້ຍ່ອມດັບຄວາມຮ້າຍ, ແລະໃຫ້ສິນບົນໃນອົກກໍ
ຜ່ອນຄາຍພະພິໂລດ.
15 ຜູ້ຊອບທຳມີຄວາມຍິນດີຈະຕັດສິນຕາມຄວາມຍຸຕິທຳ, ແຕ່ຄົນທີ່ບໍ່ທ່ຽງທຳ
ຈະໄດ້ຮັບຄວາມຈິບຫາຍ.

24/VII ຫາມຈຳໜາຍ

16 ຜູ້ໃດທີ່ຫຼົງໄປຈາກທາງແຫ່ງຄວາມເຂົ້າໃຈ ຈະພັກຢູ່ໃນທີ່ປະຊຸມຂອງຄົນຕາຍ.
17 ບຸກຄົນທີ່ຮັກຄວາມເພີດເພີນຈະເປັນຄົນຍາກຈົນ, ບຸກຄົນທີ່ຮັກເຫຼົ້າອະງຸ່ນ
ແລະນໍ້າມັນຈະບໍ່ຮັ່ງມີ.
18 ຄົນຊົ່ວຮ້າຍເປັນຄ່າໄຖ່ສໍາລັບຄົນຊອບທໍາ ແລະຄົນບໍ່ຊື່ກໍສໍາລັບຄົນທ່ຽງທໍາ.
19 ຢູ່ໃນບ່ອນທຸລະກັນດານ ກໍດີກວ່າຢູ່ກັບຜູ້ຍິງທີ່ມັກຜິດຖຽງແລະມັກຮ້າຍ.
20 ຊັບສົມບັດອັນປະເສີດກັບນໍ້າມັນມີຢູ່ໃນທີ່ອາໄສຂອງຄົນມີປັນຍາ, ແຕ່ຄົນ
ໂງ່ກິນມັນໝົດ.
21 ບຸກຄົນຜູ້ຕິດຕາມຄວາມຊອບທໍາແລະຄວາມເມດຕາ ຈະພົບຊີວິດແລະ
ຄວາມຊອບທໍາກັບກຽດຕິຍົດ.
22 ຄົນມີປັນຍາປີນເຂົ້າໄປໃນເມືອງຂອງຄົນທີ່ມີກໍາລັງ ແລະພັງທະລາຍ
ກໍາແພງອັນເຂັ້ມແຂງທີ່ເຂົາວາງໃຈນັ້ນ.
23 ບຸກຄົນທີ່ຮັກສາປາກ ແລະລີ້ນຂອງຕົນກໍຮັກສາຕົວເຂົາເອງໃຫ້ພົ້ນ
ຄວາມລໍາບາກ.
24 "ຈອງຫອງ ທະນົງຕົວ ຫຍໍ້ຫຍັນ," ເປັນຊື່ຂອງຄົນທີ່ປະພຶດຕົວດ້ວຍ
ຄວາມຊົ່ວຮ້າຍໃຈສູງ.
25 ຄວາມປາດຖະໜາຂອງຄົນຂີ້ຄ້ານຂ້າຕົວເຂົາເອງ, ເພາະມືຂອງເຂົາ
ປະຕິເສດບໍ່ເຮັດວຽກ.
26 ເຂົາໂລບຢາກໄດ້ໝົດວັນ, ແຕ່ຄົນຊອບທໍາແຈກຈ່າຍໃຫ້ ແລະບໍ່ຫວງ
ສິ່ງໃດ.
27 ເຄື່ອງຖວາຍບູຊາຂອງຄົນຊົ່ວຮ້າຍເປັນສິ່ງໜ້າກຽດໜ້າຊັງ ເມື່ອເຂົານໍາມາ
ດ້ວຍຄວາມຕັ້ງໃຈຊົ່ວຈະຍິ່ງກວ່ານັ້ນຈັກເທົ່າໃດ?
28 ພະຍານບໍ່ຈິງຈະຕ້ອງຈິບຫາຍ, ແຕ່ຖ້ອຍຄໍາຂອງຄົນເຊື່ອຟັງຈະຍັງຄົງຢູ່.
29 ຄົນຊົ່ວຮ້າຍເຮັດໃຫ້ໜ້າຂອງຕົນດ້ານໄປ, ແຕ່ຄົນທ່ຽງທໍາພິຈາລະນາເບິ່ງ
ທາງຂອງຕົນ.
30 ປັນຍາກໍດີ ຄວາມເຂົ້າໃຈກໍດີ ຄໍາປຶກສາກໍດີ, ຈະເອົາຊະນະພຣະຜູ້ເປັນ
ເຈົ້າບໍ່ໄດ້.
31 ມ້າກໍຕຽມໄວ້ພ້ອມແລ້ວສໍາລັບວັນສົງຄາມ, ແຕ່ຄວາມມີໄຊເປັນຂອງພຣະ
ຜູ້ເປັນເຈົ້າ.

## ບົດທີ 22
# ຫຼັກທຳແລະຄຳຕັກເຕືອນ

1 ຊື່ສຽງດີເປັນສິ່ງຄວນເລືອກຍິ່ງກວ່າຄວາມຮັ່ງມີ ແລະຊຶ່ງເປັນທີ່ພໍພຣະໄທ ກໍຍິ່ງກວ່າມີເງິນຫຼືຄຳ.
2 ຄົນຮັ່ງມີ ແລະຄົນຍາກຈົນປະຊຸມພ້ອມກັນ, ພຣະຜູ້ເປັນເຈົ້າຊົງສ້າງເຂົາ ທັງສອງ.
3 ຄົນຮອບຮູ້ເຫັນອັນຕະລາຍ ແລະໄປລີ້ຕົວຂອງເຂົາເສຍ, ແຕ່ຄົນທີ່ຮູ້ໜ້ອຍ ຍ່າງເລື້ອຍໄປ ແລະຮັບໂທດນັ້ນ.
4 ບຳເໜັດຂອງຄວາມຖ່ອມໃຈ ແລະຄວາມຢຳເກງພຣະຜູ້ເປັນເຈົ້າ ຄືຊັບ ສົມບັດ ກຽດຕິຍົດ ແລະຊີວິດ.
5 ໜາມ ແລະບ້ວງແຮ້ວຢູ່ໃນທາງຂອງຄົນຊົ່ວຮ້າຍ, ຜູ້ທີ່ລະວັງຈິດໃຈຂອງຕົນ ເອງຈະຢູ່ຫ່າງໄກຈາກສິ່ງເຫຼົ່ານີ້.
6 ຈົ່ງຝຶກເດັກນ້ອຍໃນທາງທີ່ເຂົາຄວນຈະຍ່າງໄປ, ແລະເມື່ອເຂົາຊາລາແລ້ວ ເຂົາຈະບໍ່ພາກຈາກທາງນັ້ນ.
7 ຄົນຮັ່ງມີປົກຄອງເໜືອຄົນຍາກຈົນ ແລະຄົນຂໍຢືມກໍເປັນຂ້າທາດຂອງຄົນ ໃຫ້ຢືມ.
8 ບຸກຄົນຜູ້ຫວ່ານຄວາມຊົ່ວຊ້າຈະກ່ຽວຄວາມລຳບາກ, ແລະໄມ້ແສ້ແຫ່ງ ຄວາມທາລຸນຂອງເຂົາຈະປະລາໄຊ.
9 ບຸກຄົນທີ່ມີໃຈກວ້າງຂວາງກໍຈະຮັບພຣະພອນ, ເພາະເຂົາແບ່ງສ່ວນ ອາຫານຂອງເຂົາແກ່ຄົນຍາກຈົນ.
10 ຈົ່ງກຳຈັດຄົນມັກຫຍໍ້ຫຍັນອອກໄປເສຍ ແລ້ວການຜິດກັນຈະໝົດໄປ, ເອີ! ຄວາມລະອາຍ ແລະການຜິດຖຽງກັນຈະຢຸດລົງ.
11 ຜູ້ທີ່ຮັກໃຈບໍລິສຸດແລະວາຈາຂອງເຂົາມີເມດຕາຄຸນຈະໄດ້ກະສັດ ເປັນມິດ.
12 ພຣະເນດແຫ່ງພຣະຜູ້ເປັນເຈົ້າເຝົ້າຮັກສາຄວາມຮູ້ໄວ້ ແຕ່ພຣະອົງຊົງໂຄ່ນ ລົ້ມຖ້ອຍຄຳຂອງຄົນລະເມີດ.
13 ຄົນຂີ້ຄ້ານກ່າວວ່າ "ມີໂຕສິງຢູ່ຂ້າງນອກ ຂ້ອຍຈະຖືກຂ້າຕາມຖະໜົນ".
14 ປາກຂອງຍິງຊົ່ວເປັນເຫວເລິກ, ບຸກຄົນຊຶ່ງພຣະຜູ້ເປັນເຈົ້າຊົງກຽດຊັງຈະ ຕົກລົງໃນບ່ອນນັ້ນ.

15 ຄວາມດື້ດ້ານຖືກຜູກມັດຢູ່ໃນໃຈຂອງເດັກ, ແຕ່ໄມ້ແສ້ແຫ່ງການຕີສອນກໍ
ກໍາຈັດຄວາມດື້ນັ້ນໃຫ້ຫ່າງໄປ.
16 ບຸກຄົນຜູ້ທີ່ບັງຄັບຄົນຍາກຈົນເພື່ອເພີ່ມຊັບສົມບັດຂອງຕົນ ແລະຜູ້ທີ່ເພີ່ມ
ໃຫ້ແກ່ຄົນຮັ່ງມີ ຈະມາເຖິງຄວາມຂັດສົນແນ່ນອນ.
17 ງ່ຽງຫູຂອງເຈົ້າ ແລະຟັງຖ້ອຍຄໍາຂອງຄົນມີປັນຍາ ແລະຈົ່ງເອົາໃຈໃສ່ໃນ
ຄວາມຮູ້ຂອງເຮົາ.
18 ເພາະຖ້າເຈົ້າຮັກສາຖ້ອຍຄໍາ ແລະຄວາມຮູ້ນັ້ນໄວ້ໃນຕົວເຈົ້າ ແລະພ້ອມທີ່
ຈະກ່າວຖ້ອຍຄໍາເຫຼົ່ານັ້ນສະເໝີ ມັນຈະເປັນຄວາມຊື່ນໃຈແກ່ເຈົ້າ.
19 ເພື່ອຄວາມໄວ້ວາງໃຈຂອງເຈົ້າຈະຢູ່ໃນພຣະຜູ້ເປັນເຈົ້າ ເຮົາໃຫ້ປະກົດ
ແຈ້ງແກ່ເຈົ້າໃນວັນນີ້ ແມ່ນແກ່ຕົວເຈົ້າເອງ.
20 ເຮົາໄດ້ຂຽນໃຫ້ເຈົ້າເຖິງສິ່ງທີ່ດີເລີດ ເລື່ອງຄໍາແນະນໍາ ແລະຄວາມຮູ້
ແລ້ວ ບໍ່ແມ່ນຫລື,
21 ເພື່ອໃຫ້ເຈົ້າຮູ້ເຖິງຄວາມແນ່ນອນຂອງຖ້ອຍຄໍາແຫ່ງຄວາມຈິງ, ເພື່ອເຈົ້າ
ຈະໄດ້ຕອບຖ້ອຍຄໍາແຫ່ງຄວາມຈິງນັ້ນແກ່ພວກຄົນຜູ້ທີ່ມາຫາເຈົ້າ?
22 ຢ່າປຸ້ນຄົນຍາກຈົນ ເພາະເຂົາເປັນຄົນຍາກຈົນ, ຫຼືບີບຄັ້ນຄົນທຸກໃຈທີ່ປະ
ຕູເມືອງ,
23 ເພາະວ່າພຣະຜູ້ເປັນເຈົ້າຈະຊິງວ່າຄວາມແທນເຂົາ ແລະທໍາລາຍຈິດໃຈ
ຂອງຜູ້ທີ່ທໍາລາຍເຂົາ.
24 ຢ່າເປັນເພື່ອນກັບຄົນທີ່ມັກຮ້າຍ, ຫຼືໄປກັບຄົນທຍາບຊ້າຊົ່ວຮ້າຍ
25 ຢ້ານວ່າເຈົ້າຈະຮຽນຮູ້ທາງຂອງເຂົາ ແລະນໍາຕົວເຈົ້າເຂົ້າໃນບ້ວງແຮ້ວ.
26 ຢ່າເຂົ້າສ່ວນກັບຄົນທີ່ຄໍ້າປະກັນ ຫຼືພວກຜູ້ເປັນປະກັນໜີ້ສິນ.
27 ຖ້າເຈົ້າບໍ່ສາມາດໃຊ້ໜີ້ນັ້ນໄດ້ ເຂົາກໍຈະເອົາແມ່ນແຕ່ບ່ອນນອນຂອງ
ເຈົ້າ.
28 ຢ່າໂຍກຍ້າຍຫຼັກເຂດແດນເກົ່າແກ່, ຊຶ່ງບັນພຣະບຸລຸດຂອງເຈົ້າໄດ້ປັກໄວ້.
29 ເຈົ້າເຫັນຄົນດຸໝັ່ນໃນງານຂອງເຂົາຫຼື? ເຂົາຈະຢູ່ຕໍ່ໜ້າກະສັດ, ແລະເຂົາ
ຈະບໍ່ຢືນຢູ່ຕໍ່ໜ້າຄົນຕໍ່າຕ້ອຍ.

# ບົດທີ 23

1 ເມື່ອເຈົ້ານັ່ງລົງຮັບປະທານກັບຜູ້ປົກຄອງບ້ານເມືອງ ຈົ່ງສັງເກດໃຫ້ດີວ່າອັນ
ໃດຢູ່ຂ້າງໜ້າເຈົ້າ,
2 ຖ້າເຈົ້າເປັນຄົນມັກກິນຫຼາຍ ເຈົ້າຈົ່ງຈໍ່ມີດໄວ້ທີ່ຄໍຂອງເຈົ້າ.
3 ຢ່າໂລບຂອງກິນຂອງທ່ານ, ເພາະມັນເປັນອາຫານທີ່ຫຼອກລວງ.
4 ຢ່າເຮັດວຽກເພື່ອເຫັນແກ່ຊັບ, ຈົ່ງເຊົາເພິ່ງສະຕິປັນຍາຂອງຕົນເອງ.
5 ເຈົ້າຈະຕັ້ງຕາຂອງເຈົ້າຢູ່ທີ່ຂອງອະນິດຈັງຫຼື? ເພາະຊັບສົມບັດມີປີກແນ່
ນອນທີດຽວ, ມັນຈະບິນໄປໃນທ້ອງຟ້າເໝືອນນົກອິນຊີ.
6 ຢ່າກິນອາຫານຂອງຄົນຕາຮ້າຍ, ຢ່າໂລບຂອງກິນຂອງເຂົາ,
7 ເພາະເຂົາຄິດໃນໃຈຢ່າງໃດ ເຂົາກໍເປັນຢ່າງນັ້ນ, ເຂົາເວົ້າກັບເຈົ້າວ່າ “ຈົ່ງ
ກິນ ແລະດື່ມເຖີດ” ແຕ່ໃຈຂອງເຂົາບໍ່ໄດ້ຢູ່ກັບເຈົ້າ.
8 ອາຫານທີ່ເຈົ້າກິນແລ້ວເຈົ້າຈະຮາກອອກ ແລະຖ້ອຍຄຳຫວານໆ ຂອງເຈົ້າ
ຈະເສຍໄປ.
9 ຢ່າເວົ້າໃຫ້ຄົນໂງ່ໄດ້ຍິນ, ເພາະເຂົາຈະດູໝິ່ນປັນຍາແຫ່ງຖ້ອຍຄຳຂອງ
ເຈົ້າ.
10 ຢ່າໂຍກຍ້າຍຫຼັກເຂດແດນເກົ່າແກ່, ຫຼືເຂົ້າໄປໃນໄຮ່ນາຂອງຄົນກຳພ້າພໍ່,
11 ເພາະພຣະຜູ້ໄຖ່ຂອງເຂົາມີອຳນາດ, ພຣະອົງຈະວ່າຄະດີແທນເຂົາຕໍ່ສູ້ເຈົ້າ.
12 ຈົ່ງເອົາໃຈໃສ່ໃນຄຳສັ່ງສອນ ແລະຈົ່ງຕັ້ງຫູຟັງຖ້ອຍຄຳທັງຫຼາຍແຫ່ງຄວາມຮູ້.
13 ຢ່າຍັບຍັ້ງການຕີສອນເດັກ, ຖ້າເຈົ້າຕີເຂົາດ້ວຍໄມ້ແສ້ ເຂົາຈະບໍ່ຕາຍ.
14 ເຈົ້າຈະຕີເຂົາດ້ວຍໄມ້ແສ້ ແລ້ວເຈົ້າຈະຊ່ວຍຈິດໃຈຂອງເຂົາໃຫ້ລອດພົ້ນ
ຈາກນາລົກ.
15 ລູກຊາຍຂອງເຮົາເອີຍ ຖ້າໃຈຂອງເຈົ້າມີປັນຍາ ໃຈຂອງເຮົາເອງກໍຈະຍິນດີ.
16 ເອີ! ວິນຍານຂອງເຮົາຈະຊື່ນຊົມຍິນດີ ເມື່ອຮີມສົບຂອງເຈົ້າເວົ້າສິ່ງທີ່ຖືກຕ້ອງ.
17 ຢ່າໃຫ້ໃຈຂອງເຈົ້າອິດສາຄົນບາບ, ແຕ່ຈົ່ງຢຳເກງພຣະຜູ້ເປັນເຈົ້າຢູ່ຕະ
ຫຼອດວັນ.
18 ເຫດວ່າ ມີການສິ້ນສຸດທີ່ແນ່ນອນ ແລະຄວາມຫວັງຂອງເຈົ້າຈະບໍ່ໄດ້ຖືກ
ຕັດອອກ.
19 ລູກຊາຍຂອງເຮົາເອີຍ ຈົ່ງຟັງ ແລະຈົ່ງມີປັນຍາເຖີດ ແລະນຳໃຈຂອງເຈົ້າ
ໄປໃນທາງນັ້ນ.

20 ຢ່າຢູ່ທ່າມກາງຄົນດື່ມເຫຼົ້າອະງຸ່ນ, ຫຼືທ່າມກາງຄົນທີ່ກິນຊີ້ນຈົນເຫຼືອ.
21 ເພາະຄົນຂີ້ເມົາ ແລະຄົນກິນເກີນສ່ວນຈະມາເຖິງຄວາມຍາກຈົນ, ແລະ
ຄວາມງ່ວງເຫງົາຈະພາໃຫ້ນຸ່ງຜ້າເປີະເປື້ອນ.
22 ຈົ່ງຟັງພໍ່ຂອງເຈົ້າຜູ້ໃຫ້ກຳເນີດເຈົ້າ ແລະຢ່າດູໝິ່ນແມ່ຂອງເຈົ້າເມື່ອນາງ
ເຖົ້າແກ່.
23 ຈົ່ງຊື້ຄວາມຈິງ ແລະຢ່າຂາຍໄປເສຍ ຈົ່ງຊື້ປັນຍາ ຄຳສັ່ງສອນ ແລະ
ຄວາມເຂົ້າໃຈ.
24 ພໍ່ຂອງຄົນຊອບທຳຈະປິຕິຍິນດີຢ່າງຍິ່ງ, ບຸກຄົນຜູ້ໃຫ້ກຳເນີດລູກທີ່ມີປັນຍາ
ຈະຍິນດີເພາະເຂົາ.
25 ພໍ່ແມ່ຂອງເຈົ້າຈະຍິນດີ ແລະຜູ້ທີ່ເກີດເຈົ້າກໍຈະປິຕິຍິນດີ.
26 ລູກຊາຍຂອງເຮົາເອີຍ, ຂໍໃຈຂອງເຈົ້າໃຫ້ເຮົາເຖີດ ແລະໃຫ້ຕາຂອງເຈົ້າ
ສັງເກດເບິ່ງທາງທັງຫຼາຍຂອງເຮົາ.
27 ເພາະຍິງແມ່ຈ້າງເປັນເຫວເລິກ, ແລະຍິງຫລິ້ນຊູ້ເປັນເໝືອນຂຸມແຄບ.
28 ພວກເຂົາຄອຍຖ້າເຈົ້າດັ່ງຂະໂມຍ ແລະເຮັດໃຫ້ຊາຍຫຼາຍຄົນກາຍເປັນ
ຄົນລະເມີດ.
29 ຜູ້ໃດມີວິບັດ? ຜູ້ໃດມີຄວາມໂສກເສົ້າ? ຜູ້ໃດມີການຜິດກັນ? ຜູ້ໃດມີການ
ຮ້ອງຄາງ? ຜູ້ໃດມີບາດແຜປາດສະຈາກເຫດຜົນ? ຜູ້ໃດມີຕາແດງ?
30 ຄື: ບັນດາຜູ້ທີ່ນັ່ງແຊ່ຢູ່ກັບເຫຼົ້າອະງຸ່ນ, ບັນດາຜູ້ທີ່ໄປສະແຫວງຫາ
ເຫຼົ້າປະສົມ.
31 ຢ່າເບິ່ງເຫຼົ້າອະງຸ່ນເມື່ອມັນມີສີແດງ ເມື່ອເປັ່ງປະກາຍໃນຈອກ ແລະ
ເມື່ອມັນຄ່ອຍ ໆຍອບລົງ.
32 ໃນທີ່ສຸດມັນກັດເໝືອນງູ ແລະມັນຕອດຄືງູຮ້າຍ.
33 ຕາຂອງເຈົ້າຈະເບິ່ງຍິງຊົ່ວ ແລະໃຈຂອງເຈົ້າຈະກ່າວຄຳຊົ່ວ.
34 ເອີ! ເຈົ້າຈະເປັນເໝືອນຄົນທີ່ນອນຢູ່ກາງທະເລ ຢ່າງຄົນທີ່ນອນຢູ່ເທິງຍອດ
ເສົາເຮືອໃບ.
35 ເຈົ້າຈະວ່າ "ເຂົາຕີຂ້ອຍ ແຕ່ຂ້ອຍບໍ່ເຈັບ ເຂົາຕີຂ້ອຍ ແຕ່ຂ້ອຍບໍ່ຮູ້ສຶກ ແລ້ວ
ຂ້ອຍຈະຕື່ນເມື່ອໃດໜໍ? ຂ້ອຍຈະສະແຫວງຫາການດື່ມເຫຼົ້າອີກ".

## ບົດທີ 24

1 ຢ່າຄິດອິດສາຄົນຊົ່ວ ຫຼືປາດຖະໜາຢູ່ຮ່ວມກັບເຂົາ.
2 ເພາະວ່າໃຈຂອງເຂົາຄິດປອງຮ້າຍຈະທຳລາຍ ແລະຮີມສົບຂອງເຂົາເວົ້າ
ແຕ່ອາການຮ້າຍ.
3 ດ້ວຍສະຕິປັນຍາເຮືອນກໍຖືກສ້າງຂຶ້ນ, ແລະຕັ້ງໄວ້ດ້ວຍຄວາມເຂົ້າໃຈ,
4 ໂດຍຄວາມຮູ້ບັນດາຫ້ອງກໍເຕັມໄປດ້ວຍຊັບສົມບັດອັນປະເສີດ ແລະ
ເປັນທີ່ໜ້າພໍໃຈ.
5 ຄົນມີປັນຍາມີກຳລັງຫຼາຍ, ແລະຄົນມີຄວາມຮູ້ກໍເພີ່ມກຳລັງຂຶ້ນ.
6 ເພາະວ່າໂດຍການນຳທີ່ສະຫລາດເຈົ້າກໍເຂົ້າສົງຄາມໄດ້, ແລະມີທີ່ປຶກສາ
ຫຼາຍຍ່ອມມີໄຊຊະນະ.
7 ສະຕິປັນຍາເປັນສິ່ງທີ່ສູງໂພດສຳລັບຄົນໂງ່, ເຂົາບໍ່ອ້າປາກເວົ້າໃນທີ່
ປະຊຸມ.
8 ຜູ້ທີ່ວາງແຜນການເຮັດຄວາມຊົ່ວ ເຂົາເອີ້ນກັນວ່າ "ຄົນເຈົ້າເລ້ກົນ".
9 ການຄິດປະດິດຄວາມໂງ່ເປັນບາບ, ແລະຄົນມັກຫຍໍ້ຫຍັນເປັນທີ່ໜ້າກຽດ
ໜ້າຊັງແກ່ມະນຸດ.
10 ຖ້າເຈົ້າທໍ້ໃຈໃນວັນແຫ່ງຄວາມຊົ່ວຮ້າຍ ກຳລັງຂອງເຈົ້າກໍນ້ອຍ.
11 ຖ້າເຈົ້າບໍ່ຊ່ວຍບັນດາຜູ້ທີ່ຖືກນຳໄປສູ່ຄວາມຕາຍໃຫ້ລອດພົ້ນ ແລະບໍ່ຊ່ວຍ
ບັນດາຜູ້ທີ່ກຳລັງຈະຖືກປະຫານຊີວິດ,
12 ຖ້າເຈົ້າເວົ້າວ່າ "ເບິ່ງເຖີດ ເຮົາບໍ່ຮູ້ເລື່ອງນີ້ເລີຍ", ພຣະອົງຜູ້ຊົງໄຕ່ຕອງເບິ່ງ
ໃຈຈະບໍ່ຊົງເອົາໃຈໃສ່ການນັ້ນຫຼື? ພຣະອົງຜູ້ຊົງຮັກສາຈິດໃຈຢູ່ເໜືອເຈົ້າ
ຈະບໍ່ຮູ້ຫຼື? ແລະພຣະອົງຈະບໍ່ຊົງເອີ້ນເອົາຈາກທຸກຄົນຕາມການກະທຳ
ຂອງເຂົາຫຼື?
13 ລູກຊາຍຂອງເຮົາເອີຍ ຈົ່ງກິນນໍ້າເຜິ້ງເພາະມັນເປັນຂອງດີ, ແລະນໍ້າເຜິ້ງທີ່
ຢົດຈາກຮັງມີລົດຫວານ,
14 ການຮູ້ຈັກປັນຍາກໍເປັນເຊັ່ນນັ້ນແກ່ຈິດໃຈຂອງເຈົ້າ, ເມື່ອເຈົ້າພົບປັນຍາ
ກໍຈະມີບຳເໜັດ ແລະຄວາມຫວັງຂອງເຈົ້າຈະບໍ່ຖືກຕັດອອກ.
15 ຄົນຊົ່ວຮ້າຍເອີຍ ຢ່າຄອຍຖ້າເພື່ອທຳລາຍເຮືອນຂອງຄົນຊອບທຳ, ຢ່າປຸ້ນ
ເຮືອນຂອງເຂົາ.

16 ເພາະຄົນຊອບທຳລົ້ມລົງເຈັດເທື່ອແລ້ວກໍລຸກຂຶ້ນອີກ ແຕ່ຄົນຊົ່ວຮ້າຍຈະ
ຖືກໂຄ່ນລົງເພາະຄວາມລຳບາກ.
17 ຢ່າດີໃຈເມື່ອສັດຕູຂອງເຈົ້າລົ້ມ ແລະຢ່າໃຫ້ໃຈຂອງເຈົ້າຍິນດີເມື່ອເຂົາສະດຸດ.
18 ຢ້ານວ່າພຣະຜູ້ເປັນເຈົ້າຈະເຫັນ ແລະບໍ່ຊົງພໍພຣະໄທ ແລະຊົງເວັ້ນ
ຄວາມໂທດຮ້າຍຈາກເຂົາເສຍ.
19 ເຈົ້າຢ່າກະວົນກະວາຍເພາະຄົນຊົ່ວ ແລະຢ່າມີໃຈອິດສາຄົນຊົ່ວຮ້າຍ.
20 ເພາະຄົນຊົ່ວຈະບໍ່ມີບຳເໜັດ, ຕະກຽງຂອງຄົນຊົ່ວຮ້າຍຈະຖືກດັບເສຍ.
21 ລູກຊາຍຂອງເຮົາເອີຍ, ຈົ່ງຢຳເກງພຣະຜູ້ເປັນເຈົ້າ ແລະກະສັດດ້ວຍ, ຢ່າ
ເຂົ້າສ່ວນກັບພວກທີ່ກະບົດຕໍ່ພຣະອົງ.
22 ເພາະໄພພິບັດຈາກພຣະອົງທັງສອງຈະເກີດຂຶ້ນໂດຍທັນທີທັນໃດ, ແລະ
ຜູ້ໃດຈະຮູ້ໄດ້ເຖິງຄວາມຈິບຫາຍທີ່ຈະມາຈາກພຣະອົງທັງສອງ?
23 ຂໍ້ຄວາມເຫຼົ່ານີ້ເປັນຄຳກ່າວຂອງຄົນມີປັນຍາດ້ວຍ: ການເຫັນແກ່ໜ້າຄົນ
ໃດໃນການຕັດຊີນນັ້ນ ກໍບໍ່ດີເລີຍ.
24 ບຸກຄົນຜູ້ກ່າວແກ່ຄົນຊົ່ວຮ້າຍວ່າ ເຈົ້າເປັນຄົນຊອບທຳ, ຜູ້ນັ້ນຈະຖືກຊົນ
ຊາດທັງຫຼາຍສາບແຊ່ງ ແລະປະຊາຊາດຈະລັງກຽດ,
25 ແຕ່ບັນດາຜູ້ຕິຕຽນເຂົາຈະມີຄວາມປີຕິຍິນດີ ແລະພຣະພອນອັນດີຈະມີຢູ່
ກັບເຂົາ.
26 ທຸກຄົນຈະຈູບສົບປາກຂອງຜູ້ໃຫ້ຄຳຕອບທີ່ຖືກ.
27 ຈົ່ງຕຽມງານຂອງເຈົ້າທີ່ພາຍນອກ ເຮັດທຸກສິ່ງທຸກຢ່າງໃຫ້ພ້ອມໃນໄຮ່ນາ
ຂອງເຈົ້າ, ແລ້ວຫຼັງຈາກນັ້ນກໍຈົ່ງສ້າງເຮືອນຂອງເຈົ້າ.
28 ຢ່າເປັນພະຍານປັກປຳເພື່ອນບ້ານຂອງເຈົ້າເມື່ອບໍ່ມີເຫດ ແລະຢ່າຫຼອກ
ລວງດ້ວຍຮີມສົບຂອງເຈົ້າ.
29 ຢ່າກ່າວວ່າ “ຂ້ອຍຈະເຮັດແກ່ເຂົາເໝືອນທີ່ເຂົາໄດ້ເຮັດແລ້ວແກ່ຂ້ອຍ,
ຂ້ອຍຈະເຮັດຕອບແທນແກ່ເຂົາຢ່າງທີ່ເຂົາໄດ້ເຮັດ”.
30 ເຮົາຜ່ານໄປທີ່ໄຮ່ນາຂອງຄົນຂີ້ຄ້ານ, ຂ້າງສວນອະງຸ່ນຂອງຄົນທີ່ຂາດ
ຄວາມເຂົ້າໃຈ,
31 ແລະເບິ່ງເຖີດ! ມີໜາມງອກເຕັມໄປໝົດ ແລະແຜ່ນດິນກໍເຕັມໄປດ້ວຍ
ຫຍ້າ ແລະກຳແພງຫີນຂອງມັນກໍເພພັງ.
32 ແລ້ວເຮົາໄດ້ເຫັນ ແລະພິຈາລະນາເບິ່ງຢ່າງດີ, ເຮົາສັງເກດແລະໄດ້ຮັບ
ຄຳສັ່ງສອນ.

33 "ນອນອີກໜ້ອຍໜຶ່ງ, ນອນຫຼັບອີກບຶດໜຶ່ງ, ເອົາມືໄຂວ່ກັນນອນຈັກ
ໜ້ອຍໜຶ່ງ".
34 ໃນຂະນະທີ່ເຈົ້າພວມນອນຢູ່ນັ້ນ ຄວາມຍາກຈົນຈະມາເຖິງເຈົ້າຢ່າງຄົນ
ພະເນຈອນ, ແລະຄວາມຂັດສົນເໝືອນຄົນຖືອາວຸດ.

## ບົດທີ 25

1 ຕໍ່ໄປນີ້ກໍເປັນສຸພາສິດຂອງຊາໂລໂມນ ຊຶ່ງຄົນຂອງເຮເຊກີຢາ ກະສັດ
ແຫ່ງຢູດາໄດ້ບັນທຶກໄວ້.
2 ຄວາມຍິ່ງໃຫຍ່ຂອງພຣະເຈົ້າຄືການເຊື່ອງສິ່ງຕ່າງໆ ໄວ້, ແຕ່ກຽດສັກສີ
ຂອງກະສັດຄືການຄົ້ນສິ່ງຕ່າງ ໆໃຫ້ປາກົດ.
3 ຟ້າສະຫວັນສູງສັນໃດ ແລະແຜ່ນດິນໂລກເລິກສັນໃດ ພຣະໄທຂອງ
ກະສັດເຫລືອທີ່ຈະຢັ່ງຮູ້ສັນນັ້ນ.
4 ຈົ່ງໄລ່ຂີ້ເງິນອອກຈາກເງິນເສຍ ແລ້ວຈະມີເງິນບໍລິສຸດສຳລັບຊ່າງເຮັດຂັນ.
5 ຈົ່ງໄລ່ຄົນຊົ່ວຮ້າຍອອກໄປເສຍຈາກພຣະພັກກະສັດ ແລະພຣະລາຊະ
ບັນລັງຂອງພຣະອົງຈະສະຖາປະນາໄວ້ໃນຄວາມຊອບທຳ.
6 ຢ່າເອົາຕົວເຈົ້າຂຶ້ນມາອ້າງຕໍ່ພະພັກແຫ່ງກະສັດ ຫຼືຢືນຢູ່ໃນບ່ອນຂອງຜູ້ຫຼັກ
ຜູ້ໃຫຍ່.
7 ເພາະວ່າເພື່ອທີ່ຈະໃຫ້ເຂົາເວົ້າວ່າ "ຈົ່ງຂຶ້ນມາທີ່ນີ້" ກໍດີກວ່າຖືກໄລ່ລົງໄປ
ບ່ອນຕໍ່າ ຕໍ່ໜ້າເຈົ້າຊາຍຜູ້ຊຶ່ງຕາຂອງເຈົ້າໄດ້ເຫັນແລ້ວ.
8 ຢ່າຂູຟ້າວອອກໄປຖຽງກັນກັບເພື່ອນບ້ານ ຢ້ານວ່າໃນທີ່ສຸດເຈົ້າຈະບໍ່ຮູ້ເຮັດ
ຫຍັງ ເມື່ອເພື່ອນບ້ານຂອງເຈົ້າເຮັດໃຫ້ເຈົ້າໄດ້ຮັບຄວາມອັບອາຍແລ້ວ.
9 ຈົ່ງຕົກລົງເລື່ອງຂອງເຈົ້າກັບເພື່ອນບ້ານຂອງເຈົ້າ, ແລະຢ່າເປີດເຜີຍຄວາມ
ລັບຂອງເຂົາ,
10 ຢ້ານວ່າຜູ້ທີ່ໄດ້ຍິນຈະນຳຄວາມອັບອາຍມາສູ່ເຈົ້າ ແລະຊື່ສຽງຂອງເຈົ້າ
ຈະມົວໝອງຢູ່ຕະຫຼອດ.
11 ຖ້ອຍຄຳທີ່ເວົ້າຖືກກາລະເທສະ ຈະເໝືອນຮູບຄຳແກະສະຫລັກໃນຖາດເງິນ.

12 ຄົນຕັກເຕືອນທີ່ສະຫຼາດກັບຫູທີ່ເຊື່ອຟັງ ກໍເໝືອນຕຸ້ມຫູຄຳຫຼືເຄື່ອງເອ້ຄຳບໍລິສຸດ.
13 ທີ່ມະໃຫ້ຄວາມເຢັນໃນລະດູເກັບກ່ຽວຢ່າງໃດ ຜູ້ສົ່ງຂ່າວທີ່ສັດຊື່ຍ່ອມເຮັດໃຫ້ຈິດໃຈຂອງນາຍຜູ້ໃຊ້ເຂົາຊຸ່ມຊື່ນຢ່າງນັ້ນ.
14 ຄົນທີ່ອວດວ່າຈະໃຫ້ຂອງຂວັນແຕ່ບໍ່ໄດ້ໃຫ້ ກໍເໝືອນເມກ ແລະລົມທີ່ບໍ່ມີຝົນ.
15 ຄວາມອົດທົນພາກພຽນຈະຊັກຊວນຜູ້ຄອບຄອງໄດ້ ແລະລີ້ນທີ່ອ່ອນຫວານຈະໂນ້ມນ້າວຈິດໃຈໃຫ້ອ່ອນລົງໄດ້.
16 ເຈົ້າໄດ້ພົບນ້ຳເຜິ້ງແລ້ວຫຼື? ຈົ່ງກິນແຕ່ພໍດີ, ຢ້ານວ່າເຈົ້າຈະເບື່ອມັນ ແລະຮາກອອກມາ,
17 ຢ່າໄປຢ້ຽມເພື່ອນບ້ານຫລາຍ, ຢ້ານວ່າລາວອາດຈະເບື່ອໜ່າຍແລະກຽດຊັງເຈົ້າກໍໄດ້.
18 ຄົນໃດທີ່ເປັນພະຍານບໍ່ຈິງເພື່ອກ່າວໂທດເພື່ອນບ້ານຂອງເຂົາ ກໍເໝືອນກະບອງເສິກ ຫຼືດາບ ຫຼືລູກທະນູທີ່ຄົມ.
19 ຄວາມໄວ້ວາງໃຈໃນຄົນທີ່ບໍ່ສັດຊື່ໃນຍາມລຳບາກ ກໍເໝືອນແຂ້ວທີ່ຫັກເສຍ ຫຼືຕີນທີ່ຫລຸດຈາກຂໍ້ຕໍ່.
20 ບັນດາຄົນທີ່ຮ້ອງເພງໃຫ້ຄົນໜັກໃຈຟັງ ກໍເໝືອນຄົນຖອດເຄື່ອງແຕ່ງກາຍອອກໃນວັນທີ່ອາກາດໜາວ ແລະເໝືອນເອົານ້ຳສົ້ມມາລາດເທິງດິນປະສິວ.
21 ຖ້າສັດຕູຂອງເຈົ້າຫິວເຂົ້າ ຈົ່ງໃຫ້ອາຫານເຂົາກິນ ແລະຖ້າເຂົາຫິວນ້ຳຈົ່ງໃຫ້ນ້ຳເຂົາດື່ມ.
22 ເຫດວ່າເຈົ້າຈະເອົາຖ່ານໄຟແດງກອງໄວ້ເທິງຫົວຂອງເຂົາ ແລະພຣະຜູ້ເປັນເຈົ້າຈະຊົງໃຫ້ບຳເໜັດແກ່ເຈົ້າ.
23 ລົມແຕ່ທິດເໜືອໄລ່ຝົນໄປເສຍສັນໃດ, ສີໜ້າທີ່ແຄ້ນເຄືອງກໍໄລ່ຕາມລີ້ນທີ່ສໍ່ສຽດໄປເສຍສັນນັ້ນ.
24 ຢູ່ແຈຫຼັງຄາເຮືອນດີກວ່າຢູ່ໃນເຮືອນກວ້າງຂວາງຮ່ວມກັບເມຍທີ່ມັກລຳໄລກັນ.
25 ຂ່າວດີຈາກເມືອງໄກ ກໍເໝືອນນ້ຳເຢັນທີ່ໃຫ້ແກ່ຄົນກະຫາຍ.
26 ຄົນຊອບທຳທີ່ຍອມພ່າຍແພ້ແກ່ຄົນຊົ່ວຮ້າຍ ກໍເໝືອນນ້ຳພຸທີ່ຂຸ່ນ ແລະເໝືອນນ້ຳສ້າງທີ່ເປິະເປື້ອນ.
27 ທີ່ຈະກິນນ້ຳເຜິ້ງຫຼາຍກໍບໍ່ດີສັນໃດ ຢາກໄດ້ຄຳຍ້ອງຍໍຫລາຍກໍບໍ່ເປັນການດີສັນນັ້ນ.

28 ຄົນທີ່ປາສະຈາກການປົກຄອງຈິດວິນຍານຕົນເອງ ກໍເໝືອນເມືອງທີ່ເພພັງ
ແລະບໍ່ມີກຳແພງ.

ບົດທີ 26

1 ກຽດຕິຍົດບໍ່ເໝາະສົມກັບຄົນໂງ່ ເຊັ່ນດຽວກັບຫິມະໃນລະດູຮ້ອນ ແລະຝົນ
ໃນລະດູເກັບກ່ຽວ.
2 ຄຳສາບແຊ່ງທີ່ຂາດເຫດຜົນຍ່ອມບໍ່ມາເກາະກ່ຽວເຊັ່ນດຽວກັບນົກທີ່ທ່ຽວ
ໄປ ແລະນົກນາງແອ່ນທີ່ກຳລັງບິນ.
3 ແສ້ສຳລັບມ້າ ບັງຫຽນສຳລັບລາ ແລະໄມ້ແສ້ສຳລັບຫຼັງຄົນໂງ່.
4 ຢ່າຕອບຄົນໂງ່ຕາມຄວາມໂງ່ຂອງເຂົາ ຢ້ານວ່າເຈົ້າເອງຈະເປັນເໝືອນຢ່າງ
ເຂົາ.
5 ຈົ່ງຕອບຄົນໂງ່ຕາມຄວາມໂງ່ຂອງເຂົາ ຢ້ານວ່າເຂົາຈະສະຫຼາດໃນສາຍ
ຕາຂອງເຂົາເອງ.
6 ບຸກຄົນທີ່ສົ່ງຂ່າວໄປດ້ວຍມືຂອງຄົນໂງ່ ກໍຕັດຕີນຂອງເຂົາເອງອອກ
ແລະດື່ມຄວາມເສຍຫາຍ.
7 ຄຳສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ກໍເໝືອນຂາຂອງຄົນພິການ ທີ່ບໍ່
ເທົ່າກັນ.
8 ບຸກຄົນຜູ້ໃຫ້ກຽດແກ່ຄົນໂງ່ ກໍເໝືອນຜູ້ທີ່ມັດກ້ອນຫີນໄວ້ໃນກະຖຸນ.
9 ຄຳສຸພາສິດທີ່ຢູ່ໃນປາກຂອງຄົນໂງ່ ກໍເໝືອນໜາມເຂົ້າຢູ່ໃນມືຄົນຂີ້ເມົາ.
10 ພຣະເຈົ້າຜູ້ຍິ່ງໃຫຍ່ ຜູ້ຊົງສ້າງສິ່ງສາລະພັດກໍຊົງຕອບແທນທັງຄົນໂງ່
ແລະຄົນລະເມີດດ້ວຍ.
11 ຄົນໂງ່ທີ່ເຮັດຄວາມໂງ່ຊ້ຳແລ້ວຊ້ຳອີກ ກໍເໝືອນໝາທີ່ກັບໄປຫາສິ່ງທີ່ມັນ
ຮາກອອກມາ.
12 ເຈົ້າໄດ້ເຫັນຄົນທີ່ຖືຕົວເອງວ່າເປັນຄົນມີປັນຍາຫຼື? ຍັງມີຫວັງໃນຄົນໂງ່
ຫຼາຍກວ່າໃນຄົນເຊັ່ນນັ້ນ.
13 ຄົນຂີ້ຄ້ານເວົ້າວ່າ "ມີໂຕສິງຢູ່ຕາມຫົນທາງ, ມີສິງໂຕໜຶ່ງຢູ່ຕາມຖະໜົນ".

14 ປະຕູຫັນໄປມາດ້ວຍບານພັບຂອງມັນສັນໃດ, ຄົນຂີ້ຄ້ານກໍເຮັດຢ່າງນັ້ນເທິງ
ທີ່ນອນຂອງເຂົາ.
15 ຄົນຂີ້ຄ້ານກອດມືຂອງຕົນໄວ້ໃນເອິກ, ເຂົາອິດເໝື່ອຍທີ່ຈະນຳມືກັບມາທີ່
ປາກຂອງຕົນ.
16 ຄົນຂີ້ຄ້ານເຫັນວ່າຕົວເອງມີປັນຍາຫຼາຍກວ່າຄົນເຈັດຄົນທີ່ຕອບໄດ້ຢ່າງມີ
ເຫດຜົນ.
17 ຜູ້ທີ່ກຳລັງຜ່ານໄປ ແລະເຂົ້າຫຍຸ້ງກ່ຽວໃນການຜິດກັນ ຊຶ່ງບໍ່ແມ່ນເລື່ອງຂອງ
ເຂົາເອງ ກໍເໝືອນຄົນຈັບຫູໝາດຶງໄວ້.
18 ຄົນບ້າທີ່ໂຍນກະບອງໄຟ ລູກທະນູ ແລະຄວາມຕາຍອອກໄປ
19 ກໍເໝືອນກັບຄົນທີ່ຫຼອກລວງເພື່ອນບ້ານຂອງເຂົາ ແລະກ່າວວ່າ “ຂ້ອຍຢອກ
ຫຼິ້ນເທົ່ານັ້ນເອງ”.
20 ບ່ອນໃດທີ່ບໍ່ມີຟືນ ໄຟກໍດັບ ແລະບ່ອນໃດທີ່ບໍ່ມີຄົນນິນທາ, ການຜິດກັນກໍ
ຢຸດໄປ.
21 ຖ່ານໃນເຕົາໄຟກັບຟືນໃນໄຟເປັນສັນໃດ, ຄົນທີ່ມັກຜິດກັນກໍຍົວະການຜິດ
ຖຽງກັນສັນນັ້ນ.
22 ຖ້ອຍຄຳຂອງຜູ້ທີ່ນິນທາກໍເໝືອນບາດແຜ ມັນລົງໄປຍັງສ່ວນຂ້າງໃນຂອງ
ຮ່າງກາຍ.
23 ຮີມສົບທີ່ຮ້ອນຮົນກັບໃຈທີ່ຊົ່ວຮ້າຍກໍເໝືອນຂີ້ເງິນທີ່ຕິດກັບໝໍ້ດິນ.
24 ບຸກຄົນທີ່ກຽດຊັງຜູ້ອື່ນກໍສໍ່ສຽດດ້ວຍຮີມສົບຂອງຕົນ ແລະເກັບຄວາມຫຼອກ
ລວງໄວ້ໃນໃຈ;
25 ເມື່ອເຂົາເວົ້າອ່ອນຫວານ ຢ່າເຊື່ອເຂົາ, ເພາະມີສິ່ງໜ້າກຽດໜ້າຊັງເຈັດ
ຢ່າງຢູ່ໃນໃຈຂອງເຂົາ.
26 ເຖິງແມ່ນເຂົາຈະປິດບັງຄວາມກຽດຊັງຂອງເຂົາໄວ້ດ້ວຍຄວາມຫຼອກລວງ
ຄວາມຊົ່ວຮ້າຍຂອງເຂົາຈະເປີດເຜີຍອອກຕໍ່ໜ້າທີ່ປະຊຸມທັງໝົດ.
27 ຜູ້ທີ່ຂຸດຂຸມໄວ້ ເຂົາຈະຕົກລົງໄປເອງ, ແລະຜູ້ໃດໃຫ້ກ້ອນຫີນກິ້ງມາ ມັນ
ຈະກັບທັບເຂົາເອງ.
28 ລີ້ນທີ່ຂີ້ຕົວະກຽດຊັງຜູ້ທີ່ມັນທຳລາຍ, ແລະປາກທີ່ປະຈົບປະແຈງກໍນຳຄວາມ
ຈິບຫາຍມາ.

ບົດທີ 27

## ຄຳຕັກເຕືອນແລະຄຳສັ່ງສອນຕ່າງ ໆ

1 ຢ່າຄຸຍໂມ້ເຖິງມື້ອື່ນ, ເພາະເຈົ້າບໍ່ຮູ້ວ່າວັນໜຶ່ງຈະມີອັນໃດເກີດຂຶ້ນ.

2 ຈົ່ງໃຫ້ຄົນອື່ນສັນເສີນເຈົ້າ ແລະບໍ່ແມ່ນປາກຂອງເຈົ້າເອງ, ໃຫ້ຄົນຕ່າງຖິ່ນສັນເສີນ, ບໍ່ແມ່ນຮີມສົບຂອງເຈົ້າເອງ.

3 ຫີນກ້ອນໜຶ່ງກໍໜັກ ແລະດິນຊາຍກໍມີນໍ້າໜັກ, ແຕ່ຄວາມໂຫດຮ້າຍຂອງຄົນໂງ່ກໍໜັກຍິ່ງກວ່າທັງສອງສິ່ງນັ້ນ.

4 ຄວາມພິໂລດກໍໂຫດຮ້າຍ ຄວາມຮ້າຍກໍຮຸນແຮງ, ແຕ່ໃຜຈະຢືນຕໍ່ໜ້າຄວາມ ອິດສາໄດ້?

5 ຄຳຕິຕຽນຕໍ່ໜ້າກໍດີກວ່າຮັກກັນລັບ ໆ.

6 ບາດແຜທີ່ເພື່ອນເຮັດ ກໍສຸດຈະລິດ, ແຕ່ການຈູບຂອງສັດຕູນັ້ນກໍຫຼອກລວງ.

7 ສຳລັບຄົນທີ່ອີ່ມແລ້ວ ຮັງເຜີ້ງກໍໜ້າເບື່ອ, ແຕ່ຜູ້ທີ່ຫິວ ທຸກສິ່ງທີ່ຂົມກໍກັບຫວານ.

8 ຄົນທີ່ຫຼົງໄປຈາກເຮືອນຂອງຕົນ ກໍຄືນົກທີ່ບິນຫລົງໄປຈາກຮັງຂອງມັນ.

9 ນໍ້າມັນ ແລະນໍ້າຫອມເຮັດໃຫ້ໃຈຍິນດີ, ແລະຄຳເຕືອນສະຕິອັນອ່ອນຫວານຂອງເພື່ອນກໍເປັນທີ່ໃຫ້ຊື່ນໃຈ.

10 ຢ່າປະຖິ້ມເພື່ອນຂອງເຈົ້າ ແລະເພື່ອນຂອງພໍ່ເຈົ້າ, ແລະຢ່າເຂົ້າໄປໃນເຮືອນພີ່ນ້ອງຂອງເຈົ້າໃນວັນລຳບາກຍາກເຢັນຂອງເຈົ້າ, ເພາະເພື່ອນບ້ານທີ່ຢູ່ໃກ້ດີກວ່າ ພີ່ນ້ອງທີ່ຢູ່ຫ່າງໄກ.

11 ລູກຊາຍຂອງເຮົາເອີຍ ຈົ່ງມີປັນຍາ ແລະເຮັດໃຈຂອງເຮົາໃຫ້ຍິນດີ ເພື່ອເຮົາຈະຕອບບຸກຄົນທີ່ຕຳໜິເຮົາໄດ້.

12 ຄົນຮອບຮູ້ເຫັນອັນຕະລາຍ ແລະໄປລີ້ຕົວຂອງເຂົາເສຍ, ແຕ່ຄົນທີ່ຮູ້ໜ້ອຍຍ່າງເລື້ອຍໄປ ແລະຮັບໂທດ.

13 ຈົ່ງຍຶດເສື້ອຜ້າຂອງເຂົາໄວ້ ເມື່ອເຂົາປະກັນໃຫ້ຄົນອື່ນ ແລະຍຶດຕົວເຂົາໄວ້ເມື່ອເຂົາຮັບປະກັນແກ່ຍິງຫລິ້ນຊູ້.

14 ບຸກຄົນທີ່ຕື່ນແຕ່ເຊົ້າມືດໄປອວຍພອນເພື່ອນບ້ານດ້ວຍສຽງດັງ ເຂົາຈະຖືວ່າເປັນຄຳປ້ອຍດ່າ.

15 ຝົນລົນແຂະໆ ໃນມື້ຝົນຕົກສັນໃດ ຜູ້ຍິງທີ່ມັກຜິດຖຽງກັນກໍຄືກັນສັນນັ້ນ.

16 ຜູ້ທີ່ປິດບັງນາງໄວ້ກໍເໝືອນຫ້າມລົມ ຫຼືກຳນໍ້າມັນດ້ວຍມື.

17 ເຫຼັກຝົນເຫຼັກໃຫ້ຄົມໄດ້ສັນໃດ, ຄົນໜຶ່ງກໍຝົນເພື່ອນຂອງຕົນໃຫ້ຄົມໄດ້ສັນນັ້ນ.
18 ຄົນຜູ້ທີ່ເບິ່ງແຍງຕົ້ນໝາກເດື່ອຈະໄດ້ກິນຜົນຂອງມັນ, ແລະຄົນຜູ້ທີ່ຄຸ້ມຄອງ
ນາຍຂອງຕົນຈະໄດ້ຮັບກຽດ.
19 ໃນນ້ຳສ່ອງເຫັນຮູບໜ້າຄົນສັນໃດ ໃຈຂອງຄົນຈະສ່ອງໃຫ້ເຫັນເຂົາສັນນັ້ນ.
20 ນາລົກ ແລະແດນຄົນຕາຍບໍ່ຮູ້ຈັກອີ່ມ, ຕາຂອງມະນຸດກໍບໍ່ຮູ້ຈັກອີ່ມ
ເຊັ່ນກັນ.
21 ເບົ້າມີໄວ້ສຳລັບຫຼໍ່ເງິນ ເຕົາຫຼອມໂລຫະມີໄວ້ສຳລັບຫຼໍ່ຄຳ, ແຕ່ຄຳສັນລະເສີນ
ຂອງຄົນມີໄວ້ພິສູດຄົນ.
22 ເຖິງແມ່ນເຈົ້າຈະເອົາຄົນໂງ່ໃສ່ຄົກຕຳດ້ວຍສາກພ້ອມກັບເມັດເຂົ້າ ຄວາມ
ໂງ່ຈ້າຂອງເຂົາກໍຍັງບໍ່ຫວິດຈາກເຂົາ.
23 ຈົ່ງຮູ້ຄວາມທຸກສຸກຂອງຝູງແບ້ແກະຂອງເຈົ້າໃຫ້ດີ ແລະຈົ່ງເອົາໃຈໃສ່ຝູງ
ງົວຂອງເຈົ້າ.
24 ເພາະຊັບສົມບັດບໍ່ໄດ້ທົນຢູ່ໄດ້ເປັນນິດ, ແລະມົງກຸດທົນຢູ່ໄດ້ທຸກຊົ່ວອາຍຸຫຼື?
25 ຫຍ້າແຫ້ງໝົດໄປແລ້ວ ແລະຫຍ້າອ່ອນງອກຂຶ້ນມາ ແລ້ວເຂົາເກັບພືດ
ຕ່າງ ໆທີ່ພູເຂົາ.
26 ລູກແກະຈະໃຫ້ເສື້ອຜ້າແກ່ເຈົ້າ ແລະແບ້ກໍຈະເປັນຄ່ານາ.
27 ແລະເຈົ້າຈະມີນົມແບ້ເປັນອາຫານແກ່ເຈົ້າພຽງພໍ ທັງເປັນອາຫານແກ່ຄົວ
ເຮືອນຂອງເຈົ້າ ແລະເປັນເຄື່ອງລ້ຽງຊີບສາວໃຊ້ຂອງເຈົ້າ.

## ບົດທີ 28

1 ຄົນຊົ່ວຮ້າຍຝັ່ນໜີເມື່ອບໍ່ມີໃຜໄລ່ຕາມ, ແຕ່ຄົນຊອບທຳກໍກ້າຫານຄືໂຕສິງໃຫຍ່.
2 ເມື່ອແຜ່ນດິນມີການກະບົດກໍມີຜູ້ຄອບຄອງເພີ່ມຂຶ້ນ, ແຕ່ດ້ວຍຄົນທີ່ມີ
ຄວາມເຂົ້າໃຈກັບຄວາມຮູ້ ຄວາມໝັ້ນຄົງຂອງແຜ່ນດິນນັ້ນຈະຍືນນານ.
3 ຄົນຍາກຈົນທີ່ບີບບັງຄັບຄົນຍາກຈົນ ກໍເໝືອນຝົນຕົກແຮງທີ່ທຳລາຍຜົນ
ລະປູກ.
4 ບັນດາຜູ້ທີ່ປະຖິ້ມພຣະບັນຍັດຍ່ອມສັນລະເສີນຄົນຊົ່ວຮ້າຍ, ແຕ່ບັນດາຜູ້
ທີ່ຮັກສາພຣະບັນຍັດຍ່ອມຄອຍຕໍ່ສູ້ເຂົາ.

5 ຄົນຊົ່ວຮ້າຍບໍ່ເຂົ້າໃຈຄວາມຍຸຕິທຳ, ແຕ່ບັນດາຜູ້ທີ່ສະແຫວງຫາພຣະຜູ້
ເປັນເຈົ້າກໍເຂົ້າໃຈສິ່ງສາລະພັດ.
6 ຄົນຍາກຈົນທີ່ດຳເນີນໃນຄວາມທ່ຽງທຳຂອງເຂົາ ກໍດີກວ່າຄົນຮັ່ງມີທີ່
ຄິດໂກງໃນທາງຂອງຕົນ.
7 ຜູ້ທີ່ຮັກສາພຣະບັນຍັດກໍເປັນລູກຊາຍທີ່ມີປັນຍາ, ແຕ່ວ່າຜູ້ທີ່ເປັນເພື່ອນ
ຂອງຄົນຊົ່ວຮ້າຍ ກໍນຳຄວາມອັບອາຍມາເຖິງພໍ່ຂອງເຂົາ.
8 ຜູ້ທີ່ໃຫ້ຊັບສົມບັດຂອງຕົນເພີ່ມຂຶ້ນດ້ວຍດອກເບ້ຍ ແລະດ້ວຍວິທີບໍ່ຍຸຕິທຳ
ກໍເທົ່າກັບວ່າໄດ້ໂຮມຊັບສົມບັດໄວ້ສຳລັບຜູ້ທີ່ເມດຕາຄົນຍາກຈົນ.
9 ຖ້າຜູ້ໃດຫັນໃບຫູໄປຈາກການຟັງພຣະບັນຍັດ ແມ່ນແຕ່ຄຳອະທິຖານຂອງ
ເຂົາກໍເປັນສິ່ງໜ້າກຽດໜ້າຊັງ.
10 ຜູ້ທີ່ພາຄົນຊອບທຳໃຫ້ຫຼົງໄປຕາມທາງຊົ່ວຮ້າຍ ກໍຈະຕົກລົງໃນຂຸມທີ່ເຂົາ
ຂຸດໄວ້ເອງ, ແຕ່ວ່າຄົນທ່ຽງທຳຈະໄດ້ຮັບແຕ່ສິ່ງດີເປັນມໍລະດົກ.
11 ຄົນຮັ່ງມີກໍສະຫຼາດໃນສາຍຕາຂອງເຂົາເອງ, ແຕ່ຄົນຍາກຈົນຜູ້ມີຄວາມ
ເຂົ້າໃຈຈະຮູ້ຈັກເຂົາແຈ່ມແຈ້ງ.
12 ເມື່ອຄົນຊອບທຳມີອຳນາດ ທຸກຄົນປິຕິຍິນດີ, ແຕ່ເມື່ອຄົນຊົ່ວຮ້າຍຂຶ້ນມີ
ອຳນາດ ຄົນກໍພາກັນຫລົບລີ້ເສຍ.
13 ບຸກຄົນທີ່ເຊື່ອງບາບທັງຫຼາຍຂອງຕົນຈະບໍ່ຈະເລີນ, ແຕ່ບຸກຄົນທີ່ສາລະພາບ
ແລະຖິ້ມຄວາມຊົ່ວເສຍຈະໄດ້ຄວາມເມດຕາ.
14 ບຸກຄົນທີ່ຢຳເກງຢູ່ສະເໝີກໍເປັນສຸກ, ແຕ່ບຸກຄົນທີ່ເຮັດໃຈຂອງຕົນໃຫ້ແຂງ
ກະດ້າງຈະຕົກໃນຄວາມລຳບາກຍາກເຢັນ.
15 ຜູ້ປົກຄອງຊົ່ວຮ້າຍທີ່ຢູ່ເໜືອຄົນຍາກຈົນ ກໍເໝືອນໂຕສິງໃຫຍ່ແຜດສຽງ ຫຼື
ໂຕໝີທີ່ກຳລັງເຂົ້າຕໍ່ສູ້.
16 ຜູ້ປົກຄອງທີ່ຂາດຄວາມເຂົ້າໃຈກໍເປັນຜູ້ບີບບັງຄັບທີ່ໂຫດຮ້າຍ, ແຕ່ບຸກຄົນ
ທີ່ກຽດຊັງຄວາມໂລບຍ່ອມຍືດວັນເດືອນປີຂອງເຂົາອອກໄປ.
17 ຄົນທີ່ມີບາບຊົ່ວຍ້ອນຂ້າຄົນອື່ນ ຄົນນັ້ນຈະຫຼົບໜີຢູ່ຈົນຕາຍ, ຢ່າໃຫ້ໃຜ
ຊ່ອຍເຂົາເລີຍ.
18 ບຸກຄົນທີ່ດຳເນີນໃນຄວາມທ່ຽງທຳຈະໄດ້ຮັບການຊ່ອຍກູ້, ແຕ່ຄົນທີ່ມີເລ້ກົນ
ຈະລົ້ມລົງໂດຍບໍ່ຮູ້ສຶກຕົວ.
19 ບຸກຄົນທີ່ໄຖນາຂອງຕົນຈະໄດ້ອາຫານຫຼວງຫຼາຍ, ແຕ່ຜູ້ທີ່ຕິດຕາມຄົນໄຮ້
ປະໂຫຍດກໍຈະຍິ່ງຈົນລົງ.

20 ຄົນທີ່ສັດຊື່ຈະໄດ້ຮັບພຣະພອນຫຼວງຫຼາຍ ແຕ່ຜູ້ທີ່ຟ້າວຮັ່ງມີຈະໄດ້ຮັບ
ໂທດ.
21 ຊຶ່ງຈະສະແດງຄວາມລຳອຽງກໍບໍ່ດີ, ຄົນອາດຈະທຳລະຍົດເພາະອາຫານ
ພຽງໜ້ອຍດຽວກໍເປັນໄດ້.
22 ຄົນທີ່ມີຕາຊົ່ວກໍເລັ່ງຫາຊັບ ແລະບໍ່ຮູ້ວ່າຄວາມຍາກຈົນຈະມາເຖິງເຂົາເອງ.
23 ບຸກຄົນທີ່ຕິຕຽນຄົນໜຶ່ງຄົນໃດ ພາຍຫຼັງເຂົາຈະໄດ້ຮັບຄວາມພໍໃຈຫຼາຍ
ກວ່າຄົນທີ່ຍົກຍໍດ້ວຍລີ້ນຂອງຕົວ.
24 ບຸກຄົນທີ່ລັກສິ່ງຂອງ ຂອງພໍ່ ຫຼືແມ່ຂອງຕົນແລະກ່າວວ່າ "ຢ່າງນີ້ກໍບໍ່ຜິດ",
ເຂົາກໍເປັນເພື່ອນຂອງຄົນທຳລາຍ.
25 ຄົນໃຈຈອງຫອງເຮັດໃຫ້ເກີດການຜິດກັນ, ແຕ່ຜູ້ທີ່ວາງໃຈໃນພຣະຜູ້ເປັນ
ເຈົ້າຈະຈະເລີນຂຶ້ນ.
26 ບຸກຄົນທີ່ວາງໃຈໃນຕົນເອງກໍເປັນຄົນໂງ່, ແຕ່ບຸກຄົນທີ່ດຳເນີນໃນປັນຍາ
ຈະໄດ້ຮັບການຊ່ອຍໃຫ້ພົ້ນ.
27 ບຸກຄົນທີ່ໃຫ້ແກ່ຄົນຍາກຈົນຈະບໍ່ຂັດສົນ, ແຕ່ບຸກຄົນທີ່ປິດຕາຂອງເຂົາເສຍ
ຈາກການນີ້ ຈະໄດ້ຮັບຄຳສາບແຊ່ງ.
28 ເມື່ອຄົນຊົ່ວຮ້າຍມີອຳນາດຂຶ້ນ ຄົນກໍຫລົບລີ້ຕົວເສຍ, ແຕ່ເມື່ອເຂົາທັງຫຼາຍ
ຈິບຫາຍໄປ ຄົນຊອບທຳກໍເພີ່ມຂຶ້ນ.

## ບົດທີ 29

1 ບຸກຄົນທີ່ຖືກຕັກເຕືອນເລື້ອຍ ໆ ແຕ່ຍັງແຂງກະດ້າງ ຈະຖືກທຳລາຍໄວ
ຊຶ່ງຮັກສາບໍ່ໄດ້.
2 ເມື່ອຄົນຊອບທຳມີອຳນາດ, ປະຊາຊົນກໍຊື່ນຊົມຍິນດີ, ແຕ່ເມື່ອຄົນຊົ່ວຮ້າຍ
ປົກຄອງ ປະຊາຊົນກໍຮ້ອງຄາງ.
3 ບຸກຄົນຜູ້ຮັກປັນຍາຍ່ອມເຮັດໃຫ້ພໍ່ຂອງເຂົາຍິນດີ, ແຕ່ຜູ້ທີ່ຄົບຄ້າກັບຍິງ
ໂສເພນີກໍຜານຊັບສົນຂອງຕົນ.
4 ກະສັດຊົງໃຫ້ປະເທດຕັ້ງໝັ້ນຄົງຢູ່ດ້ວຍການຕັດສິນທີ່ຍຸຕິທຳ, ແຕ່ວ່າອົງ
ທີ່ຮັບເອົາຂອງສິນບົນກໍທຳລາຍແຜ່ນດິນນັ້ນ.

5 ຄົນທີ່ຍົກຍໍເພື່ອນບ້ານຂອງຕົນກໍຫ້າງບ່ວງແຮ້ວໄວ້ດັກຕີນຂອງເຂົາ.
6 ໃນການລະເມີດຂອງຄົນຊົ່ວກໍມີບ່ວງແຮ້ວ, ແຕ່ຄົນຊອບທຳຮ້ອງເພງແລະ ຊົມຊື່ນຍິນດີ.
7 ຄົນຊອບທຳພິຈາລະນາເບິ່ງສິດທິຂອງຄົນຍາກຈົນ, ແຕ່ຄົນຊົ່ວຮ້າຍບໍ່ ສົນໃຈເລື່ອງນີ້ເລີຍ.
8 ຄົນມັກຫຍໍ້ຫຍັນເຮັດໃຫ້ບ້ານເມືອງເດືອດຮ້ອນ, ແຕ່ຄົນມີປັນຍາສາມາດ ລະງັບເຫດຮ້າຍໄດ້.
9 ຖ້າຄົນມີປັນຍາໂຕ້ຖຽງກັບຄົນໂງ່ ບໍ່ວ່າເຂົາໂມໂຫ ຫຼືຫົວ ບໍ່ມີວັນສະຫງົບ ລົງໄດ້.
10 ຄົນກະຫາຍເລືອດກຽດຊັງຄົນສັດຊື່, ແຕ່ຄົນຊອບທຳຈະຄຸ້ມຄອງຊີວິດຂອງ ລາວໄວ້.
11 ຄົນໂງ່ຍ່ອມໃຫ້ຄວາມຄິດຂອງເຂົາພຸ່ງອອກມາເຕັມທີ່, ແຕ່ຄົນມີປັນຍາ ຍ່ອມຫ້າມຄວາມຄິດໄວ້ຈົນເວລາເໝາະສົມ.
12 ຖ້າຜູ້ປົກຄອງຟັງຄວາມຕົວະ ພວກຂ້າລາຊະການຂອງທ່ານກໍຊົ່ວຮ້າຍໄປ ດ້ວຍ.
13 ຄົນຍາກຈົນແລະຄົນຫຼອກລວງມັກມາພົບກັນ, ແລະພຣະຜູ້ເປັນເຈົ້າປະທານ ຄວາມສະຫວ່າງແກ່ຕາຂອງຄົນທັງສອງ.
14 ກະສັດທີ່ພິພາກສາຄົນຍາກຈົນດ້ວຍຄວາມສັດຊື່ ພະບັນລັງຂອງພຣະອົງ ຈະຕັ້ງໝັ້ນຄົງຢູ່ເປັນນິດ.
15 ໄມ້ແສ້ ແລະຄຳຕັກເຕືອນພາໃຫ້ເກີດປັນຍາ, ແຕ່ຖ້າປ່ອຍເດັກໄວ້ໂດຍ ລຳພັງຈະນຳຄວາມອັບອາຍມາສູ່ແມ່ຂອງຕົນ.
16 ເມື່ອຄົນຊົ່ວຮ້າຍເພີ່ມທະວີ ການລະເມີດກໍຫຼາຍຂຶ້ນດ້ວຍ, ແຕ່ຄົນຊອບ ທຳຈະເບິ່ງຄວາມຫຼົ້ມຈົມຂອງເຂົາ.
17 ຈົ່ງຕີສອນລູກຊາຍຂອງເຈົ້າ ແລະເຂົາຈະໃຫ້ເຈົ້າໄດ້ເຊົາເໝື່ອຍ, ເອີ! ເຂົາ ຈະໃຫ້ຄວາມປິຕິຍິນດີແກ່ໃຈຂອງເຈົ້າ.
18 ທີ່ໃດໆ ທີ່ບໍ່ມີເປົ້າຫມາຍ ປະຊາຊົນກໍຈິບຫາຍ, ແຕ່ຄົນທີ່ຮັກສາພຣະບັນຍັດ ຈະເປັນສຸກ.
19 ພຽງແຕ່ຖ້ອຍຄຳເທົ່ານັ້ນຈະສອນຂ້ອຍໃຊ້ບໍ່ໄດ້, ເພາະເຖິງແມ່ນວ່າເຂົາ ຈະເຂົ້າໃຈເຂົາກໍບໍ່ເຮັດຕາມ.
20 ຄົນໂງ່ຈ້າກໍຍັງມີຄວາມຫວັງຫລາຍກວ່າຄົນເວົ້າບໍ່ຄິດ.

21 ຄົນທີ່ລ້ຽງຄົນໃຊ້ດ້ວຍຄວາມລະອຽດອ່ອນຕັ້ງແຕ່ນ້ອຍ ໆ ໃນທີ່ສຸດຈະເຫັນ
ວ່າເຂົາກາຍເປັນລູກຊາຍຂອງຕົນ.
22 ຄົນໂມໂຫຍ່ອມເຮັດໃຫ້ເກີດການຜິດກັນ ແລະຄົນທີ່ມັກຮ້າຍກໍເຮັດບາບຫຼາຍ.
23 ຄວາມຈອງຫອງຂອງຄົນຈະນຳເຂົາໃຫ້ຕໍ່າລົງ, ແຕ່ຄົນທີ່ມີໃຈຖ່ອມລົງຈະ
ໄດ້ຮັບກຽດ.
24 ຜູ້ທີ່ມີສ່ວນກັບຄົນຂີ້ລັກກໍກຽດຊັງຊີວິດຂອງຕົນ, ເຂົາໄດ້ຍິນຄຳສາບແຊ່ງ
ແຕ່ບໍ່ເປີດເຜີຍຫຍັງເລີຍ.
25 ຄວາມຢ້ານມະນຸດກໍວາງບ້ວງແຮ້ວໄວ້, ແຕ່ບຸກຄົນທີ່ວາງໃຈໃນພຣະຜູ້
ເປັນເຈົ້າກໍຈະປອດໄພ.
26 ຄົນເປັນຈຳນວນຫຼາຍສະແຫວງຫາຄວາມພໍໃຈຈາກຜູ້ປົກຄອງ, ແຕ່ທຸກ
ຄົນຈະໄດ້ຄວາມຍຸຕິທຳຈາກພຣະຜູ້ເປັນເຈົ້າ.
27 ຄົນບໍ່ຍຸຕິທຳເປັນທີ່ໜ້າລັງກຽດແກ່ຄົນຍຸຕິທຳ, ແຕ່ຄົນທ່ຽງທຳກັບເປັນທີ່
ໜ້າກຽດໜ້າຊັງແກ່ຄົນຊົ່ວຮ້າຍ.

## ບົດທີ 30

## ຖ້ອຍຄຳຂອງອາກູ

1 ຖ້ອຍຄຳຂອງອາກູ ລູກຊາຍຢາເຄ ຄືຄຳທຳນວາຍຂອງລາວ ຊາຍຄົນນັ້ນ
ເວົ້າກັບອິທີເອລີ, ກັບອິທີເອລີ ແລະອູຄານ ວ່າ,
2 ແທ້ຈິງແລ້ວ ຂ້ອຍເປັນຄົນບໍ່ຮູ້ຫຼາຍກວ່າໝົດທຸກຄົນ ຂ້ອຍບໍ່ມີຄວາມ
ເຂົ້າໃຈຢ່າງມະນຸດ.
3 ຂ້ອຍບໍ່ເຄີຍຮຽນຮູ້ປັນຍາ ທັງບໍ່ມີຄວາມຮູ້ຂອງອົງຜູ້ບໍລິສຸດ.
4 ໃຜໄດ້ຂຶ້ນໄປຍັງສະຫວັນ ຫຼືລົງມາ? ໃຜໄດ້ລວບລວມລົມໄວ້ໃນກຳມືຂອງ
ທ່ານ? ໃຜໄດ້ເອົາເສື້ອຫົ່ມຫໍ່ນ້ຳທັງຫຼາຍໄວ້? ໃຜໄດ້ແຕ່ງຕັ້ງທີ່ສຸດປາຍແຫ່ງ
ແຜ່ນດິນໂລກໄວ້? ນາມຊື່ຂອງຜູ້ນັ້ນແມ່ນຫຍັງ? ແລະນາມຊື່ບຸດຊາຍຂອງ
ຜູ້ນັ້ນແມ່ນຫຍັງ? ຖ້າທ່ານຮູ້ຈິງບອກມາເຖີດ.

5 ພຣະທຳທຸກຄຳຂອງພຣະເຈົ້ານັ້ນກໍບໍລິສຸດ, ພຣະອົງຊົງເປັນກຳບັງແກ່
ບັນດາຜູ້ທີ່ວາງໃຈໃນພຣະອົງ.
6 ຢ່າເພີ້ມຫຍັງເຂົ້າກັບພຣະທຳຂອງພຣະອົງ ຢ້ານວ່າພຣະອົງຈະຕິຕຽນເຈົ້າ
ແລະເຈົ້າຈະປະກົດເປັນຄົນຂີ້ຕົວະ.
7 ຂ້າພຣະອົງຂໍສອງສິ່ງຈາກພຣະອົງ, ຂໍຢ່າຊົງປະຕິເສດທີ່ຈະໃຫ້ຂ້າພຣະອົງ
ກ່ອນຂ້າພຣະອົງຕາຍ,
8 ຂໍໃຫ້ຄວາມອະນິຈັງ ແລະຄວາມຂີ້ຕົວະໄກຈາກຂ້າພຣະອົງ ຂໍຢ່າປະທານ
ຄວາມຍາກຈົນ ຫຼືຄວາມຮັ່ງມີແກ່ຂ້າພຣະອົງ, ຂໍລ້ຽງຂ້າພຣະອົງດ້ວຍ
ອາຫານທີ່ພໍດີແກ່ຂ້າພຣະອົງ,
9 ຢ້ານວ່າຂ້າພຣະອົງຈະອີ່ມ ແລະປະຕິເສດພຣະອົງ, ແລ້ວເວົ້າວ່າ "ພຣະ
ຜູ້ເປັນເຈົ້າເປັນຜູ້ໃດ?" ຫຼືຢ້ານວ່າຂ້າພຣະອົງຈະຍາກຈົນ ແລ້ວລັກສິ່ງຂອງ
ແລະເຮັດໃຫ້ພຣະນາມຂອງພຣະເຈົ້າແຫ່ງຂ້າພຣະອົງເປັນມົນທິນ.

10 ຢ່າຟ້ອງຄົນໃຊ້ໃຫ້ນາຍຂອງເຂົາຟັງ ຢ້ານວ່າເຂົາຈະສາບແຊ່ງເຈົ້າ ແລະ
ເຈົ້າຈະຕ້ອງມີຄວາມຜິດ.

11 ມີຄົນຊົ່ວອາຍຸໜຶ່ງ ທີ່ສາບແຊ່ງພໍ່ຂອງຕົນ ແລະບໍ່ອວຍພອນແກ່ແມ່ຂອງຕົນ.
12 ມີຄົນຊົ່ວອາຍຸໜຶ່ງທີ່ບໍລິສຸດໃນສາຍຕາຂອງຕົນ, ແຕ່ຍັງບໍ່ໄດ້ຮັບການຊຳລະ
ລ້າງຈາກຄວາມສົກກະປົກຂອງເຂົາ.
13 ມີຄົນຊົ່ວອາຍຸໜຶ່ງຕາຂອງເຂົາສູງຈິງໜໍ! ແລະໜັງຕາຂອງເຂົາສູງຍິ່ງ.
14 ມີຄົນຊົ່ວອາຍຸໜຶ່ງທີ່ແຂ້ວຂອງເຂົາເປັນຄືດາບ ແຂ້ວກົກຂອງເຂົາເປັນຄືມີດ
ເພື່ອຈະກັດກິນຄົນຍາກຈົນເສຍຈາກແຜ່ນດິນໂລກ ແລະຄົນຂັດສົນເສຍ
ຈາກທ່າມກາງມະນຸດ.

15 ໂຕປີງມີລູກສາວສອງຕົວ, ມັນຮ້ອງວ່າ "ຈົ່ງໃຫ້, ຈົ່ງໃຫ້" ສາມສິ່ງນີ້ບໍ່ເຄີຍ
ອີ່ມ, ເອີ! ສີ່ສິ່ງບໍ່ເຄີຍເວົ້າວ່າ "ພໍແລ້ວ".
16 ຄື: ຂຸມຝັງສົບ; ມົດລູກຂອງຍິງໝັນ, ແຜ່ນດິນໂລກທີ່ບໍ່ອີ່ມນ້ຳ ແລະໄຟທີ່
ບໍ່ເຄີຍເວົ້າວ່າ "ພໍແລ້ວ".
17 ຕາທີ່ຫຍໍ້ຫຍັນພໍ່ ແລະປະໝາດການຍອມຟັງແມ່, ຈະຖືກກາແຫ່ງຮ່ອມພູ
ຈີກອອກ ແລະນົກອິນຊີໜຸ່ມຈະກິນເສຍ.

18 ມີສາມສິ່ງທີ່ອັດສະຈັນໃຈຂ້ອຍເຫຼືອເກີນ, ເອີ! ສີ່ສິ່ງທີ່ຂ້ອຍບໍ່ເຂົ້າໃຈ
19 ຄື: ທ່າທີຂອງນົກອິນຊີໃນທ້ອງຟ້າ, ທ່າທີຂອງງູເທິງຫີນ, ທ່າທີຂອງເຮືອໃນ
ທ້ອງທະເລ ແລະທ່າທີຂອງຊາຍກັບຍິງສາວ.
20 ນີ້ເປັນທາງຂອງຍິງຜູ້ລ່ວງປະເວນີຄື; ນາງກິນ ແລ້ວ ນາງເຊັດປາກ ແລະ
ນາງເວົ້າວ່າ, "ຂ້ອຍບໍ່ໄດ້ເຮັດຊົ່ວ".

21 ແຜ່ນດິນໂລກສັ່ນສະເທືອນຢູ່ໃຕ້ສາມສິ່ງ, ເອີ! ມັນທົນຢູ່ໃຕ້ສີ່ສິ່ງບໍ່ໄດ້
22 ຄື: ຂ້າທາດເມື່ອໄດ້ປົກຄອງ; ຄົນໂງ່ເມື່ອກິນອີ່ມ;
23 ຜູ້ຍິງທີ່ເປັນຕາຊັງແຕ່ໄດ້ຜົວ ແລະສາວໃຊ້ທີ່ໄດ້ເປັນນາຍແທນນາຍຍິງ
ຂອງຕົນ.

24 ມີສີ່ສິ່ງໃນແຜ່ນດິນໂລກທີ່ນ້ອຍເຫຼືອເກີນ, ແຕ່ມີປັນຍາຫຼາຍເຫຼືອລົ້ນ:
25 ຝູງມົດ ເປັນສັດທີ່ບໍ່ແຂງແຮງ, ແຕ່ມັນຍັງຕຽມອາຫານຂອງມັນໄວ້ໃນລະດູແລ້ງ,
26 ຕົວຕຸ່ນ ເປັນສັດທີ່ບໍ່ມີກຳລັງ, ແຕ່ມັນຍັງສ້າງເຮືອນຂອງມັນໃນຊອກຫີນ,
27 ຝູງຕັກແຕນບໍ່ມີກະສັດ, ແຕ່ມັນເຂົ້າເປັນກອງທັບອອກໄປເປັນແຖວ,
28 ແມງມູມນັ້ນມັນເຮັດຮັງດ້ວຍມືຂອງມັນເອງ ແຕ່ມັນຍັງຢູ່ໃນພະລາຊະວັງ
ຂອງກະສັດ.

29 ມີສາມສິ່ງທີ່ສະຫງ່າງາມຫຼາຍໃນທ່າຍ່າງ ເອີ! ມີສີ່ສິ່ງທີ່ທາງເດີນຂອງມັນ
ຜ່າເຜີຍ.
30 ຄືສິງໃຫຍ່ ຊຶ່ງເປັນສັດທີ່ມີກຳລັງຫຼາຍທີ່ສຸດ ແລະບໍ່ຍອມຫັນຫຼັງກັບເພາະ
ສິ່ງໃດເລີຍ,
31 ຫມາລ່າເນື້ອ[4], ແບ້ເຖິກ, ແລະກະສັດອີງທີ່ບໍ່ມີໃຜບຸກຕໍ່ສູ້ໄດ້.

32 ຖ້າເຈົ້າໄດ້ຍົກຍ້ອງຕົນເອງດ້ວຍຄວາມໂງ່ ຫຼືຄິດແຜນການຊົ່ວຮ້າຍ ຈົ່ງເອົາ
ມືປິດປາກຂອງເຈົ້າເສຍເຖີດ.
33 ເພາະເມື່ອກວນນ້ຳນົມກໍໄດ້ນ້ຳເບີ ເມື່ອບີບດັງກໍໃຫ້ເລືອດອອກ, ແລະເມື່ອ
ຍົວະໃຫ້ໂມໂຫກໍພາໃຫ້ການຜິດກັນ.

[4] ໃນພາສາເດີມຄວາມຫມາຍອາດຈະຫມາຍເຖິງ ໝາລ່າເນື້ອ ຫລື ມ້າ ຊຶ່ງທັງສອງມີສະຫງ່າຜ່າເຜີຍ.

## ບົດທີ 31
## ຖ້ອຍຄຳຂອງກະສັດເລມູເອນ

1 ຖ້ອຍຄຳຂອງກະສັດເລມູເອນ ຄືຄຳທຳນວາຍທີ່ແມ່ຂອງພຣະອົງໄດ້ສັ່ງ
ສອນໃຫ້ທ່ານຮູ້ຈັກ.
2 ລູກຊາຍຂອງແມ່ເອີຍ ເປັນຫຍັງ? ລູກແຫ່ງທ້ອງແມ່ເອີຍ ເຮັດຫຍັງ? ລູກ
ແຫ່ງຄຳປະຕິຍານຂອງແມ່ ເອີຍ!
3 ຢ່າໃຫ້ກຳລັງຂອງເຈົ້າເສຍຍ້ອນພວກຜູ້ຍິງ ຢ່າໃຫ້ທາງຂອງເຈົ້າແກ່ຜູ້ທີ່ທຳ
ລາຍກະສັດໃດ ໆ.
4 ໂອ ເລມູເອນເອີຍ ບໍ່ສົມຄວນແກ່ກະສັດເລີຍ! ບໍ່ສົມຄວນທີ່ກະສັດຈະດື່ມ
ເຫຼົ້າອະງຸ່ນ, ຫຼືຜູ້ທີ່ປົກຄອງຈະດື່ມເຫຼົ້າ,
5 ຢ້ານວ່າເຂົາຈະດື່ມແລ້ວລືມກົດໝາຍນັ້ນໝົດເສຍ ແລະບິດເບືອນຄວາມ
ຍຸຕິທຳແກ່ຄົນທຸກໂສກ.
6 ຈົ່ງໃຫ້ເຫຼົ້າແກ່ຜູ້ທີ່ກຳລັງຈະຈິບຫາຍ ແລະນ້ຳອະງຸ່ນແກ່ຜູ້ທີ່ທຸກໃຈຢ່າງ
ຂົມຂື່ນ.
7 ຈົ່ງໃຫ້ເຂົາດື່ມເພື່ອລືມຄວາມຍາກຈົນຂອງເຂົາ ແລະຈະຈົດຈຳຄວາມລະ
ທົມທຸກຂອງເຂົາບໍ່ໄດ້ອີກຕໍ່ໄປ.
8 ຈົ່ງອ້າປາກຂອງເຈົ້າແທນຄົນທີ່ບໍ່ມີໂອກາດ ເພື່ອສິດທິຂອງຄົນທີ່ຖືກມອບໄວ້
ໃຫ້ຈິບຫາຍ.
9 ຈົ່ງອ້າປາກຂອງເຈົ້າ, ຕັດສິນຢ່າງຊອບທຳ, ຮັກສາສິດທິຂອງຄົນຈົນ ແລະ
ຄົນຂັດສົນໃຫ້ຄົງຢູ່.

## ເມຍທີ່ດີ

10 ໃຜຈະພົບເມຍທີ່ດີໄດ້? ເພາະຄ່າຂອງນາງປະເສີດຍິ່ງກວ່າເພັດນິນຈິນດາ.
11 ຜົວຂອງນາງກໍວາງໃຈໃນນາງ ແລະຜົວຈະບໍ່ຂາດກຳໄລ.
12 ນາງຈະເຮັດແຕ່ສິ່ງທີ່ດີແກ່ຜົວ ຈະບໍ່ເຮັດໃຫ້ຜົວເສື່ອມເສຍຕະຫຼອດຊີວິດ.
13 ນາງຈັດຫາຂົນແກະ ແລະຜ້າເນື້ອດີ ພ້ອມທັງເຮັດວຽກຢ່າງຊຳນິຊຳນານ.
14 ນາງປຽບເໝືອນເຮືອກຳປັ່ນຂອງພໍ່ຄ້າ ທີ່ນຳອາຫານມາຈາກບ່ອນໄກ.

15 ນາງນອນເດິກຕື່ນເຊົ້າ ແລະຈັດອາຫານໃຫ້ຄົວເຮືອນຂອງນາງ ແລະຈັດສ່ວນແບ່ງໃຫ້ແກ່ສາວໃຊ້ຂອງນາງ.
16 ນາງພິຈາລະນາເບິ່ງໄຮ່ນາແລ້ວກໍຊື້ໄວ້, ນາງປູກສວນອະງຸ່ນດ້ວຍເງິນທີ່ນາງຫາມາເອງ.
17 ນາງຄາດແອວຂອງນາງດ້ວຍກຳລັງ ແລະເຮັດໃຫ້ແຂນຂອງນາງເຂັ້ມແຂງ.
18 ນາງຮູ້ວ່າສິນຄ້າຂອງນາງເປັນຂອງທີ່ດີ, ກາງຄືນຕະກຽງຂອງນາງກໍບໍ່ດັບ.
19 ນາງຍື່ນມືອອກຈັບເຫລັກໄນ ແລະມືຂອງນາງຈັບເຄື່ອງປັ່ນ.
20 ນາງຫຍິບຍື່ນໃຫ້ຄົນຍາກຈົນ, ເອີ ນາງຍື່ນມືອອກຊ່ວຍຄົນຂັດສົນ.
21 ນາງບໍ່ຢ້ານຫິມະຈະມາໃນລະດູໜາວ, ເພາະວ່າບັນດາຄົນໃນຄົວເຮືອນຂອງນາງມີເສື້ອກັນໜາວແລ້ວ.
22 ນາງເຮັດຜ້າປູສຳລັບນາງເອງ, ເສື້ອຜ້າຂອງນາງເຮັດດ້ວຍຜ້າປ່ານເນື້ອລະອຽດ ແລະຜ້າສີມ່ວງ.
23 ຜົວຂອງນາງເປັນທີ່ຮູ້ຈັກທີ່ປະຕູເມືອງ, ເມື່ອທ່ານນັ່ງຢູ່ໃນໝູ່ພວກຜູ້ໃຫຍ່ຂອງແຜ່ນດິນນັ້ນ.
24 ນາງເຮັດເຄື່ອງແຕ່ງກາຍດ້ວຍຜ້າປ່ານເນື້ອລະອຽດໄວ້ຂາຍ, ນາງສົ່ງຜ້າຄາດແອວໃຫ້ແກ່ພໍ່ຄ້າ.
25 ນາງເປັນຍິງທີ່ແຂງແຮງ, ແລະກຽດຕິຍົດເປັນເຄື່ອງນຸ່ງຫົ່ມຂອງນາງ, ນາງຈະຊື່ນຊົມຍິນດີໃນອະນາຄົດ.
26 ນາງອ້າປາກກ່າວດ້ວຍສະຕິປັນຍາ, ແລະລີ້ນຂອງນາງມີຄຳສັ່ງສອນແຫ່ງຄວາມເມດຕາ.
27 ນາງເອົາໃຈໃສ່ເບິ່ງແຍງການງານໃນຄົວເຮືອນຂອງນາງ ນາງຫຍຸ້ງຢູ່ກັບວຽກສະເໝີ.
28 ລູກໆຂອງນາງຕື່ນຂຶ້ນມາ ກໍອວຍພອນນາງ, ຜົວຂອງນາງກໍສັນລະເສີນນາງ.
29 ວ່າ "ຜູ້ຍິງເປັນຈຳນວນຫຼາຍເຮັດຢ່າງດີເລີດ ແຕ່ນາງເລີດຍິ່ງກວ່າເຂົາທັງໝົດ"
30 ສະເໜ່ເປັນຂອງຫຼອກລວງ ແລະຄວາມງາມກໍບໍ່ແນ່ນອນ, ແຕ່ຜູ້ຍິງຢຳເກງພຣະຜູ້ເປັນເຈົ້າຈະໄດ້ຮັບການສັນລະເສີນ.
31 ຍ້ອນຜົນງານທັງປວງທີ່ນາງໄດ້ເຮັດມານັ້ນ ຈົ່ງໃຫ້ກຽດແກ່ນາງ, ແລະໃຫ້ການງານຂອງນາງສັນລະເສີນນາງທີ່ປະຕູເມືອງ.

